# ພຣະທັມ 1 ຂ່າວຄາວ


| | | | | | | | |
|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | | | |


## 1 ຂ່າວຄາວ

### 1 Chronicles

### 1 ເຊື້ອສາຍຂອງອາດາມ

From Adam to Abraham

(ປຖກ 5:1-32; ລກ 3:34-38)

1 ອາດາມ ເຊດ ເອໂນສ

2 ເກນານ ມາຫາລາເລນ ຢາເຣດ

3 ເອໂນກ ເມທູເຊລາ ລາເມກ

4 ໂນອາ ເຊມ ຮາມ ແລະຢາເຟດ

**ເຊື້ອສາຍຂອງລູກຊາຍໂນອາ**

(ປຖກ 10:1-32)

5 ຢາເຟດມີບຸດຊາຍຊື່ ໂກເມີ ມາກົກ ມາດັຍ ຢາວານ ຕູບານ ເມເຊກ ແລະຕີຣັສ

6 ໂກເມີມີບຸດຊາຍຊື່ ອັສເກນັຊ ດີຟາດ ແລະໂຕການມາ

7 ຢາວານມີບຸດຊາຍຊື່ ເອລີຊາ ຕາຣ໌ຊິດ ກິດຕີມ ແລະໂຣດານີມ

8 ຮາມມີບຸດຊາຍຊື່ ກູຊ ເອຢິບ ປູທ ການາອານ

9 ກູຊມີບຸດຊາຍຊື່ ເຊບາ ຮາວີລາ ຊັບຕາ ຣາອາມາ ແລະຊັບເຕກາ ຣາອາມາມີບຸດຊາຍຊື່ ເຊບາ ແລະເດດານ

10 ກູຊເປັນບິດາຂອງນິມໂຣດເປັນຄົນທຳອິດທີ່ເກັ່ງກ້າໃນແຜ່ນດິນໂລກ

11 ເອຢິບເປັນບິດາຂອງ ລູດິມ ອານາມິມ ເລຮາບິມ ເນັຟຕູຮິມ

12 ປັທຣູຊິມ ກັສລູຮິມ ເກັຟໂຕຣິມ ຊຶ່ງສືບເຊື້ອສາຍໃຫ້ຊາວຟີລິສຕິນ

13 ການາອານເປັນບິດາຂອງ ຊີໂດນຜູ້ເປັນບຸດຫົວປີ ແລະເຮທ

14 ແລະຊາວເຢບຸສ ຊາວອາໂມຣິດ ຊາວກີຣ໌ກາຊິດ

15 ຊາວຮີວີ ຊາວອາຣ໌ກິດ ແລະຊາວຊີນິດ

16 ຊາວອາກວາດິດ ຊາວເຊມາຣິດ ແລະຊາວຮາມາດ

17 ເຊມມີບຸດຊາຍຊື່ ເອລາມ ອັສຊູຣ໌ ອາກປັກສາດ ລູດ ອາຣາມ ອູຊ ຮູນ ເກເທີ ແລະເມເຊກ

18 ອາກປັກສາດເປັນບິດາຂອງເຊລາ ແລະເຊລາເປັນບິດາຂອງເອເບີ

19 ບຸດຊາຍສອງຄົນເກີດໃຫ້ແກ່ເອເບີ ຄົນນຶ່ງຊື່ ເປເລກ (ມີການແບ່ງແຜ່ນດິນໃນສະໄຫມຂອງເຂົາ) ແລະນ້ອງຊາຍຂອງເຂົາຊື່ ໂຢກທານ

20 ໂຢກທານເປັນບິດາຂອງອັນໂມດາດ ເຊເລັຟ ຮາຊາມາເວດ ແລະເຢຣາ

21 ຮາໂດຣາມ ອູຊານ ແລະດິກລາ

22 ໂອບານ ອາບີມາເອນ ເຊບາ

23 ໂອຟີ ຮາວີລາ ແລະໂຢບັບ ຄົນເຫລົ່ານີ້ເປັນບຸດຊາຍຂອງໂຢກທານ

**ເຊື້ອສາຍຂອງເຊມ**

(ປຖກ 11:10-26)

24 ເຊມ ອາກປັກສາດ ເຊລາ

25 ເອເບີ ເປເລກ ເຣອູ

26 ເຊຣຸກ ນາໂຮ ເຕຣາ

27 ອັບຣາມ ຄືອັບຣາຮາມ

**ເຊື້ອສາຍຂເອງອິສມາເອນແລະເຄທູຣາ**

28 ບຸດຊາຍຂອງອັບຣາຮາມຊື່ອີຊາກແລະອິສມາເອນ

29 ຕໍ່ໄປນີ້ແມ່ນເຊື້ອສາຍຂອງເພິ່ນ ບຸດຫົວປີຂອງອິສມາເອນຊື່ເນບາໂຢດ ແລະ ເຄດາ ອັດເບເອນ ມິບສັມ

30 ມິສມາ ດູມາ ມັສສາ ຮາດັດ ເທມາ

31 ເຢຕູຣ໌ ນາຟີສ ແລະເກເດມາ ພວກເຫລົ່ານີ້ເປັນບຸດຂອງອິຊມາເອນ

32 ບຸດຊາຍຂອງເກຕຸຣາພັຣຍານ້ອຍຂອງອັບຣາຮາມຄື ຊິມຣານ ໂຢກຊານ ເມດານ ມີດີອານ ອິສບາກ ແລະຊູອາ
ແລະໂຢກຊານມີບຸດຊາຍຊື່ ເຊບາ ແລະເດດານ

33 ມີດີອານມີບຸດຊາຍຊື່ ເອຟາ ເອເຟີ ຮາໂນກ ອາບີດາ ເອນດາອາ ທັງຫມົດເຫລົ່ານີ້ເປັນເຊື້ອສາຍຂອງເກຕຸຣາ

**ເຊື້ອສາຍຂອງເອຊາວ**

(ປຖກ 36:1-30)

34 ອັບຣາຮາມເປັນບິດາຂອງອີຊາກ ອີຊາກມີບຸດຊາຍຊື່ ເອຊາວ ແລະອິສຣາເອນ

35 ເອຊາວມີບຸດຊາຍຊື່ ເອລີຟັສ ຣູເອນ ເຢອູສ ຢາລາມ ແລະໂກຣາ

36 ເອລີຟັສມີບຸດຊາຍຊື່ ເຕມານ ໂອມາກ ເຊຟີ ກາຕາມ ເກນັສ ຕິມນາ ແລະອາມາເລກ

37 ຣູເອນມີບຸດຊາຍຊື່ ນາຮາດ ເຊຣາ ຊາມມາ ແລະມິສຊາ

38 ເຊອີຣ໌ມີບຸດຊາຍຊື່ ໂລຕານ ໂຊບານ ຊີເບໂອນ ອານາ ດີໂຊນ ເອເຊີ ແລະດີຊານ

39 ໂລຕານມີບຸດຊາຍຊື່ ໂຮຣີ ໂຮມາມ ແລະນ້ອງສາວຂອງໂລຕານຄື ຕິມນາ

40 ໂຊບານມີບຸດຊາຍຊື່ ເອລີອານ ມານາຮາດ ເອບານ ເຊຟີ ແລະໂອນາມ ຊີເບໂອນມີບຸດຊື່ ອັຍຢາ ແລະອານາ

41 ອານາມີບຸດຊາຍຊື່ ດີໂຊນ ດີໂຊນມີບຸດຊາຍຊື່ ຮາມຣານ ເອສບານ ອິທຣານ ເຄຣານ

42 ເອເຊີມີບຸດຊາຍຊື່ ບິນຮານ ຊາອາວານ ຢາອາການ ດີຊານມີບຸດຊາຍ ອູຊ ແລະອາຣານ

43 ຕໍ່ໄປນີ້ເປັນກະສັດຜູ້ຊົງປົກຄອງຢູ່ໃນແຜ່ນດິນເອໂດມ ກ່ອນທີ່ມີກະສັດປົກຄອງຢູ່ເຫນືອຊາວອິສຣາເອນຄື ເບ
ລາບຸດຊາຍຂອງເບໂອຣ໌ ເມືອງຂອງທ່ານຊື່ ດິນຮາບາ

44 ເມື່ອເບລາສິ້ນພຣະຊົນ ໂຢບັບບຸດຊາຍຂອງເຊຣາ ແຫ່ງເມືອງໂບສຣາໄດ້ຂຶ້ນປົກຄອງແທນທ່ານ

45 ເມື່ອໂຢບັບສິ້ນພຣະຊົນ ຮູຊາມແຫ່ງແຜ່ນດິນຂອງຊາວເຕມານກໍຂຶ້ນປົກຄອງແທນທ່ານ

46 ເມື່ອຮູຊາມສິ້ນພຣະຊົນ ຮາດາດບຸດຊາຍຂອງເບດາດຜູ້ຮົບຊະນະມີດີອານໃນດິນແດນໂມອາບໄດ້ຂຶ້ນ
ປົກຄອງແທນທ່ານ ແລະເມືອງຂອງທ່ານຊື່ ອາວິທ

47 ເມື່ອຮາດາດສິ້ນພຣະຊົນ ຊາມລາແຫ່ງເມືອງມັສເຣກາກໍຂຶ້ນປົກຄອງແທນທ່ານ

48 ເມື່ອຊາມລາສິ້ນພຣະຊົນ ຊາອູນແຫ່ງເມືອງເຣໂຮໂບທທີ່ແມ່ນ້ຳເອີຟຣາດໄດ້ຂຶ້ນປົກຄອງແທນທ່ານ

49 ເມື່ອຊາອູນສິ້ນພຣະຊົນ ບາອານຮານານບຸດຊາຍຂອງອັກໂບຣ໌ໄດ້ຂຶ້ນປົກຄອງແທນທ່ານ

50 ເມື່ອບາອານຮານານສິ້ນພຣະຊົນ ຮາດາດໄດ້ຂຶ້ນປົກຄອງແທນທ່ານ ແລະເມືອງຂອງທ່ານຊື່ປາອີ ແລະມະເຫ
ສີມີພຣະນາມວ່າ ເມເຮຕາເບນ ທິດາ ຂອງມາເຕຣດ ທິດາຂອງເມຊາຮັບ
51 ແລະຮາດາດສິ້ນພຣະຊົນ ເຈົ້ານາຍຂອງເອໂດມຄື ຕິມນາ ອາລີຢາ ເຢເທດ
52 ໂອໂຮລີບາມາ ເອລາ ປີໂນນ
53 ເກນັສ ເຕມານ ມິບຊາ
54 ມັກດີເອນ ອີຣາມ ພວກເຫລົ່ານີ້ເປັນເຈົ້ານາຍຂອງເອໂດມ

## 2 ບຸດຂອງອິສຣາເອນ

The sons of Israel and the Descendants of Judah

(ປຖກ 29:31-30:24; 35:16-18; 46:8-25; ຣູດ 4:18-22; ມທ1:2-6; ລູກາ 3)

1 ຕໍ່ໄປນີ້ເປັນບຸດຊາຍຂອງອິສຣາເອນຄື ຣູເບນ ຊີເມໂອນ ເລວີ ຢູດາ ອິສຊາຄາ ເຊບູລຸນ
2 ດານ ໂຢເຊັບ ເບັນຢາມິນ ເນັຟທາລີ ກາດ ແລະ ອາເຊີ

**ເຊື້ອສາຍຂອງຢູດາ**

3 ຢູດາມີບຸດຊາຍຊື່ ເອຣ໌ ໂອນານ ແລະເຊລາ ທັງສາມຄົນນີ້ ເກີດຈາກນາງບັທຊູອາຊາວການາອານມີໃຫ້ແກ່
ທ່ານ ເອຣ໌ບຸດຊາຍກົກຂອງຢູດານັ້ນຊົ່ວຮ້າຍໃນສາຍພຣະເນດຂອງພຣະເຈົ້າ ແລະພຣະອົງຊົງປະຫານເສັຽ
4 ທາມາບຸດສະໃພ້ຂອງທ່ານກໍເກີດບຸດຊາຍຊື່ ເປເຣສ ແລະເຊຣາໃຫ້ແກ່ທ່ານດ້ວຍ ຢູດາມີບຸດຊາຍທັງຫມົດຫ້າ
ຄົນດ້ວຍກັນ
5 ເປເຣສມີບຸດຊາຍຊື່ ເຮສໂຣນ ແລະຮາມູນ
6 ເຊຣາມີບຸດຊາຍຄື ຊິມຣີ ເອທານ ເຮມານ ກັນໂກນ ດາຣາ ທັງຫມົດຫ້າຄົນດ້ວຍກັນ
7 ກາຣ໌ມີມີບຸດຊາຍຊື່ ອາຄາ ຜູ້ນໍາຄວາມເດືອດຮ້ອນໃຫ້ແກ່ອິສຣາເອນ ຜູ້ລະເມີດໃນເຣື່ອງຂອງທີ່ຕ້ອງຫ້າມນັ້ນ
8 ແລະເອທານມີບຸດຊາຍຊື່ ອາຊາຣີຢາ
9 ບຸດເຮັສໂຣນຊຶ່ງເກີດແກ່ທ່ານນັ້ນຄື ເຢຣາເມເອນ ຣາມ ແລະເຄລູບັຍ
10 ຣາມເປັນບິດາຂອງອັມມີນາດາບ ແລະອັມມີນາດາບເປັນບິດາຂອງນາໂຊນ ເຈົ້ານາຍໃນບຸດຂອງຢູດາ
11 ນາໂຊນເປັນບິດາຂອງຊັນມາ ຊັນມາເປັນບິດາຂອງໂບອັສ
12 ໂບອັສເປັນບິດາຂອງໂອເບດ ໂອເບດເປັນບິດາຂອງເຈສຊີ
13 ເຈສຊີເປັນບິດາຂອງເອລີອາບບຸດຊາຍກົກຂອງທ່ານ ອາບີນາດາບທີສອງ ຊີເມອາທີສາມ
14 ນາທານເອນທີສີ່ ຣັດດັຍທີຫ້າ
15 ໂອເຊມທີຫົກ ເດວິດທີເຈັດ
16 ແລະເອື້ອຍຂອງເຂົາຄື ເຊຣູຢາ ແລະອາບີກາອີນ ນາງເຊຣູຢາມີບຸດຊາຍຊື່ ອາບີຊັຍ ໂຢອາບ ແລະອາຊາເຮນ
ມີສາມຄົນດ້ວຍກັນ
17 ອາບີກາອີນໄດ້ເກີດ ອາມາສາ ແລະບິດາຂອງອາມາສາຊື່ ເຢເທີ ເປັນຊາວອິສຣາເອນ
18 ກາເລັບບຸດຊາຍຂອງເຮສໂຣນມີບຸດກັບນາງອາຊູບາພັຣຍາຂອງຕົນ ແລະນາງເຢຣີໂອດ ຕໍ່ໄປນີ້ເປັນບຸດຂອງ
ນາງຄື ເຢເຊີ ໂຊບັບ ແລະອາຣ໌ໂດນ
19 ເມື່ອອາຊຸບາສິ້ນຊີວິດ ກາເລັບກໍແຕ່ງງານກັບເອຟຣາດມີບຸດຊາຍຊື່ ຮູຣ໌ ໃຫ້ແກ່ທ່ານ
20 ຮູຣ໌ເປັນບິດາຂອງອູຣີ ແລະອູຣີເປັນບິດາຂອງເບຊາເລັນ

21 ພາຍຫລັງເຮັສໂຣນໄດ້ເຂົ້າຫາທິດາຂອງມາຄີຣ໌ບິດາຂອງກີເລອາດ ແລະໄດ້ແຕ່ງງານນຳ ເມື່ອທ່ານມີອາຍຸຫົກສິບປີ ແລະນາງກໍມີບຸດຊາຍໃຫ້ທ່ານຊື່ ເຊກຸບ

22 ແລະເຊກຸບເປັນບິດາຂອງຢາອີຣ໌ ຜູ້ມີຫົວເມືອງຊາວສາມຫົວເມືອງໃນແຜ່ນດິນກີເລອາດ

23 ແຕ່ຈາກຫົວເມືອງເຫລົ່ານັ້ນ ເກຊູຣ໌ ແລະອາຣາມໄດ້ຍຶດຫົວເມືອງຮາວໂວດຢາອີຣ໌ ແລະຫົວເມືອງເກນາດ ແລະບັນດາຊົນນະບົດຂອງຫົວເມືອງຫົກສິບຊົນນະບົດດ້ວຍກັນ ທັງຫມົດເຫລົ່ານີ້ເປັນເຊື້ອສາຍຂອງມາຄີຣ໌ບິດາຂອງກີເລອາດ

24 ພາຍຫລັງເຮັສໂຣນສິ້ນຊີວິດໃນກາເລັບເອຟຣາທາ ແລ້ວອາບີຢາພັຣຍາຂອງເຮສໂຣນກໍມີ ອັສຮູຣ໌ໃຫ້ແກ່ເຂົາເປັນບິດາຂອງເຕໂກອາ

25 ບຸດເຢຣາເມເອນ ບຸດຊາຍກົກຂອງເຮສໂຣນຄື ຣາມ ບຸດຊາຍກົກຂອງທ່ານ ບູນາ ໂອເຣນ ໂອເຊມ ແລະອາຮີຢາ

26 ເຢຣາເມເອນມີພັຣຍາອີກຄົນນຶ່ງຊື່ ອາຕາຣາ ນາງເປັນມານດາຂອງໂອນາມ

27 ບຸດຊາຍຂອງຣາມ ບຸດຊາຍກົກຂອງເຢຣາເມເອນຊື່ ມາອັສ ຢາມິນ ແລະເອເກີ

28 ບຸດຊາຍຂອງໂອນາມຊື່ ຊາມມັຍ ແລະຢາດາ ບຸດຊາຍຂອງຊັມມັຍຊື່ ນາດາບ ແລະອາບີຊູຣ໌

29 ພັຣຍາຂອງອາບີຊູຣ໌ຊື່ ອາບີຮາອິນ ແລະນາງມີ ອາບານ ແລະໂມລິດໃຫ້ທ່ານ

30 ນາດາບມີບຸດຊາຍຊື່ ເຊເລດ ແລະອັປປາອິມ ແລະເຊເລດໄດ້ສິ້ນຊີວິດ ບໍ່ມີບຸດ

31 ອັປປາອິມມີບຸດຊາຍຊື່ ອິສອີ ອິສອີມີບຸດຊາຍຊື່ ເຊຊານ ເຊຊານມີບຸດຊາຍຊື່ ອາລັຍ

32 ບຸດຊາຍຂອງຢາດາ ນ້ອງຊາຍຂອງຊັມມັຍຊື່ ເຢເທີ ແລະໂຢນາທານ ແລະເຢເທີໄດ້ສິ້ນຊີວິດ ບໍ່ມີບຸດ

33 ໂຢນາທານມີບຸດຊາຍຊື່ ເປເລທ ແລະຊາຊາ ຄົນເຫລົ່ານີ້ເປັນເຊື້ອສາຍຂອງເຢຣາເມເອນ

34 ຝ່າຍເຊຊານບໍ່ມີບຸດຊາຍມີແຕ່ບຸດຍິງ ແຕ່ເຊຊານມີທາດຊາວເອຢິບຢູ່ຄົນນຶ່ງຊື່ ຢາຣາ

35 ເຊຊານຈຶ່ງຍົກບຸດຍິງຂອງຕົນໃຫ້ເປັນພັຣຍາຂອງຂອງຢາຣາ ທາດຂອງຕົນ ແລະນາງກໍມີບຸດໃຫ້ເຂົາຊື່ ອັດຕັຍ

36 ອັດຕັຍເປັນບິດາຂອງນາທານ ແລະນາທານເປັນບິດາຂອງຊາບັດ

37 ຊາບັດເປັນບິດາຂອງເອັຟລານ ແລະເອັຟລານເປັນບິດາຂອງໂອເບດ

38 ໂອເບດເປັນບິດາຂອງເຢຮູ ແລະເຢຮູເປັນບິດາຂອງອາຊາຣິຢາ

39 ອາຊາຣິຢາເປັນບິດາຂອງເຮເລສ ແລະເຮເລສເປັນບິດາຂອງເອເລອາຊາ

40 ເອເລອາຊາເປັນບິດາຂອງຊິສມັຍ ແລະຊິສມັຍເປັນບິດາຂອງ ຊານລູມ

41 ຊານລູມເປັນບິດາຂອງເຢກາມີຢາ ແລະເຢກາມີຢາເປັນບິດາຂອງເອລີຊາມາ

42 ບຸດຂອງກາເລັບນ້ອງຊາຍຂອງເຢຣາເມເອນຊື່ ເມຊາ ບຸດຊາຍກົກຂອງທ່ານເປັນບິດາຂອງຊີບ ເມເຣຊາມີບຸດຊາຍຄື ເຮ ໂບຣນ

43 ເຮໂບຣນມີບຸດຊາຍຊື່ ໂກຣາ ຕັບປູອາ ເຣເກມ ແລະເຊມາ

44 ເຊມາເປັນບິດາຂອງຣາຣາມ ຜູ້ເປັນບິດາຂອງໂຢຣ໌ເກອາມ ແລະເຣເຄມ ເປັນບິດາຂອງຊັມມັຍ

45 ຊັມມັຍມີບຸດຊາຍຄື ມາໂອນ ແລະມາໂອນເປັນບິດາຂອງເບັທຊູຣ໌

46 ເອຟາ ພັຣຍານ້ອຍຂອງກາເລັບມີຮາຣານ ໂມຊາ ກາເຊສ ແລະຮາຣານເປັນບິດາຂອງກາເຊສ

47 ຢາດັຍມີບຸດຊາຍຊື່ ເຣເກມ ໂຢທາມ ເກຊານ ເປເລດ ເອຟາ ແລະຊາອາບ

48 ມາອາກາ ພັຣຍານ້ອຍຂອງກາເລັບມີ ເຊເບີ ແລະຕີຣ໌ຮານາ

49 ນາງໄດ້ມີ ຊາອາບບິດາຂອງມັດມານນາ ເຊວາບິດາຂອງມັກເບນາ ແລະບິດາຂອງກິເບອາດ້ວຍ ບຸດຍິງຂອງກາເລັບຊື່ ອັກສາ

50 ຄົນເຫລົ່ານີ້ເປັນເຊື້ອສາຍຂອງກາເລັບ ບຸດຂອງຮູຣ໌ ບຸດຊາຍຫົວປີຂອງເອບຣາທາຊື່ ໂຊບານ ບິດາຂອງກີຣີ
ອາດເຢອາຣິມ
51 ຊັນມາບິດາຂອງ ເບັດເລເຮັມ ແລະຮາເຣັບບິດາຂອງເບັດກາເດີ
52 ໂຊບານບິດາຂອງກີຣີອາດເຢອາຣິມມີບຸດອີກຊື່ ຮາໂຣເອ ເຄິ່ງນຶ່ງຂອງຕະກູນເມນູໂຮທ
53 ແລະຕະກູນຂອງກີຣີອາດເຢອາຣິມຄື ຕະກູນອິທຣິດ ຕະກູນປູທິດ ຕະກູນຊູມາທິດ ແລະຕະກູນມິສຣາທິດ
ຈາກຄົນເຫລົ່ານີ້ບັງເກີດຊາວໂຊຣາ ແລະເອັສຕາໂອລິດ
54 ຊັນມາມີບຸດຊາຍຄື ເບັດເລເຮັມ ຊາວເນໂຕບ ອັດໂຣດເບັດໂຢອາບ ແລະເຄິ່ງນຶ່ງຂອງຕະກູນມານາຮາທິດ ຜູ້
ເປັນຊາວໂຊຣິດ
55 ທັງຕະກູນຕ່າງໆຂອງຜູ້ຊ່ຽວຊານທາງການຂຽນ ແລະລອກເອກກະສານ ທີ່ອາໄສຢູ່ຕາມເມືອງຢາເບສຄື ຕະ
ກູນຕີຣາທິດ ຊີເມອາທິດ ແລະຕະກູນຊູກາທິດ ເຫລົ່ານີ້ເປັນຄົນເກນິດຜູ້ມາຈາກຮາມມັດ ບິດາຂອງເຊື້ອສາຍ
ເຣຄັບ

## 3 ເຊື້ອສາຍຂອງດາວິດ ແລະຊາໂລໂມນ

Descendants of David and Solomon

(2 ຊມອ 3:2-5; 5:13-16; 1 ຂຄວ 14:3-7 ; ມທ 1:6-12)

1 ຕໍ່ໄປນີ້ແມ່ນບຸດຊາຍຂອງດາວິດທີ່ເກີດໃຫ້ແກ່ພຣະອົງໃນກຸງເຮໂບຣນ ອັມໂນນ ບຸດຊາຍກົກ ເກີດຈາກນາງອາ
ຮີໂນອາມ ຊາວເຢສເຣເອລິດ ທີສອງຄື ດານີເອນ ເກີດຈາກນາງອາບີກາອີນ ຊາວກາເມລິດ
2 ທີສາມຄື ອັບຊາໂລມ ບຸດຊາຍຂອງນາງມາອາກາ ຣາຊທິດາຂອງຕັນມັຍ ພຣະຣາຊາຂອງເມືອງເກຊູຣ໌ ທີສີ່ຄື
ອາໂດນີຢາ ບຸດຊາຍຂອງນາງຮັກກີທ
3 ທີຫ້າຄື ເຊຟາຕີຢາ ເກີດຈາກນາງອາບີຕັນ ທີຫົກຄື ອິທເຣອາມ ເກີດຈາກນາງເອກລາ
4 ທັງຫົກເກີດໃຫ້ແກ່ພຣະອົງໃນກຸງເຮໂບຣນ ທີ່ນັ້ນພຣະອົງຊົງປົກຄອງເຈັດປີກັບຫົກເດືອນ ແລະພຣະອົງຊົງປົກ
ຄອງໃນກຸງເຢຣູຊາເລັມສາມສິບສາມປີ
5 ຕໍ່ໄປນີ້ແມ່ນບຸດຊາຍທີ່ເກີດໃຫ້ແກ່ພຣະອົງໃນກຸງເຢຣູຊາເລັມຄື ຊີເມອາ ໂຊບັບ ນາທານ ແລະໂຊໂລໂມນ
ທັງສີ່ເກີດຈາກນາງບັທຊູອາ ບຸດຕຣີຂອງອັມມີເອນ
6 ແລ້ວກໍມີ ອິບຮັກ ເອລີຊາມາ ເອລີເຟເລທ
7 ໂນກາ ເນເຟກ ຢາຟີອາ
8 ເອລີຊາມາ ເອລີອາດາ ແລະເອລີເຟເລທ ເກົ້າອົງດ້ວຍກັນ
9 ທັງຫມົດນີ້ເປັນບຸດຊາຍຂອງດາວິດ ນອກເຫນືອຈາກບຸດຊາຍຂອງນາງສນົມ ແລະຕາມາເປັນນ້ອງສາວຂອງ
ພວກເຂົາ

**ເຊື້ອສາຍຂອງໂຊໂລໂມນ**

10 ໂຊໂລໂມນມີບຸດຊາຍຄື ເຣໂຮໂບອາມ ເຣໂຮໂບອາມມີບຸດຊາຍຄື ອາບີຢາ ອາບີຢາມີບຸດຊາຍຄື ອາຊາ ອາ
ຊາມີບຸດຊາຍຄື ເຢໂຮຊາຟັດ
11 ເຢໂຮຊາຟັດມີບຸດຊາຍຄື ໂຢຣາມ ໂຢຣາມມີບຸດຊາຍຄື ອາຮາຊີຢາມີບຸດຊາຍຄືໂຢອັສ
12 ໂຢອັສມີບຸດຊາຍຄື ອາມາຊີຢາ ອາມາຊີຢາມີບຸດຊາຍຄືໂຢທາມ
13 ໂຢທາມມີບຸດຊາຍຄື ອາຮັສ ອາຮັສມີບຸດຊາຍຄື ເຮເຊກີຢາ ເຮເຊກີຢາມີບຸດຊາຍຄື ມານັສເຊ
14 ມານັສເຊມີບຸດຊາຍຄື ອາໂມນ ອາໂມນມີບຸດຊາຍຄື ໂຢຊີຢາ
15 ໂຢຊີຢາມີບຸດຊາຍຄື ໂຢຮານານ ບຸດຊາຍກົກ ທີສອງຄື ເຢຮົວອາກິມ ທີສາມຄື ເຊເດກີຢາ ທີສີ່ຄື ຊັນລູມ

16 ເຢຣີວອາກິມມີບຸດຊາຍຄື ເຢໂກນີຢາ ເຢໂກນີຢາມີບຸດຊາຍຄື ເຊເດກີຢາ
17 ແລະບຸດຊາຍຂອງເຢໂກນີຢາ ຊະເລີຍນັ້ນຊື່ ເຊອັນຕີເອນບຸດຊາຍຂອງພຣະອົງ
18 ມັນຄີຣາມ ເປດັຍຢາ ເຊນັສຊາ ເຢການີຢາ ໂຮຊາມາ ເນດາບີຢາ
19 ແລະເປດັຍຢາມີບຸດຊາຍຄື ເຊຣຸບບາເບນ ແລະຊີເມອີ ແລະເຊຣຸບບາເບນມີບຸດຊາຍຄື ເມຊຸນລາມ ຮານານີ
ຢາ ແລະນ້ອງສາວຂອງເຂົາຊື່ ເຊໂລມິທ
20 ຮາຊຸບາ ໂອເຮນ ເບເຣຄີຢາ ຮາຊາດີຢາ ແລະຢູສັບເຮເສດ ທັງໝົດຫ້າຄົນດ້ວຍກັນ
21 ຮານານີຢາມີບຸດຊາຍຄື ປາລາຕີຢາ ເຢຊັຍຢາ ລູກຫລານຂອງເຣຟັຍຢາ ລູກຫລານຂອງອາກນານ ລູກຫລານ
ຂອງໂອບາດີຢາ ລູກຫລານຂອງເຊການີຢາ
22 ເຊການີຢາມີບຸດຊາຍຄື ເຊມັຍຢາ ແລະເຊມັຍຢາມີບຸດຊາຍຄື ຮັດຕູສ ອີການ ບາຣີຢາ ເນອາຣີຢາ ຊາຟາດ
ທັງໝົດຫົກຄົນດ້ວຍກັນ
23 ເນອາຣີຢາມີບຸດຊາຍຊື່ ເອລີໂອເອນັຍ ຮີສກີຢາ ແລະອັສຣີຄາມ ທັງໝົດສາມຄົນດ້ວຍກັນ
24 ເອລີໂອເອນັຍມີບຸດຊາຍຄື ໂຮດາວີຢາ ເອລີອາຊິບ ເປລັຍຢາ ອັກຄຸບ ໂຢຮານານ ເດລັຍຢາ ແລະອານານີ ທັງ
ໝົດມີເຈັດຄົນດ້ວຍກັນ

## 4 ເຊື້ອສາຍຂອງຢູດາ

Descendants of Judah

1 ຢູດາມີບຸດຊາຍຄື ເປເຣສ ເຮັສໂຣນ ກາຣ໌ມີ ຮູຣ໌ ແລະໂຊບັນ
2 ເຣອັຍຢາບຸດຂອງໂຊບັນເປັນບິດາຂອງ ຢາຮາດ ແລະຢາຮາດເປັນບິດາຂອງອາຮູມັຍ ແລະລາຮາດ ເຫລົ່ານີ້
ເປັນຕະກູນຂອງຊາວໂຊຣາດ
3 ຕໍ່ໄປນີ້ເປັນບິດາບຸດຂອງເອທາມຄື ເຢສ ເຣເອນ ອິສມາ ແລະອິດບັສ ແລະນ້ອງສາວຂອງເຂົາຊື່ ຮັສເຊເລນ
ໂປນີ
4 ແລະເປນູເອນຜູ້ເປັນບິດາຂອງ ເກໂດຣ໌ ແລະເອເຊີ ຜູ້ເປັນບິດາຂອງຮູຊາ ເຫລົ່ານີ້ເປັນບຸດຂອງຮູຣ໌ ບຸດຊາຍ
ກົກຂອງເອຟຣາທາຜູ້ເປັນບິດາຂອງເບັດເລເຮັມ
5 ອັສຮູຣ໌ບິດາຂອງເຕໂກອາ ມີພັຣຍາສອງຄົນຄື ນາງເຮລາ ແລະນາງນາອາຣາ
6 ນາງນາອາຣາເກີດ ອາຮູສຊາມ ເຮເຟີ ເຕເມນີ ແລະຮາອາຮັສຕາຣີໃຫ້ແກ່ເຂົາ ເຫລົ່ານີ້ເປັນບຸດຂອງນາງນາອາ
ຣາ
7 ບຸດຂອງນາງເຮລາຄື ເຊເຣທ ອິສຮາ ເອດນານ
8 ໂກສເປັນບິດາຂອງ ອານູບ ໂຊເບບາ ແລະບັນດາຕະກູນຂອງອາຮາຣ໌ເຮນບຸດຊາຍຂອງຮາຣູມ
9 ຝ່າຍຢາເບສເປັນຜູ້ມີກຽດກວ່າພີ່ນ້ອງທັງຫລາຍຂອງເຂົາ ມານດາຂອງເຂົາເອີ້ນຊື່ເຂົາວ່າ ຢາເບສ ກ່າວວ່າ,
“ເພາະເຮົາຄອດເຂົາດ້ວຍຄວາມເຈັບປວດ”
10 ຢາເບສທູນພຣະເຈົ້າຂອງອິສຣາເອນວ່າ, “ຂໍພຣະອົງຊົງອວຍພຣະພອນແກ່ຂ້າພຣະອົງ ແລະຂຍາຍເຂດແດນ
ຂອງຂ້າພຣະອົງ ແລະຂໍພຣະຫັດຂອງພຣະອົງຢູ່ກັບຂ້າພຣະອົງ ແລະຂໍພຣະອົງຊົງຮັກສາຂ້າພຣະອົງໃຫ້ພົ້ນ
ຈາກເຫດຮ້າຍ ເພື່ອບໍ່ໃຫ້ຂ້າພຣະອົງເຈັບໃຈປວດກາຍ” ແລະພຣະເຈົ້າຊົງໃຫ້ສິ່ງທີ່ເຂົາທູນຂໍ
11 ເຄລູບ ອ້າຍຂອງຊູຮາ ເປັນບິດາຂອງເມຮີຣ໌ຜູ້ເປັນບິດາຂອງເອັສໂຕນ
12 ເອັສໂຕນເປັນບິດາຂອງເບັດຣາຟາ ປາເຊອາ ເຕຮິນນາຜູ້ເປັນບິດາຂອງອີຣ໌ນາຮັສ ເຫລົ່ານີ້ເປັນຄົນຂອງເຣກາ
13 ເກນັສມີບຸດຊາຍຄື ໂອດທານີ ເສຣັຍຢາ ແລະໂອດນີເອນມີບຸດຊາຍຄື ຮາທັດ ແລະເມໂອໂນທັຍ

14 ເມໂອໂນທັຍເປັນບິດາຂອງໂອຟຣາ  ແລະເຊຣັຍຢາເປັນບິດາຂອງໂຢອັບ ຜູ້ເປັນບິດາຂອງເກຣາຣາຊິມ ເພາະ
ເຂົາເປັນຊ່າງສີມື
15 ບຸດກາເລັບຜູ້ເປັນບຸດຊາຍຂອງເຢຟຸນເນຄື ອີຣູ ເອລາ ແລະນາອາມ ແລະເອລາມີບຸດຊາຍຄື ເກນັສ
16 ເຢຮັນເລເລນມີບຸດຊາຍຄື  ຊີຟ ຊີຟາ ຕີຣີອາ ແລະອາຊາເຣນ
17 ເອັສຣາມີບຸດຊາຍຄື ເຢເທີ ເມເຣດ ເອເຟີ ແລະຢາໂລນ ເຫລົ່ານີ້ເປັນບຸດຊາຍຂອງນາງບີທີຢາ ທິດາຂອງຟາ
ຣາໂອຜູ້ຊຶ່ງເມເຣັດໄດ້ແຕ່ງງານດ້ວຍ ແລະນາງໄດ້ມີບຸດຄື ມີຣີອາມ ຊຳມັຍ ແລະອິສບາ ບິດາຂອງເອັສເຕໂມ
ອາ
18 ແລະພັຣຍາຊາວຢູດາຂອງທ່ານເກີດ ເຢເຣດບິດາຂອງເກໂດຣ໌ ເຮເບີບິດາຂອງໂຊໂກ ແລະເຢກູທີເອນບິດາ
ຂອງຊາໂນອາ
19 ບຸດຊາຍພັຣຍາຂອງໂຮດີຢາ ນ້ອງສາວຂອງນາຮາມເປັນບິດາຂອງເກອີລາ ຜູ້ເປັນຕະກູນກາຣ໌ມີດ ແລະເອັສ
ເຕໂມອາຜູ້ເປັນຕະກູນມາອາກາທີດ
20 ຊີໂມນມີບຸດຊາຍຄື  ອັມໂນນ ຣິນນາ ເບນຮານານ ແລະຕີໂລນ ອິສອີມີບຸດຊາຍຄື ໂຊເຮທ ແລະເບນໂຊເຮທ
21 ບຸດຂອງເຊລາຜູ້ເປັນບຸດຂອງຢູດາຄື ເອຣ໌ ບິດາຂອງເລກາ ລາອາດາບິດາຂອງມາເຣຊາ ແລະບັນດາຕະກູນ
ຂອງຜູ້ທຳຜ້າປ່ານແຫ່ງເບັດອັສເບອາ
22 ແລະໂຢກິມ ແລະຄົນເມືອງໂກເຊບາ ແລະໂຢອັສ ແລະຊາຣັຟຜູ້ປົກຄອງໃນເມືອງໂມອາບ ແລະກັບມາຍັງ
ເມືອງເລເຮັມ (ເປັນເຣື່ອງແຕ່ບູຮານນະການ)
23 ຄົນເຫລົ່ານີ້ເປັນຊ່າງຫມໍ້ ເປັນຊາວເມືອງເນຕາອິມ ແລະເກເດຣາ ທີ່ນັ້ນເຂົາອາສັຍຢູ່ກັບພຣະຣາຊາຣັບຣາຊ
ການ

**ເຊື້ອສາຍຂອງຊີເມໂອນ**

Descendants of Simeon

(ປຖກ 46:10)

24 ຊີເມໂອນມີບຸດຊາຍຊື່ ເນມູເອນ ຢາມິນ ຢາຣິບ ເຊຣາ ແລະຊາອູນ
25 ຊາອູນມີບຸດຊາຍຊື່ ຊານລູມ ຊານລູມມີບຸດຊາຍຄື ມິບຊາມ ມິບຊາມມີບຸດຊາຍຊື່ ມິສມາ
26 ມິສມາມີບຸດຊາຍຄື ຮາມມູເອນ ຮາມມູເອນມີບຸດຊາຍຄື ຊັກກູຣ໌ ຊັກກູຣ໌ມີບຸດຊາຍຊື່ ຊີເມອີ
27 ຊີເມອີມີບຸດຊາຍສິບຫົກຄົນ ແລະບຸດຍິງຫົກຄົນ ແຕ່ພີ່ນ້ອງຂອງຊີເມອີບໍ່ມີລູກຫລາຍ ຕະກູນຂອງເຂົາກໍບໍ່ທະວີ
ຫລາຍຂຶ້ນຢ່າງກັບຊາວເຜົ່າຢູດາ
28 ເຂົາທັງຫລາຍອາສັຍຢູ່ໃນເມືອງເບເອີເຊບາ ໂມລາດາ ຮາຊາກຊູອັນ
29 ແລະທີ່ບິນຮາ ເອເຊມ ໂຕລາດ
30 ເບທູເອນ ໂຮມາ ຊິກລັກ
31 ເບັທມາຣ໌ກາໂບດ ຮາຊາຣ໌ຊູຊິມ ເບັດບີຣີ ແລະຊາອາຣາອິມ ເຫລົ່ານີ້ເປັນຫົວເມືອງຂອງເຂົາ ຈົນເຖິງດາວິດ
ຂຶ້ນປົກຄອງ
32 ແລະຊົນນະບົດຂອງເຂົາທັງຫລາຍຄືເອທາມ ອາອິນ ຣິມໂມນ ໂຕເຄນ ແລະອາຊານ ຫ້າຫົວເມືອງ
33 ຮວມຢູ່ກັບຊົນນະບົດຂອງເຂົາຊຶ່ງຢູ່ຮອບຫົວເມືອງເຫລົ່ານີ້ໄກໄປຈົນເຖິງເມືອງບາອານ ເຫລົ່ານີ້ເປັນພູມລຳເນົ
າຂອງເຂົາ ແລະເຂົາມີສຳມະໂນຄົວເຊື້ອສາຍ
34  ເມໂຊບັບ ຢາມເລກ ໂຢຊາ ອາມາຊີຢາ
35 ໂຢເອນ ເຢຮູບຸດຊາຍໂຢຊີບີຢາ ຜູ້ເປັນບຸດຂອງເຊຣັຍຢາ ຜູ້ເປັນບຸດຂອງອາຊີເອນ
36 ເອລີໂອເອນັຍ ຢາອາໂກບາ ເຢໂຊຮັຍຢາ ອາຊັຍຢາ ອາດີເອນ ເຢຊີມີເອນ ເບນັຍຢາ

37 ຊີຊາບຸດຊາຍຂອງຊີພີ ຜູ້ເປັນບຸດຂອງອັນໂລນ ຜູ້ເປັນບຸດຂອງເຢດັຍຢາ ຜູ້ເປັນບຸດຂອງຊິມຣີ ຜູ້ເປັນບຸດເຊມັຍ
ຢາ

38 ທ່ານທີ່ກ່າວຊື່ມານີ້ເປັນເຈົ້ານາຍໃນຕະກູນຂອງທ່ານ ແລະຄອບຄົວຂອງເຂົາທັງຫລາຍກໍເພີ່ມຂຶ້ນມາກມາຍ

39 ເຂົາທັງຫລາຍໄດ້ເດີນທາງໄປເຖິງທາງເຂົ້າເມືອງທີ່ເກໂດຣ໌ ເຖິງຂ້າງທິດຕາເວັນອອກຂອງທີ່ລຸ່ມ ເພື່ອຫາທີ່ງ
ຫຍ້າໃຫ້ຝູງແບ້ແກະຂອງເຂົາ

40 ເຂົາທັງຫລາຍກໍພົບທົ່ງຫຍ້າອັນອຸດົມດີ ແລະແຜ່ນດິນນັ້ນກໍກວ້າງຂວາງງຽບແລະສງົບສັນຕິ ເພາະຊາວເມືອງ
ທີ່ຢູ່ກ່ອນນັ້ນເປັນເຜົ່າເຊື້ອສາຍຂອງຮາມ

41 ແລ້ວຄົນເຫລົ່ານີ້ຊຶ່ງມີຊື່ໃນສໍາມະໂນຄົວໄດ້ເຂົ້າມາໃນສມັຍຂອງເຮເຊກີຢາພຣະຣາຊາແຫ່ງຢູດາ ແລະໂຈມຕີ
ເຕັນຂອງເຂົາ ແລະພວກເມອູນິມທີ່ພົບຢູ່ທີ່ນັ້ນ ແລະກວາດລ້າງເຂົາເສັຽຈົນເຖິງທຸກວັນນີ້ ແລ້ວກໍຕັ້ງພູມລໍາເນົາ
ຢູ່ໃນທີ່ຂອງເຂົາ ເພາະທີ່ນັ້ນມີທົ່ງຫຍ້າໃຫ້ຝູງແບ້ແກະຂອງເຂົາ

42 ສ່ວນນຶ່ງຂອງເຂົາເຫລົ່ານັ້ນຄືສ່ວນຄົນຊີເມໂອນິດຫ້າຮ້ອຍຄົນພາກັນໄປທີ່ເຂົາເຊອີຣ໌ ມີຫົວໜ້າຊື່ເປລາຕີຢາ
ເນອາຣີຢາ ເຣຟັຍຢາ ແລະອຸສຊີເອນ ບຸດຊາຍທັງຫລາຍຂອງອິສອີ

43 ແລະເຂົາໄດ້ໂຈມຕີຄົນອາມາເລກສ່ວນທີ່ເຫລືອຢູ່ຊຶ່ງຫນີລອດໄປ ແລ້ວເຂົາທັງຫລາຍກໍອາສັຍຢູ່ທີ່ນັ້ນຈົນ
ທຸກວັນນີ້

## 5 ເຊື້ອສາຍຂອງຣູເບນ

Descendants of Reuben

(ປຖກ 46:8-9)

1 ບຸດຣູເບນ ບຸດຊາຍກົກຂອງອິສຣາເອນ (ເຂົາເປັນບຸດຊາຍກົກກໍຈິງ ແຕ່ເພາະເຂົາໄດ້ກະທໍາໃຫ້ທີ່ນອນຂອງບິ
ດາຂອງເຂົາມີມົນທິນ ສິດທິບຸດຫົວປີຂອງເຂົາຈຶ່ງຕົກຢູ່ກັບບຸດໂຢເຊັບຜູ້ເປັນບຸດອິສຣາເອນ ແຕ່ໂຢເຊັບບໍ່ໄດ້
ຂຶ້ນທະບຽນໄວ້ໃນສໍາມະໂນຄົວເຊື້ອສາຍຕາມສິດທິບຸດຫົວປີ

2 ເຖິງແມ່ນວ່າຢູດາມີກໍາລັງຫລາຍໃນພວກພີ່ນ້ອງຂອງຕົນ ແລະເຈົ້ານາຍອົງນຶ່ງກໍມາຈາກເຂົາ ແຕ່ສິດທິບຸດຫົວ
ປີກໍຍັງເປັນຂອງໂຢເຊັບ)

3 ບຸດຣູເບນ ບຸດຊາຍກົກຂອງອິສຣາເອນຄື ຮາໂນກ ປັນລູ ເຮສໂຣນ ແລະກາຣ໌ມີ

4 ໂຢເອນມີບຸດຊາຍຄື ເຊມັຍຢາ ເຊມັຍຢາມີບຸດຊາຍຄື ໂກກ ໂກກມີບຸດຊາຍຄື ຊີເມອີ

5 ຊີເມອີມີບຸດຊາຍຄື ມີກາ ມີກາມີບຸດຊາຍຄື ເຣອັຍຢາ ເຣອັຍຢາມີບຸດຊາຍຄື ບາອານ

6 ບາອານມີບຸດຊາຍຄື ເບເອຣາ ຜູ້ຊຶ່ງທີນກາດປີນເນເຊີ ກະສັດເມືອງອັສຊີເຣັຽໄດ້ກວາດໄປເປັນຊະເລີຍ ທ່ານ
ເປັນເຈົ້ານາຍຂອງຄົນຣູເບນ

7 ແລະຍາດຂອງທ່ານຕາມຕະກູນເມື່ອຂຶ້ນທະບຽນສໍາມະໂນຄົວເຊື້ອສາຍໄວ້ນັ້ນຄື ເຢອີເອນ ແລະເຊຄາຣີຢາ

8 ແລະເບລາບຸດຂອງອາຊັສ ບຸດເຊມາ ບຸດໂຢເອນ ຜູ້ອາສັຍຢູ່ໃນອາໂຣເອີ ໄກໄປເຖິງເມືອງເນໂບ ແລະບາອານ
ເມໂອນ

9 ທ່ານອາສັຍຢູ່ທາງທິດຕາເວັນອອກໄກອອກໄປເຖິງທາງເຂົ້າຖິ່ນກັນດານ ຊຶ່ງຢູ່ຟາກຂ້າງນີ້ຂອງແມ່ນໍ້າເອີຟຣາດ
ດ້ວຍ ເພາະສັດລ້ຽງຂອງເຂົາທະວີຫລາຍຂຶ້ນໃນແຜ່ນດິນກີເລອາດ

10 ໃນຣັຊການຂອງຊາອູນເຂົາທັງຫລາຍທໍາສົງຄາມກັບຄົນຮັກຣິດຜູ້ຕ້ອງລົ້ມຕາຍດ້ວຍມືຂອງເຂົາ ເຂົາທັງຫລາຍ
ອາສັຍຢູ່ໃນເຕັນຂອງເຂົາຕລອດແຖບຕະເວັນອອກຂອງກີເລອາດ

**ເຊື້ອສາຍຂອງກາດ**

Descendants of Gad

11 ລູກຫລານຂອງກາດ ອາສັຍຢູ່ທາງພາກເຫນືອຂອງເຜົ່າຣູເບນໃນແຜ່ນດິນຂອງບາຊານໄປຈົນເຖິງເມືອງຊາເລ
ກາ
12 ໂຢເອນເປັນຫົວຫນ້າ ຊາຟາມເປັນທີສອງ ຢານັຍ ແລະຊາຟັດໃນບາຊານ
13 ແລະວົງຍາດຂອງເຂົາຕາມຕະກູນຂອງເຂົາຄື ມີຄາເອນ ເມຊູນລາມ ເຊບາ ໂຢຣັຍ ຢາການ ຊີອາ ແລະເອເບີ
ທັງຫມົດເຈັດຄົນດ້ວຍກັນ
14 ຄົນເຫລົ່ານີ້ເປັນບຸດຂອງອາບີຮາອີນ ຜູ້ເປັນບຸດຮູຣີ ຜູ້ເປັນບຸດຢາໂຣອາ ຜູ້ເປັນບຸດກິເລອາດ ຜູ້ເປັນບຸດມີຄາ
ເອນ ຜູ້ເປັນບຸດເຢຊີຊັຍ ຜູ້ເປັນບຸດຢາໂດ ຜູ້ເປັນບຸດບູສ
15 ອາຮີເປັນບຸດອັບດີເອນ ຜູ້ເປັນບຸດກູນີ ເປັນຫົວຫນ້າໃນຕະກູນຂອງເຂົາ
16 ແລະເຂົາທັງຫລາຍອາສັຍຢູ່ໃນກິເລອາດ ໃນບາຊານ ແລະຕາມຫົວເມືອງ ແລະໃນເຂດທົ່ງຫຍ້າທັງຫມົດຂອງ
ຊາໂຣນຈົນສຸດເຂດ
17 ຄົນເຫລົ່ານີ້ທັງຫມົດຂຶ້ນທະບຽນສຳມະໂນຄົວເຊື້ອສາຍໄວ້ໃນຣັຊການຂອງໂຢທາມກະສັດແຫ່ງຢູດາ ແລະໃນ
ຣັຊການຂອງເຢໂຣໂບອາມກະສັດແຫ່ງອິສຣາເອນ
18 ຄົນຣູເບນ ຄົນກາດ ແລະຄົນເຜົ່າມານັສເຊເຄິ່ງນຶ່ງມີຄົນເກັ່ງກ້າ ຜູ້ຖືໂລ້ ແລະດາບ ແລະໂກ່ງທະນູ ຊຳນານໃນ
ການເສິກສີ່ຫມື່ນສີ່ພັນເຈັດຮ້ອຍຫົກສິບຄົນ ພ້ອມທີ່ຈະເຂົ້າຮົບ
19 ເຂົາທຳເສິກກັບຊາວຮັກຣີດ ເຢຕູຣ໌ ນາຟີສ ແລະໂນດາບ
20 ແລະເມື່ອເຂົາໄດ້ຮັບຄວາມຊ່ອຍເຫລືອ ຄົນຮັກຣີດ ແລະພວກທີ່ຢູ່ດ້ວຍກໍຖືກມອບໄວ້ໃນມືຂອງເຂົາ ເພາະ
ເຂົາຮ້ອງທູນຕໍ່ ພຣະເຈົ້າໃນການສົງຄາມ ແລະພຣະອົງຊົງໄດ້ຕອບຕາມຄຳທູນຂອງເຂົາ ເພາະເຂົາທັງ
ຫລາຍວາງໃຈໃນພຣະອົງ
21 ເຂົາໄດ້ກວາດເອົາຝູງສັດຂອງຂ້າເສິກໄປ ຄືອູດຫ້າຫມື່ນໂຕ ແກະສອງແສນຫ້າຫມື່ນໂຕ ລາສອງພັນ ແລະຄົນ
ນຶ່ງແສນ
22 ເພາະເຂົາໄດ້ຕາຍຢ່າງຫລວງຫລາຍ ດ້ວຍການເສິກຄັ້ງນັ້ນເປັນມາຈາກພຣະເຈົ້າ ແລະເຂົາທັງຫລາຍອາສັຍຢູ່
ໃນທີ່ຂອງເຂົາຈົນຖືກກວາດໄປເປັນຊະເລີຍ

**ຄົນສອງເຜົ່າເຄິ່ງຂອງມານັສເຊ**

The Half-tribe of Manasseh

23 ຄົນເຜົ່າມານັສເຊເຄິ່ງນຶ່ງອາສັຍຢູ່ໃນແຜ່ນດິນນັ້ນ ເຂົາມີຫລາຍດ້ວຍກັນຕັ້ງແຕ່ເມືອງບາຊານເຖິງເມືອງບາ
ອານເຮີໂມນ ເຊນີຣ໌ ແລະພູເຂົາເຮີໂມນ
24 ຕໍ່ໄປນີ້ແມ່ນຫົວຫນ້າຂອງຕະກູນຂອງເຂົາຄື ເອເຟີ ອິສອີ ເອລີເອນ ອັສຣີເອນ ເຢເຣມີຢາ ໂຮດາວີຢາ ແລະຢາ
ດີເອນ ເປັນທະຫານທີ່ເກັ່ງກ້າ ຄົນມີຊື່ສຽງເປັນຫົວຫນ້າຕະກູນຂອງເຂົາ
25 ແຕ່ເຂົາທັງຫລາຍລະເມີດຕໍ່ພຣະເຈົ້າແຫ່ງບັນພະບຸຣຸດຂອງເຂົາ ແລະໄດ້ໄປຂາບໄຫວ້ກັບບັນດາພຣະຂອງຊົນ
ຊາດທັງຫລາຍແຫ່ງແຜ່ນດິນນັ້ນ ຜູ້ຊຶ່ງພຣະເຈົ້າຊົງທຳລາຍເສັຽຕໍ່ຫນ້າເຂົາທັງຫລາຍ
26 ເພາະສະນັ້ນ ພຣະເຈົ້າແຫ່ງອິສຣາເອນຈຶ່ງຊົງບັນດານຈິດໃຈຂອງ ປູນ ກະສັດແຫ່ງອັສຊີເຣັຽ ແລະຈິດໃຈຂອງ
ທີນກາດປີນເນເຊີ ກະສັດແຫ່ງອັສຊີເຣັຽ ແລະພຣະອົງຊົງກວາດເຂົາໄປເສັຽຄື ຄົນຣູເບນ ຄົນກາດ ແລະຄົນເຜົ່
ົາມານັສເຊເຄິ່ງນຶ່ງ ແລະພາເຂົາທັງຫລາຍມາຍັງຮາລາ ຮາໂບຣ໌ ຮາຣາ ແລະແມ່ນ້ຳເມືອງໂກຊານຈົນ
ເຖິງທຸກວັນນີ້

# 6 ເຊື້ອສາຍຂອງເລວີ

Descendants of Levi

(ປຖກ 46:11)

1 ເລວີມີບຸດຊາຍຄື ເກີໂຊມ ໂກຮາດ ແລະມາຣາຣີ

2 ໂກຮາດມີບຸດຊາຍຊື່ ອັມຣາມ ອິສຮາ ເຮໂບຣນ ແລະອຸສຊີເອນ

3 ອັມຣາມມີບຸດຊາຍຄື ອາໂຣນ ໂມເຊ ແລະນາງມີຣີອາມ ອາໂຣນມີບຸດຊາຍຄື ນາດາບ ອາບີຮູ ເອເລອາຊາ ແລະອີທາມາ

4 ເອເລອາຊາເປັນບິດາຂອງຟີເນຮັສ ຟີເນຮັສເປັນບິດາຂອງອາບີຊູອາ

5 ອາບີຊູອາເປັນບິດາຂອງບຸກຄີ ບຸກຄີເປັນບິດາຂອງອຸສຊີ

6 ອຸສຊີເປັນບິດາຂອງເຊຣາຮີຢາ ເຊຣາຮີຢາເປັນບິດາຂອງເມຣາໂຢດ

7 ເມຣາໂຢດເປັນບິດາຂອງອາມາຣີຢາ ອາມາຣີຢາເປັນບິດາຂອງອາຮີທູບ

8 ອາຮີທູບເປັນບິດາຂອງຊາໂດກ ຊາໂດກເປັນບິດາຂອງອາຮີມາອັສ

9 ອາຮີມາອັສເປັນບິດາຂອງອາຊາຣີຢາ ອາຊາຣີຢາເປັນບິດາຂອງໂຢຮານານ

10 ແລະໂຢຮານານເປັນບິດາຂອງອາຊາຣີຢາ (ທ່ານນີ້ແຫລະທີ່ທຳໜ້າທີ່ປະໂຣຫິດຢູ່ໃນພຣະວິຫານ ຊຶ່ງໂຊໂລໂມນຊົງສ້າງໃນເຢຣູຊາເລັມ)

11 ອາຊາຣີຢາເປັນບິດາຂອງອາມາຣີຢາ ອາມາຣີຢາເປັນບິດາຂອງອາຮີທູບ

12 ອາຮີທູບເປັນບິດາຂອງຊາໂດກ ຊາໂດກເປັນບິດາຂອງຊັນລູມ

13 ຊັນລູມເປັນບິດາຂອງຮິນຄີຢາ ຮິນຄີຢາເປັນບິດາຂອງອາຊາຣີຢາ

14 ອາຊາຣີຢາເປັນບິດາຂອງ ເຊຣັຍຢາ ເຊຣັຍຢາເປັນບິດາຂອງເຢໂຮຊາດັກ

15 ແລະເຢໂຮຊາດັກຖືກກວາດໄປເປັນຊະເລີຍ ເມື່ອພຣະເຈົ້າໄດ້ຊົງໃຫ້ຢູດາ ແລະເຢຣູຊາເລັມເຂົ້າສູ່ການຖືກກວາດໄປເປັນຊະເລີຍດ້ວຍຫັດຂອງເນບູຄາດເນສຊາກ

16 ເລວີມີບຸດຊາຍຄື ເກີໂຊມ ໂກຮາດ ແລະເມຣາຣີ

17 ຕໍ່ໄປນີ້ເປັນຊື່ບຸດຂອງເກີໂຊມ ຄື ລິບນີ ແລະຊີເມອີ

18 ໂກຮາດມີບຸດຊາຍຊື່ ອັມຣາມ ອິສຮາ ເຮໂບຣນ ແລະອຸສຊີເອນ

19 ເມຣາຣີມີບຸດຊາຍຄື ມາລີ ແລະມູຊີ ເຫລົ່ານີ້ເປັນຕະກູນຂອງຄົນເລວີຕາມເຊື້ອສາຍບິດາຂອງເຂົາ

20 ບຸດຂອງເກີໂຊມ ຄື ລິບນີ ລິບນີມີບຸດຊາຍຄື ຢາຮາດ ຢາຮາດມີບຸດຊາຍຄື ຊິມມາ

21 ຊິມມາມີບຸດຊາຍຄື ໂຢອາ ໂຢອາມີບຸດຊາຍຄື ອິດໂດ ອິດໂດມີບຸດຊາຍຄື ເຊຣາ ເຊຣາມີບຸດຊາຍຄື ເຢອາເທຣັຍ

22 ໂກຮາດມີບຸດຊາຍຄື ອັມມີນາດາບ ອັມມີນາດາບມີບຸດຊາຍຄື ໂກຣາ ໂກຣາມີບຸດຊາຍຄື ອັສຊີຣ໌

23 ອັສຊີຣ໌ມີບຸດຊາຍຄື ເອນການາ ເອນການາມີບຸດຊາຍຄື ເອບີຢາສາບ ເອບີຢາສາບມີບຸດຊາຍຄື ອັສຊີຣ໌

24 ອັສຊີຣ໌ມີບຸດຊາຍຄື ຕາຮາດ ຕາຮາດມີບຸດຊາຍຄື ອູຣີເອນ ອູຣີເອນມີບຸດຊາຍຄື ອຸສຊີຢາ ອຸສຊີຢາມີບຸດຊາຍຄື ຊາອູນ

25 ເອນການາມີບຸດຊາຍຄື ອາມາຊັຍ ແລະອາຮີໂມທ

26 ເອນການາມີບຸດຊາຍຄື ໂຊຟັຍ ໂຊຟັຍມີບຸດຊາຍຄື ນາຮາດ

27 ນາຮາດມີບຸດຊາຍຄື ເອລີອາບ ເອລີອາບມີບຸດຊາຍຄື ເຢໂຣຮາມ ເຢໂຣຮາມມີບຸດຊາຍຄື ເອນການາ

28 ຊາມູເອນມີບຸດຊາຍຄື ໂຢເອນບຸດຊາຍຫົວປີ ຄົນທີສອງຄື ອາບີຢາ

29 ເມຣາຣີມີບຸດຊາຍຄື ມາລີ ມາລີມີບຸດຊາຍຄື ລິບນີ ລິບນີມີບຸດຊາຍຄື ຊີເມອາ ຊີເມອາມີບຸດຊາຍ ອຸສຊາ

30 ອຸສຊາມີບຸດຊາຍຄື ຊີເມອາ ຊີເມອາມີບຸດຊາຍຄື ຮັກກີຢາ ຮັກກີຢາມີບຸດຊາຍຄື ອາຊັຍຢາ

**ດາວິດຊົງແຕ່ງຕັ້ງນັກຮ້ອງປະຈຳພຣະວິຫານ**

Musicians Appointed by David

31 ເຫລົ່ານີ້ເປັນບຸກຄົນທີ່ດາວິດຊົງແຕ່ງຕັ້ງໃຫ້ດູແລການຮ້ອງເພງໃນພຣະວິຫານຂອງພຣະເຈົ້າ ຫລັງຈາກທີ່ຫີບ
ຄຳສັນຍາມາຕັ້ງຢູ່ທີ່ນັ້ນແລ້ວ

32 ເຂົາທັງຫລາຍທຳການບົວລະບັດດ້ວຍເພງ ຂ້າງໜ້າຫໍເຕັນນັດພົບ ຈົນໂຊໂລໂມນໄດ້ຊົງສ້າງພຣະວິຫານ
ຂອງພຣະເຈົ້າໃນເຢຣູຊາເລັມ ແລະເຂົາໄດ້ປະຕິບັດໜ້າທີ່ຂອງເຂົາຕາມຕຳແໜ່ງ

33 ຕໍ່ໄປນີ້ເປັນບຸກຄົນທີ່ປະຕິບັດງານຢູ່ພ້ອມກັບບຸດຂອງເຂົາ ພວກບຸດຄົນໂກຮາດຄື ເຮມານນັກຮ້ອງຜູ້ເປັນບຸດ
ໂຢເອນ ຜູ້ເປັນບຸດຂອງຊາມູເອນ

34 ຜູ້ເປັນບຸດເອນການາ ຜູ້ເປັນບຸດເຢໂຣຮາມ ຜູ້ເປັນບຸດເອລີເອນ ຜູ້ເປັນບຸດໂຕອາ

35 ຜູ້ເປັນບຸດຊູບ ຜູ້ເປັນບຸດເອນການາ ຜູ້ເປັນບຸດມາຮັທ ຜູ້ເປັນບຸດອາມາຊັຍ

36 ຜູ້ເປັນບຸດເອນການາ ຜູ້ເປັນບຸດໂຢເອນ ຜູ້ເປັນບຸດອາຊາຣິຢາ ຜູ້ເປັນບຸດເຊຟັນຢາ

37 ຜູ້ເປັນບຸດຕາຮາດ ຜູ້ເປັນບຸດອັສຊີຣ໌ ຜູ້ເປັນບຸດເອບີອາສາຟ ຜູ້ເປັນບຸດໂກຣາ

38 ຜູ້ເປັນບຸດອິສຮາ ຜູ້ເປັນບຸດໂກຮາດ ຜູ້ເປັນບຸດເລວີ ຜູ້ເປັນບຸດອິສຣາເອນ

39 ກັບອາສາຟພີ່ນ້ອງຂອງເຂົາ ຜູ້ຊຶ່ງຢືນຢູ່ຂ້າງຂວາມືຂອງເຂົາຄື ອາສາບບຸດເບເຣຄີຢາ ຜູ້ເປັນບຸດຊີເມອີ

40 ຜູ້ເປັນບຸດມີກາເອນ ຜູ້ເປັນບຸດບາອາເຊຢາ ຜູ້ເປັນບຸດມັນຄີຢາ

41 ຜູ້ເປັນບຸດເອທນີ ຜູ້ເປັນບຸດເຊຣາ ຜູ້ເປັນບຸດອາດັຍຢາ

42 ຜູ້ເປັນບຸດເອທານ ຜູ້ເປັນບຸດຊິມມາ ຜູ້ເປັນບຸດຊີເມອີ

43 ຜູ້ເປັນບຸດຢາຮາດ ຜູ້ເປັນບຸດເກີໂຊມ ຜູ້ເປັນບຸດເລວີ

44 ທີ່ຂ້າງຊ້າຍມືມີບຸດຂອງເມຣາຣີ ພີ່ນ້ອງຂອງເຂົາຄື ເອທານຜູ້ເປັນບຸດກີຊີ ຜູ້ເປັນບຸດອັບດີ ຜູ້ເປັນບຸດມັນລຸກ

45 ຜູ້ເປັນບຸດຮາຊາບີຢາ ຜູ້ເປັນບຸດອາມາຊີຢາ ຜູ້ເປັນບຸດຮີນກີຢາ

46 ຜູ້ເປັນບຸດອັມຊີ ຜູ້ເປັນບຸດບານີ ຜູ້ເປັນບຸດເຊເມີ

47 ຜູ້ເປັນບຸດມາລີ ຜູ້ເປັນບຸດມູຊີ ຜູ້ເປັນບຸດເມຣາຣີ ຜູ້ເປັນບຸດເລວີ

48 ແລະຄົນເລວີພີ່ນ້ອງຂອງເຂົາໄດ້ຮັບແຕ່ງຕັ້ງໃຫ້ປະຕິບັດງານທຸກຢ່າງທີ່ຫໍເຕັນຂອງພຣະວິຫານຂອງພຣະເຈົ້າ

**ເຊື້ອສາຍຂອງອາໂຣນ**

Descendants of Aaron

49 ແຕ່ອາໂຣນກັບບຸດຊາຍຂອງທ່ານຖວາຍເຄື່ອງບູຊາເທິງແທ່ນເຄື່ອງເຜົາບູຊາ ແລະເທິງແທ່ນເຄື່ອງຫອມ ແລະ
ປະຕິບັດງານໃນບ່ອນສັກສິດທີ່ສຸດ ແລະກະທຳການລ້າງມົນທິນບາບຂອງອິສຣາເອນຕາມຢ່າງທີ່ໂມເຊຜູ້ຮັບ
ໃຊ້ຂອງພຣະເຈົ້າໄດ້ບັນຊາໄວ້

50 ຕໍ່ໄປນີ້ເປັນບຸດອາໂຣນຄື ເອເລອາຊາ ເອເລອາຊາມີບຸດຊາຍຄື ພີເນຮັສ ພີເນຮັສມີບຸດຊາຍຄື ອາບີຊູອາ

51 ອາບີຊູອາມີບຸດຊາຍຄື ບຸກຄີ ບຸກຄີມີບຸດຊາຍຄື ອຸສຊີ ອຸສຊີມີບຸດຊາຍຄື ເຊຣາຮີຢາ

52 ເຊຣາຮີຢາມີບຸດຊາຍຄື ເມຣາໂຢດ ເມຣາໂຢດມີບຸດຊາຍຄື ອາມາຣີຢາ ອາມາຣີຢາມີບຸດຊາຍຄື ອາຮີທູບ

53 ອາຮີທູບມີບຸດຊາຍຄື ຊາໂດກ ຊາໂດກມີບຸດຊາຍຄື ອາຮີມາອັສ

**ຫົວເມືອງຂອງຄົນເລວີ**

Settlements of the Levites

(ຢຊຍ 21:1-42)

54 ຕໍ່ໄປນີ້ເປັນທີ່ອາສັຍຂອງເຂົາຕາມພູມລຳເນົາໃນເຂດແດນຂອງເຂົາຄື ເຊື້ອສາຍຂອງອາໂຣນຕະກູນຄົນໂກ
ຮາດ (ເພາະ ສລາກຕົກເປັນຂອງເຂົາກ່ອນ)
55 ເຂົາໄດ້ຮັບເມືອງເຮໂບຣນໃນແຜ່ນດິນຢູດາ ແລະທົ່ງຫຍ້າຊຶ່ງຢູ່ລ້ອມຮອບນັ້ນ
56 ແຕ່ທົ່ງນາ ແລະຕາມຊົນນະບົດຂອງເມືອງນັ້ນ ເຂົາຍົກໃຫ້ແກ່ກາເລັບບຸດເຢຟຸນເນ
57 ເຂົາໃຫ້ເມືອງລີ້ພັຍແກ່ເຊື້ອສາຍຂອງອາໂຣນຄື ເມືອງເຮໂບຣນ ເມືອງລິບນາກັບທົ່ງຫຍ້າ ເມືອງຢັດທີຣ໌ ເມືອງ
ເອສເຕໂມອາກັບທົ່ງຫຍ້າ
58 ຮີເລນພ້ອມກັບທົ່ງຫຍ້າ ເດບີຣ໌ພ້ອມກັບທົ່ງຫຍ້າ
59 ອາຊານພ້ອມກັບທົ່ງຫຍ້າ ແລະເບັດເຊເມສພ້ອມກັບທົ່ງຫຍ້າ
60 ແລະຈາກດິນແດນເຜົ່າເບັນຢາມິນກໍມອບເມືອງເກບາພ້ອມກັບທົ່ງຫຍ້າ ອາເລເມທພ້ອມກັບທົ່ງຫຍ້າ ແລະອາ
ນາໂທດພ້ອມກັບທົ່ງຫຍ້າພ້ອມກັບທົ່ງຫຍ້າ ຫົວເມືອງທັງຫມົດຂອງເຂົາທຸກຕະກູນເປັນສິບສາມຫົວເມືອງ
ດ້ວຍກັນ
61 ສ່ວນຄົນໂກຮາດທີ່ເຫລືອຢູ່ນັ້ນໄດ້ຮັບສ່ວນມອບໂດຍສລາກທີ່ໄດ້ຈາກຕະກູນຂອງເຜົ່າ ຈາກເຜົ່າມານັສເຊເຄິ່ງ
ນຶ່ງມີສິບຫົວເມືອງ
62 ຕະກູນເກີໂຊມແຕ່ລະຄອບຄົວໄດ້ຮັບມອບສິບສາມຫົວເມືອງຈາກເຜົ່າອິສຊາຄາ ເຜົ່າອາເຊີ ເຜົ່ານັບທາລີ
ແລະຈາກເຜົ່າມານັສເຊໃນບາຊານ
63 ຕະກູນເມຣາຣີໄດ້ຮັບມອບສິບສອງຫົວເມືອງຈາກເຜົ່າຣູເບນ ເຜົ່າກາດ ແລະເຜົ່າເຊບູລູນ
64 ດັ່ງນີ້ແຫລະປະຊາຊົນອິສຣາເອນໄດ້ມອບຫົວເມືອງພ້ອມກັບທົ່ງຫຍ້າໃຫ້ແກ່ຄົນເລວີ
65 ແລະຄົນອິສຣາເອນໄດ້ຈັບສລາກໃຫ້ຫົວເມືອງຈາກເຜົ່າຢູດາ ເຜົ່າຊີເມໂອນ ແລະເຜົ່າເບັນຢາມິນ ຕາມທີ່
ກ່າວຊື່ໄວ້ນັ້ນດ້ວຍ
66 ແລະຕະກູນຄົນໂກຮາດບາງຕະກູນມີຫົວເມືອງອັນເປັນດິນແດນຂອງເຂົາຈາກເຜົ່າເອຟຣາອິມ
67 ຄົນອິສຣາເອນໄດ້ໃຫ້ຫົວເມືອງລີ້ພັຍຄື ເມືອງເຊເຄມພ້ອມກັບທົ່ງຫຍ້າໃນຖິ່ນພູເຂົາເອຟຣາອິມ ເມືອງເກເຊີ
ພ້ອມກັບທົ່ງຫຍ້າ
68 ເມືອງໂຢກເມອາມພ້ອມກັບທົ່ງຫຍ້າ ເມືອງເບັດໂຮໂຣນພ້ອມກັບທົ່ງຫຍ້າ
69 ເມືອງອັຍຢາໂລນພ້ອມກັບທົ່ງຫຍ້າ ເມືອງກາດຣິມໂມນພ້ອມກັບທົ່ງຫຍ້າ
70 ແລະມອບເມືອງຈາກເຜົ່າມານັສເຊເຄິ່ງນຶ່ງຄື ເມືອງອາເນີພ້ອມກັບທົ່ງຫຍ້າ ເມືອງບີເລອາມພ້ອມກັບທົ່ງຫຍ້າ
ໃຫ້ແກ່ຕະກູນຄົນໂກຮາດທີ່ເຫລືອຢູ່
71 ດິນແດນຂອງມານັສເຊເຄິ່ງເຜົ່າທີ່ມອບໃຫ້ແກ່ຄົນເກີໂຊມຄື ໂກລານໃນເມືອງບາຊານພ້ອມກັບທົ່ງຫຍ້າ ແລະ
ອັສຕາໂຣທພ້ອມກັບທົ່ງຫຍ້າ
72 ແລະຈາກເຜົ່າອິສຊາຄາຄື ເມືອງເກເດສພ້ອມກັບທົ່ງຫຍ້າ ເມືອງດາເບຣາດພ້ອມກັບທົ່ງຫຍ້າ
73 ແລະຣາໂມທພ້ອມກັບທົ່ງຫຍ້າ ແລະອາເນມພ້ອມກັບທົ່ງຫຍ້າ
74 ຈາກເຜົ່າອາເຊີຄື ມາຊັນພ້ອມກັບທົ່ງຫຍ້າ ອັບໂດນພ້ອມກັບທົ່ງຫຍ້າ
75 ຮູໂກກພ້ອມກັບທົ່ງຫຍ້າ ແລະເຣໂຮບພ້ອມທັງທົ່ງຫຍ້າ
76 ແລະຈາກເຜົ່ານັຟທາລີຄື ເກເດສໃນຄາລີເລພ້ອມກັບທົ່ງຫຍ້າ ຮັມໂມນພ້ອມກັບທົ່ງຫຍ້າ ກີຣີອາທາອິມ
ພ້ອມກັບທົ່ງຫຍ້າ
77 ສ່ວນຄົນເມຣາຣີທີ່ເຫລືອຢູ່ນັ້ນໄດ້ຮັບຈາກເຜົ່າເຊບູລູນຄື ຣິມໂມໂນພ້ອມກັບທົ່ງຫຍ້າ ຕາໂບຣ໌ພ້ອມກັບທົ່ງ
ຫຍ້າ

78 ແລະຟາກແມ່ນໍ້າຈໍແດນຂ້າງຂອງເຢຣິໂກ ຄືຟາກຕະເວັນອອກຂອງແມ່ນໍ້າຈໍແດນນັ້ນ ຈາກເຜົ່າຣູເບນ ຄືເບເຊີ
ໃນຖິ່ນກັນດານພ້ອມກັບທົ່ງຫຍ້າ ຢາຊາພ້ອມກັບທົ່ງຫຍ້າ
79 ເກເດໂມທພ້ອມກັບທົ່ງຫຍ້າ ແລະເມຟາອາດພ້ອມກັບທົ່ງຫຍ້າ
80 ແລະຈາກເຜົ່າກາດຄື ຣາໂມທໃນກິເລອາດພ້ອມກັບທົ່ງຫຍ້າ ມາຮານາອິມພ້ອມກັບທົ່ງຫຍ້າ
81 ເຮສໂບຣນພ້ອມກັບທົ່ງຫຍ້າ ແລະຢາເຊີພ້ອມກັບທົ່ງຫຍ້າ

## 7 ເຊື້ອສາຍຂອງອິສຊາຄາ

Descendants of Issachar

(ປະຖົມມະການ 46:13)

1 ອິສຊາຄາມີບຸດຄື ໂຕລາ ປູອາ ເຢຊູບ ແລະຊິມໂຣນ ທັງຫມົດສີ່ຄົນດ້ວຍກັນ
2 ໂຕລາມີບຸດຄື ອູສຊີ ເຣຟັຍຢາ ເຢຣີເອນ ຢາມັຍ ອິບຊາມ ແລະເຊມູເອນ ຫົວຫນ້າຕະກູນຂອງເຂົາ ຄືຂອງໂຕ
ລາ ເປັນທະຫານທີ່ເກັ່ງກ້າຂອງຊາດເຊື້ອຂອງເຂົາ ແລະຈຳນວນຂອງຄົນເຫລົ່ານີ້ໃນຣັຊສມັຍຂອງດາວິດເປັນ
ສອງຫມື່ນສອງພັນຫົກຮ້ອຍຄົນ
3 ອຸສຊີມີບຸດຄື ອິສຣາຮີຢາ ແລະຊີສຣາຮີຢາມີບຸດຊາຍຄື ມີຄາເອນ ໂອບາດີຢາ ໂຢເອນ ແລະອິສຊີຢາ ຫ້າຄົນ
ດ້ວຍກັນ ທັງຫມົດເປັນຫົວຫນ້າ
4 ແລະພ້ອມກັບຄົນເຫລົ່ານີ້ເຊື້ອສາຍຂອງເຂົາ ຕາມຕະກູນຂອງເຂົາ ມີຫນ່ວຍທະຫານເສິກສາມຫມື່ນຫົກພັນ
ຄົນ ເພາະເຂົາມີພັຣຍາແລະບຸດຫລາຍ
5 ຍາດພີ່ນ້ອງຂອງເຂົາຊຶ່ງເປັນຄົນໃນບັນດາຕະກູນຂອງອິສຊາຄາ ມີທັງຫມົດດ້ວຍກັນທີ່ເປັນທະຫານເກັ່ງກ້າ
ແປດຫມື່ນເຈັດພັນຄົນ ຂຶ້ນທະບຽນໄວ້ໃນສຳມະໂນຄົວເຊື້ອສາຍ

### ເຊື້ອສາຍຂອງເບັນຢາມິນ

Descendants of Benjamin

(ປຖກ 46:21)

6 ເບັນຢາມິນມີບຸດຄື ເບລາ ເບເຄີ ແລະເຢດີອາເອນ ທັງຫມົດສາມຄົນດ້ວຍກັນ
7 ເບລາມີບຸດຄື ເອສໂບນ ອຸສຊີ ອຸສຊີເອນ ເຢຣີໂມທ ແລະອີຣີ ທັງຫມົດຫ້າຄົນດ້ວຍກັນ ເປັນຫົວຫນ້າຂອງຕະ
ກູນ ເປັນທະຫານທີ່ເກັ່ງກ້າທີ່ມີຊື່ສຽງ ແລະຈຳນວນທີ່ຂຶ້ນທະບຽນໄວ້ໃນສຳມະໂນຄົວເຊື້ອສາຍຂອງເຂົາ ສອງ
ຫມື່ນສອງພັນສາມສິບສີ່ຄົນ
8 ເບເຄີມີບຸດຄື ເຊມີຣາ ໂຢອັສ ເອລີເອເຊີ ເອລີໂອເອນັຍ ໂອມຣີ ເຢຣີໂມທ ອາບີຢາ ອານາໂທດ ແລະ ອາເລ
ເມທ ທັງຫມົດນີ້ເປັນບຸດເບເຄີ
9 ແລະຈຳນວນທີ່ຂຶ້ນທະບຽນໄວ້ໃນສຳມະໂນຄົວເຊື້ອສາຍ ຕາມຊາດພັນເປັນຫົວຫນ້າຕະກູນຂອງເຂົາ ເປັນທະ
ຫານທີ່ເກັ່ງກ້າ ສອງຫມື່ນສອງຮ້ອຍຄົນ
10 ເຢດີອາເອນມີບຸດຄື ບິນຮານ ແລະບິນຮານມີບຸດຄື ເຢອູສ ເບັນຢາມິນ ເອຮູດ ເຄນາອານາ ເຊທານ ຕາຣ໌ຊິດ
ແລະອາຮີຊາຮາກ
11 ທັງຫມົດນີ້ເປັນບຸດເຢດີອາເອນຕາມຫົວຫນ້າຕະກູນຂອງເຂົາ ເປັນທະຫານເກັ່ງກ້າທີ່ມີຊື່ສຽງ ນຶ່ງຫມື່ນເຈັດພັນ
ສອງຮ້ອຍຄົນ ພ້ອມທີ່ຈະຮັບຣາຊການສົງຄາມ
12 ແລະຊຸບປິມ ແລະຮຸບປິມເປັນບຸດຂອງອີຣ໌ ຮູຊິມບຸດຂອງອາເຮີ

**ເຊື້ອສາຍຂອງເນັຟທາລີ**

Descendants of Naphtali

(ປຖກ 46:24)

13 ເນັຟທາລີມີບຸດຊາຍຄື ຢາຊີເອນ ກູນີ ເຢເຊີ ແລະຊັນລູມ ເຊື້ອສາຍຂອງນາງບີນຮາ

**ເຊື້ອສາຍຂອງມານັສເຊ**

Descendants of Manasseh

14 ມານັສເຊມີບຸດຊາຍຄື ອັສຣີເອນ ຊຶ່ງພັຣຍານ້ອຍຊາວອາຣາເມອານ ນາງໄດ້ມີ ມາຄີບິດາຂອງກີເລອາດ

15 ມາຄີກໍຮັບພັຣຍາຈາກຮຸບປີມ ແລະຊຸບປີມ ເອື້ອຍຂອງເຂົາຊື່ ນາງມາອາກາ ແລະຄົນທີສອງຊື່ ເຊໂລເຟຮັດ
ແລະເຊໂລເຟຮັດມີບຸດຍິງ

16 ແລະມາອາກາພັຣຍາມາຄີມີບຸດຊາຍຄົນນຶ່ງ ນາງເອີ້ນເຂົາວ່າ ເປເຣສ ແລະນ້ອງຊາຍຂອງເຂົາຊື່ ເຊເຣສ ແລະ
ບຸດຂອງເຂົາຄື ອູລາມ ແລະເຣເຄມ

17 ອູລາມມີບຸດຊາຍຄື ເບດານ ເຫລົ່ານີ້ເປັນບຸດກີເລອາດ ຜູ້ເປັນບຸດມາຄີ ຜູ້ເປັນບຸດມານັສເຊ

18 ແລະຮັມໂມເລເຄທນ້ອງສາວຂອງເຂົາມີ ອີສໂຮດ ອາບີເອເຊີ ແລະມາລາ

19 ເຊມີດາມີບຸດຊາຍຄື ອາຮີອານ ເຊເຄມ ລີກຮີ ແລະອານີອາມ

**ເຊື້ອສາຍຂອງເອຟຣາອິມ**

Descendants of Ephraim

20 ເອຟຣາອິມມີບຸດຊາຍຄື ຊູເທລາ ແລະຊູເທລາມີບຸດຊາຍຄື ເບເຣດ ເບເຣດມີບຸດຊາຍຄື ຕາຮາດ ຕາຮາດມີບຸດ
ຊາຍຄື ເອເລອາດາ ເອເລອາດາມີບຸດຊາຍຄື ຕາຮາດ

21 ຕາຮາດມີບຸດຊາຍຄື ຊາບັດ ຊາບັດມີບຸດຊາຍຄື ຊູເທລາ ເອເຊີ ແລະເອເລອັດ ຊຶ່ງຄົນຂອງກາດຜູ້ທີ່ເກີດໃນ
ເມືອງນັ້ນໄດ້ຂ້າເສັຽ ເພາະເຂົາທັງຫລາຍລົງມາປຸ້ນສັດລ້ຽງຂອງເຂົາ

22 ແລະເອຟຣາອິມບິດາຂອງເຂົາໄວ້ທຸກໂສກເສົ້າເປັນຫລາຍວັນ ແລະພີ່ນ້ອງຂອງເຂົາກໍມາເລົ້າໂລມເຂົາ

23 ແລະເອຟຣາອິມກໍເຂົ້າໄປຫາພັຣຍາ ແລະນາງກໍຕັ້ງທ້ອງມີບຸດຊາຍຄົນນຶ່ງ ນາງເອີ້ນເຂົາວ່າ ເບຣີຢາ ເພາະເຫ
ດການຊົ່ວຮ້າຍຕົກຢູ່ກັບເຮືອນຂອງເຂົາ

24 ບຸດຍິງຂອງເຂົາຊື່ ນາງເຊເອຣາ ຜູ້ຊຶ່ງສ້າງເມືອງເບັດໂຮໂຣນ ທັງລຸ່ມແລະເທິງ ແລະເມືອງອຸສເຊນ ເຊເອຣາ

25 ເອຟຣາອິມມີບຸດຊາຍຊື່ ເຣຟາ ເຣຟາມີບຸດຄື ເຣເຊຟ ເຣເຊຟມີບຸດຊາຍຄື ເຕລາ ເຕລາມີບຸດຊາຍຄື ຕາຮານ

26 ຕາຮານມີບຸດຊາຍຄື ລາດານ ລາດານມີບຸດຊາຍຄືອາມມີຮູດ ອັມມີຮູດມີບຸດຊາຍຄື ເອລີຊາມາ

27 ເອລີຊາມາມີບຸດຊາຍຄື ນູນ ນູນມີບຸດຊາຍຄື ໂຢຊວຍ

28 ທີ່ດິນກໍາມະສິດ ແລະພູມລໍາເນົາຂອງເຂົາຄື ເບັດເອນພ້ອມກັບບັນດາຫົວເມືອງ ແລະນາອາຣານດ້ານຕາເວັນ
ອອກ ແລະເກເຊີດ້ານຕາເວັນຕົກພ້ອມກັບບັນດາຫົວເມືອງເຊເຄມພ້ອມກັບບັນດາຫົວເມືອງ ແລະອັຍຢາພ້ອມ
ກັບບັນດາຫົວເມືອງ

29 ແລະຕາມພົມແດນຂອງຄົນມານັສເຊ ມີເມືອງເບັດເຊອານພ້ອມກັບບັນດາຫົວເມືອງ ຕາອານັກພ້ອມກັບບັນ
ດາຫົວເມືອງ ເມກິດໂດພ້ອມກັບບັນດາຫົວເມືອງ ໂດຣ໌ພ້ອມກັບຫົວເມືອງ ເຊື້ອສາຍໂຢເຊັບບຸດອິສຣາເອນໄດ້
ອາສັຍຢູ່ໃນທີ່ເຫລົ່ານີ້

**ເຊື້ອສາຍຂອງອາເຊີ**

Descendants of Asher

(ປຖກ 46:17)

30 ອາເຊີມີບຸດຊາຍຄື ອິມນາ ອິສວາ ອິສວີ ເບຣີຢາ ແລະນ້ອງສາວຂອງເຂົາຄື ເຊຣາ

31 ເບຣີອາມີບຸດຊາຍຄື ເຮເບີ ແລະ ມັນຄີເອນ ຜູ້ເປັນບິດາຂອງບີຊາອີທ
32 ເຮເບີເປັນບິດາຂອງຢັບເລທ ໂຊເມີ ໂຮທາມ ແລະນ້ອງສາວຂອງເຂົາຄື ຊູອາ
33 ຢັບເລທມີບຸດຊາຍຄື ປາສັກ ບິມຮັນ ແລະອັສວັທ ເຫລົ່ານີ້ເປັນບຸດຢັບເລທ
34 ບຸດເຊເມີນ້ອງຊາຍຂອງເຂົາຄື ອາຣີ ໂຣກາ ຮຸບບາ ແລະອາຣາມ
35 ບຸດເຮເລມນ້ອງຊາຍຂອງເຂົາຄື ໂຊຟາ ອິມນາ ເຊເລສ ແລະ ອາມັນ
36 ໂຊຟາມີບຸດຊາຍຄື ຊູອາ ຮາເນເຟີ ຊູອັນ ເບຣີ ອິມຣາ
37 ເບເຊີ ໂຮດ ຊັມມາ ຊີລຊາ ອິທຣານ ແລະເບເອຣາ
38 ບຸດເຢເທີຄື ເຢຟູນເນ ປີສປາ ແລະ ອາຣາ
39 ບຸດອູນລາຄື ອາຣາ ຮານນີເອນ ແລະຣີຊີອາ
40 ທັງຫມົດເຫລົ່ານີ້ເປັນຄົນຂອງອາເຊີ ຫົວຫນ້າຕະກູນຂອງເຂົາ ເປັນທະຫານທີ່ຄັດເລືອກໄວ້ ເປັນເຈົ້ານາຍໃຫຍ່ ຈຳນວນທີ່ຂຶ້ນທະບຽນໄວ້ໃນສຳມະໂນຄົວເຊື້ອສາຍ ເພື່ອເຂົ້າຮັບຣາຊການສົງຄາມເປັນສອງຫມື່ນຫົກພັນຄົນ

## 8 ເຊື້ອສາຍຂອງເບັນຢາມິນ

Descendants of Benjamin

(ປຖກ 46:21)

1 ເບັນຢາມິນເປັນບິດາຂອງເບລາບຸດຫົວປີຂອງເຂົາ ອັສເບນທີສອງ ອາຮາຮາທີສາມ
2 ໂນຮາທີສີ່ ແລະຣາຟາທີຫ້າ
3 ແລະເບລາມີບຸດຄື ອັດດາ ເກຣາ ອາບີຮູດ
4 ອາບີຊູອາ ນາອາມານ ອາໂຮອາ
5 ເກຣາ ເຊຟູຟານ ແລະຮູຣາມ
6 ຕໍ່ໄປນີ້ເປັນບຸດເອຮູດ (ເຂົາທັງຫລາຍເປັນຫົວຫນ້າບັນດາຕະກູນທີ່ເປັນຊາວເມືອງເກບາ ແລະເຂົາຖືກກວາດ ໄປເປັນຊະ  ເລີຍຍັງເມືອງມານາຮາດ)
7 ຄືນາອາມານ ອາຮີຢາ ແລະເກຣາ ເຂົາທັງຫລາຍຖືກກວາດເປັນເປັນຊະເລີຍ ແລະເຮັກລາມທ່ານເປັນບິດາ ຂອງອຸສຊາ ແລະອາຮີຮູດ
8 ແລະຊາຮາຣາອິມມີບຸດຊາຍໃນດິນແດນໂມອາບ ພາຍຫລັງຈາກທີ່ເຂົາໄດ້ໄລ່ຮູຊິມ ແລະບາອາຣາ ພັຣຍາຂອງເຂົາໄປແລ້ວ
9 ເຂົາມີບຸດກັບໂຮເດສພັຣຍາຂອງເຂົາ ຄືໂຢບັບ ຊີບີອາ ເມຊາ ມັນເກມ
10 ເຢອູສ ຊາຄີອາ ແລະມີຣ໌ມາ ເຫລົ່ານີ້ເປັນບຸດຂອງເຂົາ ເປັນຫົວຫນ້າຕະກູນຂອງເຂົາ
11 ເຂົາມີບຸດກັບຮູຊິມດ້ວຍ ຄືອາບີຕູບ ແລະເອນປາອັນ
12 ບຸດເອັນປາອັນ ຄືເອເບີ ມີຊາມ ແລະເຊເມດ ຜູ້ສ້າງເມືອງໂອໂນ ແລະເມືອງໂລດພ້ອມກັບຫົວເມືອງ
13 ແລະເບຣີຢາ ແລະເຊມາ (ເຂົາທັງຫລາຍເປັນຫົວຫນ້າບັນດາຕະກູນທີ່ເປັນຊາວເມືອງອັຍຢາໂລນ ຜູ້ຊຶ່ງຂັບໄລ່ ຊາວເມືອງກາດໄປເສັຽນັ້ນ)
14 ແລະອາຮີໂອ ຊາຊັກ ແລະເຢເຣໂມທ
15 ເຊບາດີຢາ ອາຣາດ ເອເດີ
16 ມີຄາເອນ ອິສປາ ແລະໂຢຮາ ເປັນບຸດເບຣີຢາ
17 ເຊບາດີຢາ ເມຊູນລາມ ຮີສຄີ ເຮເບີ
18 ອິສເມຣັຍ ອິສລີຢາ ແລະໂຢບັບ ເປັນບຸດເອນປາອັນ

19 ເຢກົມ ຊິກຣີ ຊັບດີ
20 ເອລີເອນັຍ ຊີນເລທັຍ ເອລີເອນ
21 ອາດັຍຢາ ເບຣາຢາ ແລະຊິມຣັທ ເປັນບຸດຊີເມອີ
22 ອີສປານ ເອເບີ ເອລີເອນ
23 ອັບໂດນ ຊີກຣີ ຮານານ
24 ຮານານີຢາ ເອລາມ ອານໂທທີຢາ
25 ອີຟເດຢາ ແລະເປນູເອນ ເປັນບຸດຊາຊັກ
26 ຊັມເຊຣັຍ ເຊຮາຣີຢາ ອາທາລີຢາ
27 ຢາອາເຣ ຊີຢາ ເອລີຢາ ແລະຊີກຣີ ເປັນບຸດເຢໂຣຣາມ
28 ຄົນເຫລົ່ານີ້ເປັນຫົວໜ້າຕະກູນຂອງເຂົາ ຕາມຊາດເຊື້ອສາຍເປັນຊັ້ນຫົວໜ້າ ຄົນເຫລົ່ານີ້ຢູ່ໃນເຢຣູຊາເລັມ

**ວົງວານຂອງຊາອູນ**

29 ແລະໃນກີເບໂອນກໍມີບິດາຂອງກິເບໂອນອາສັຍຢູ່ ແລະພັຣຍາຂອງທ່ານຊື່ ມາອາກາ
30 ບຸດຫົວປີຂອງທ່ານຊື່ ອັບໂດນ ຊູຣ໌ ກີສ ບາອັນ ນາດາບ
31 ເກໂດຣ໌ ອາຮີໂອ ເຊເຄີ
32 ແລະມີກໂລທ (ເຂົາເປັນບິດາຂອງຊີເມອາ) ຄົນເຫລົ່ານີ້ອາສັຍຢູ່ກົງຂ້າມກັບຍາດຂອງເຂົາໃນເຢຣູຊາເລັມ
ເຂົາຢູ່ກັບຍາດຂອງເຂົາ
33 ເນີ ເປັນບິດາຂອງຄີສ ຄີສເປັນບິດາຂອງຊາອູນ ຊາອູນເປັນບິດາໂຢນາທານ ມັນຄີຊູວາ ອາບີນາດາບ ແລະ
ເອສບາອັນ
34 ແລະບຸດໂຢນາທານ ຄືເມຣິບບາອັນ ແລະເມຣິບບາອັນເປັນບິດາຂອງມີກາ
35 ບຸດມີກາ ຄືປີໂທນ ເມເລກ ຕາເຣອາ ແລະ ອາຮັສ
36 ແລະອາຮັສເປັນບິດາຂອງເຢໂຮອາດດາ ແລະເຢໂຮອາດດາເປັນບິດາຂອງອາເລເມທ ອັສມາເວທ ແລະຊິມຣີ
ຊິມຣີເປັນບິດາຂອງໂມຊາ
37 ໂມຊາເປັນບິດາບີເນອາ ບຸດບີເນອາຄືຣາຟາ ບຸດຣາຟາ ຄືເອເລອາຊາ ບຸດເອເລອາຊາ ຄືອາເຊນ
38 ອາເຊນມີບຸດຫົກຄົນ ແລະຕໍ່ໄປນີ້ເປັນຊື່ຂອງເຂົາ ອັສຣີການ ໂບເຄີຣູ ອິສມາເອນ ເຊອາຣີຢາ ໂອບາດີຢາ
ແລະຮານານ ທັງໝົດນີ້ເປັນບຸດຂອງອາເຊນ
39 ບຸດຂອງເອເຊກນ້ອງຊາຍຂອງເຂົາ ຄື ອູລາມບຸດຫົວປີ ເຢອູສຄົນທີສອງ ແລະເອລີເຟເລທຄົນທີສາມ
40 ບຸດຊາຍຂອງອູລາມເປັນຄົນທີ່ເປັນທະຫານເອກ ນັກທະນູ ມີລູກຫລານຫລາຍນຶ່ງຮ້ອຍຫ້າສິບຄົນ ຄົນເຫລົ່ານີ້
ທັງໝົດເປັນເຊື້ອສາຍເບັນຢາມິນ

# 9

Chapter 9

1 ດັ່ງນັ້ນອິສຣາເອນທັງປວງໄດ້ຂຶ້ນທະບຽນໄວ້ໃນສຳມະໂນຄົວເຊື້ອສາຍ ແລະທະບຽນນີ້ກໍບັນທຶກໄວ້ໃນໜັງສື
ພົງສາວະດານກະສັດແຫ່ງອິສຣາເອນ ແລະຢູດາກໍຖືກກວາດໄປເປັນຊະເລີຍໃນບາບີໂລນ ເພາະຄວາມບໍ່ຊື່
ສັດຂອງເຂົາ
2 ຝ່າຍພວກທຳອິດທີ່ເຂົ້າມາອາສັຍໃນທີ່ກຳມະສິດຂອງເຂົາອີກໃນບັນດາຫົວເມືອງຂອງເຂົານັ້ນ ຄືອິສຣາເອນ
ພວກປະໂຣຫິດ ພວກເລວີ ແລະພວກຄົນໃຊ້ປະຈຳພຣະວິຫານ

**ຜູ້ທີ່ກັບມາຈາກກຸງບາບີໂລນ**

Inhabitants of Jerusalem after the Exile

(ນຮມ 11:1-24)

3 ແລະໃນເຢຣູຊາເລັມມີປະຊາຊົນບາງຄົນໃນພວກຢູດາ ພວກເບັນຢາມິນ ພວກເອຟຣາອິມ ແລະພວກມານັສ
ເຊ ໄດ້ອາສັຍຢູ່

4 ຄືອູທັຍບຸດອັມມີຮູດ ຜູ້ເປັນບຸດໂອມຣີ ຜູ້ເປັນບຸດອິມຣີ ຜູ້ເປັນບຸດບານີ ໃນພວກບຸດເປເຣສ ຜູ້ເປັນບຸດຢູດາ

5 ແລະຈາກຄົນຊີໂຣ ຄືອາຊັຍຢາບຸດຫົວປີ ແລະບຸດຂອງເຂົາ

6 ຈາກບຸດເຊຣາ ຄືເຢອູເອນ ແລະຍາດຂອງເຂົາເປັນຫົກຮ້ອຍເກົ້າສິບຄົນ

7 ຈາກເຊື້ອສາຍເບັນຢາມິນ ຄື ຊັນລູ ຜູ້ເປັນບຸດເມຊຸນລາມ ຜູ້ເປັນບຸດໂຮດາວີຢາ ຜູ້ເປັນບຸດຮັສເຊນູອາ

8 ອິບເນຢາ ຜູ້ເປັນບຸດເຢໂຣຮາມ ເອລາບຸດອູສຊີ ຜູ້ເປັນບຸດມິກຣີ ແລະເມຊຸນລາມ ຜູ້ເປັນບຸດເຊຟາຕີຢາ ຜູ້ເປັນ
ບຸດຣູເອນ ຜູ້ເປັນບຸດອິບນີຢາ

9 ແລະຍາດຂອງເຂົາຕາມຊາດເຊື້ອສາຍຂອງເຂົາເປັນເກົ້າຮ້ອຍຫ້າສິບຫົກຄົນທັງຫມົດນີ້ເປັນຫົວຫນ້າຕະກູນ
ຕາມຕະກູນຂອງເຂົາ

10 ຈາກພວກປະໂຣຫິດ ຄືເຢດັຍຢາ ເຢໂຮຍາຣິບ ຢາຄິນ

11 ແລະອາຊາຣີຢາ ຜູ້ເປັນບຸດຮິນກີຢາ ຜູ້ເປັນບຸດເມຊູນລາມ ຜູ້ເປັນບຸດຊາໂດກ ຜູ້ເປັນບຸດເມຣາໂຢດ ຜູ້ເປັນບຸດ
ອາຮີທູບ ເຈົ້າຫນ້າທີ່ປົກຄອງຂອງພຣະວິຫານແຫ່ງພຣະເຈົ້າ

12 ແລະອາດັຍຢາ ຜູ້ເປັນບຸດເຢໂຣຮາມ ຜູ້ເປັນບຸດປັສເຮີ ຜູ້ເປັນບຸດມັນຄີຢາ ແລະມາອາຊັຍ ຜູ້ເປັນບຸດອາດີເອນ
ຜູ້ເປັນບຸດ ຢາເຊຣາ ຜູ້ເປັນບຸດ ເມຊູນລາມ ຜູ້ເປັນບຸດເມຊີນເລມິທ ຜູ້ເປັນບຸດອິມເມີ

13 ແລະຍາດຂອງເຂົາ ຫົວຫນ້າຕະກູນຂອງເຂົາ ຮວມເປັນນຶ່ງພັນເຈັດຮ້ອຍຫົກສິບຄົນ ເປັນຄົນສາມາດທີ່ຈະທຳ
ງານປົນນິບັດໃນພຣະວິຫານຂອງພຣະເຈົ້າ

**ຄອບຄົວຄົນເລວີ**

levitical Families

14 ຈາກຄົນເລວີ ຄືເຊມັຍຢາ ຜູ້ເປັນບຸດ ຮັສຊູບ ຜູ້ເປັນບຸດອັສຣີການ ຜູ້ເປັນບຸດຮາຊາບີຢາ ເຊື້ອສາຍຂອງເມຣາຣີ

15 ແລະບັກບັກກາກ ເຮເຣສ ເກລານ ແລະມັດຕານີຢາ ຜູ້ເປັນບຸດມີກາ ຜູ້ເປັນບຸດຊິກຣີ ຜູ້ເປັນບຸດອາສາບ

16 ແລະໂອບາດີຢາ ຜູ້ເປັນບຸດ ເຊມັຍຢາ ຜູ້ເປັນບຸດ ກາລານ ຜູ້ເປັນບຸດເຢດູທູນ ແລະເບເຣຄີຢາ ຜູ້ເປັນບຸດອາຊາ
ຜູ້ເປັນບຸດເອນການາ ຜູ້ອາສັຍຢູ່ໃນຊົນນະບົດຂອງຊາວເນໂຕຟາ

17 ຜູ້ເຝົ້າປະຕູ ຄືຊັນລູມ ອັກກຸບ ຕັນໂມນ ອາຮີມານ ແລະຍາດຂອງເຂົາ (ຊັນລູມເປັນຫົວຫນ້າ)

18 ປະຈຳຢູ່ຈົນບັດນີ້ທີ່ປະຈຳການຂອງກະສັດດ້ານຕາເວັນອອກ ຄົນເຫລົ່ານີ້ເປັນຜູ້ເຝົ້າປະຕູຄ້າຍຂອງຄົນເລວີ

19 ຊັນລູມ ເປັນບຸດຂອງໂກເຣ ຜູ້ເປັນບຸດເອບີອາສາບ ຜູ້ເປັນບຸດຂອງໂກຣາ ແລະຍາດໃນຕະກູນຂອງເຂົາ ຄືຄົນ
ໂກຣາ ເປັນຜູ້ດູແລການງານບົວລະບັດເປັນຜູ້ເຝົ້າທໍຣະນີປະຕູຂອງເຕັນ ດັ່ງບັນພະບຸຣຸດຂອງເຂົາເປັນຜູ້ດູແລ
ຄ້າຍຂອງພຣະຜູ້ເປັນເຈົ້າ ເປັນຜູ້ດູແລທາງເຂົ້າ

20 ແລະຟີເນຮັສບຸດຂອງເອເລອາຊາ ເປັນຜູ້ຄອບຄອງເຫນືອເຂົາໃນການກ່ອນ ພຣະຜູ້ເປັນເຈົ້າຊົງສະຖິດກັບເຂົາ

21 ເຊຄາຣີຢາບຸດເມເຊເລມີຢາເປັນຜູ້ເຝົ້າທາງເຂົ້າປະຕູເຕັນນັດພົບ

22 ຜູ້ຖືກເລືອກເປັນຜູ້ເຝົ້າປະຕູທີ່ທໍຣະນີນັ້ນມີສອງຮ້ອຍສິບສອງຄົນ ເຂົາຂຶ້ນທະບຽນສຳມະໂນຄົວເຊື້ອສາຍໄວ້
ໃນຊົນນະບົດຂອງເຂົາ ດາວິດແລະຊາມູເອນຜູ້ທຳນວາຍໄດ້ສະຖາປະນາໄວ້ໃນຕຳແຫນ່ງຫນ້າທີ່

23 ດັ່ງນັ້ນເຂົາແລະເຊື້ອສາຍຂອງເຂົາຈຶ່ງເປັນຜູດູແລປະຕູຮົ້ວພຣະວິຫານຄືເຕັນ

24 ຜູ້ດູແລປະຕູຮົ້ວຢູ່ທັງສີ່ດ້ານ ຄືດ້ານຕາເວັນອອກ ຕາເວັນຕົກ ເຫນືອ ແລະໃຕ້

25 ແລະຍາດຂອງເຂົາຊຶ່ງຢູ່ໃນຊົນນະບົດຂອງເຂົາຕ້ອງເຂົ້າມາທຸກໆເຈັດວັນ ຕາມເວລາກຳໜົດ ເພື່ອຈະຢູ່ກັບຄົນເຫລົ່ານີ້
26 ເພາະນາຍປະຕູຮົ້ວທັງສີ່ຄົນ ຜູ້ເປັນພວກເລວີນັ້ນ ມີຕຳແໜ່ງທີ່ເປັນຜູ້ດູແລຫ້ອງ ແລະຄັງຂອງພຣະວິຫານແຫ່ງພຣະເຈົ້າ
27 ແລະເຂົາພັກອາສັຍຢູ່ຮອບພຣະວິຫານຂອງພຣະເຈົ້າ ເພາະໜ້າທີ່ເຝົ້າຕົກຢູ່ກັບເຂົາ ແລະເຂົາມີໜ້າເປີດທຸກເຊົ້າ
28 ບາງຄົນເປັນຄົນດູແລເຄື່ອງໃຊ້ໃນການບົວລະບັດ ເພາະວ່າຈະເບີກອອກໄປ ຫລືສິ່ງເຂົ້າມາຕ້ອງນັບທຸກຄັ້ງ
29 ແລະບາງຄົນຖືກແຕ່ງຕັ້ງໃຫ້ດູແລເຄື່ອງໃຊ້ ແລະດູແລເຄື່ອງໃຊ້ບໍຣິສຸດທັງໝົດ ຄືດູແລຍອດແປ້ງ ເຫລົ້າອະງຸ່ນ ນ້ຳມັນ ກຳຍານ ແລະເຄື່ອງເທດ
30 ແລະບາງຄົນຊຶ່ງເປັນເຊື້ອສາຍຂອງປະໂຣຫິດກໍຕຽມເຄື່ອງເທດປະສົມ
31 ແລະມັດຕີທີຢາຄົນເລວີຄົນນຶ່ງ ຜູ້ເປັນບຸດຫົວປີຂອງຊັນລູມ ຄົນໂກຣາ ມີຕຳແໜ່ງໜ້າທີ່ເປັນຜູ້ດູແລສິ່ງທີ່ປີ້ງໃນຖາດ
32 ແລະຍາດຂອງເຂົາບາງຄົນຊຶ່ງເປັນຄົນໂກຣາດເປັນຜູ້ດູແລຂະໜົມຕັ້ງຖວາຍ ມີໜ້າທີ່ຈັດຕຽມທຸກວັນສະບາໂຕ
33 ຕໍ່ໄປນີ້ເປັນນັກຮ້ອງ ຄືຫົວໜ້າຕະກູນເລວີ ຜູ້ອາສັຍຢູ່ໃນຫ້ອງໃນພຣະວິຫານບໍ່ຕ້ອງທຳການບົວລະບັດຢ່າງອື່ນ ເພາະເຂົາຢູ່ເວນທັງກາງເວັນແລະກາງຄືນ
34 ຄົນເຫລົ່ານີ້ເປັນຫົວໜ້າຕະກູນແຫ່ງຄົນເລວີ ຕາມຊາດເຊື້ອສາຍຂອງເຂົາເປັນຊັ້ນຫົວໜ້າ ຄົນເຫລົ່ານີ້ອາສັຍຢູ່ທີ່ເຢຣູຊາເລັມ

**ວົງວານຂອງຊາອູນ**

35 ໃນກິເບໂອນນັ້ນ ເຢອີເອນອາສັຍຢູ່ ແລະພັຣຍາຂອງທ່ານຊື່ມາອາກາ
36 ແລະບຸດຊາຍຫົວປີຂອງທ່ານຊື່ ອັບໂດນ ແລ້ວກໍມີຊູຣ໌ ຄີສ ບາອັນ ເນີ ນາດາບ
37 ເກໂດຣ໌ ອາຮີໂອ ເຊຄາຣີຢາ ແລະມິກໂລທ
38 ແລະມິກໂລທເປັນບິດາຂອງຊີເມອາມ ແລະຄົນເຫລົ່ານີ້ອາສັຍຢູ່ກົງຂ້າມກັບຍາດຂອງເຂົາໃນເຢຣູຊາເລັມດ້ວຍ ຢູ່ກັບຍາດຂອງເຂົາ
39 ເນີເປັນບິດາຂອງຄີສ ຄີສເປັນບິດາຂອງຊາອູນ ຊາອູນເປັນບິດາຂອງໂຢນາທານ ມັນຄີຊູວາ ອາບີນາດາບ ແລະເອສບາ ອັນ
40 ບຸດໂຢນາທານຊື່ ເມຣິບບາອັນ ແລະເມຣິບບາອັນເປັນບິດາຂອງມີກາ
41 ບຸດມີກາ ຄືປີໂທນ ເມເລກ ຕາເຣອາ ແລະອາຮັສ
42 ແລະອາຮັສເປັນບິດາຂອງຢາຣາ ແລະຢາຣາເປັນບິດາຂອງອາເລເມທ ອັສມາເວທ ແລະຊິມຣີ ແລະຊິມຣີເປັນບິດາຂອງໂມຊາ
43 ໂມຊາເປັນບິດາຂອງບິເນອາ ແລະບຸດບິເນອາຄື ເຣຟັຍຢາ ບຸດເຣຟັຍຢາຄືເອເລອາຊາ ບຸດອາເລອາຊາຄືອາເຊນ
44 ອາເຊນມີບຸດຊາຍຫົກຄົນ ແລະຕໍ່ໄປນີ້ເປັນຊື່ຂອງເຂົາທັງຫລາຍ ຄືອັສຣີການ ໂບເຄຣູ ອິສມາເອນ ເຊອາຣີຢາ ໂອບາດີຢາ ແລະຮານານ ເຫລົ່ານີ້ເປັນບຸດອາເຊນ

## 10 ມໍຣະນະກັມຂອງຊາອູນ ແລະຣາຊໂອຣົດຂອງພຣະອົງ

Death of Saul and His Sons

(1 ຊມອ 31:1-13)

1 ຄົນຟີລິສຕິນໄດ້ສູ້ກັບຄົນອິສຣາເອນ ແລະຄົນອິສຣາເອນກໍຫນີຄົນຟີລິສຕິນລົ້ມຕາຍຢູ່ທີ່ເທິງພູເຂົາກິນໂບອາ

2 ແລະຄົນຟີລິສຕິນກໍໄລ່ທັນຊາອູນກັບພວກບຸດຊາຍ ແລະຄົນຟີລິສຕິນກໍຂ້າໂຢນາທານ ອາບີນາດາບ ແລະມັນ
ຄີຊູອາ ບຸດ ຊາຍຂອງຊາອູນເສັຽ

3 ການຮົບຫນັກກໍປະຊິດຊາອູນເຂົ້າໄປ ແລະນັກທະນູມາພົບພຣະອົງເຂົ້າ ພຣະອົງກໍຊົງບາດເຈັບສາຫັດດ້ວຍຝີ
ມືຂອງນັກທະນູ

4 ແລ້ວຊາອູນຮັບສັ່ງຄົນຖືອາວຸດຂອງພຣະອົງວ່າ, “ຈົ່ງຊັກດາບອອກແທງເຮົາເສັຽໃຫ້ຊອດເຖີດ ຢ້ານວ່າຄົນທີ່ບໍ່
ໄດ້ຮັບພິທີຕັດເຫລົ່ານີ້ຈະເຂົ້າມາທໍາລົບລູ່ແກ່ເຮົາ” ແຕ່ຜູ້ຖືອາວຸດບໍ່ຍອມກະທໍາຕາມ ເພາະເຂົາຢ້ານກົວ ຊາ
ອູນຈຶ່ງຊັກດາບຂອງພຣະອົງອອກ ຊົງລົ້ມທັບດາບນັ້ນ

5 ແລະເມື່ອຜູ້ຖືອາວຸດເຫັນວ່າຊາອູນສິ້ນພຣະຊົນແລ້ວ ເຂົາກໍລົ້ມທັບດາບຂອງເຂົາຕາຍໄປນໍາ

6 ດັ່ງນັ້ນຊາອູນກໍສິ້ນພຣະຊົນພ້ອມກັບບຸດຊາຍທັງສາມຂອງພຣະອົງ ແລະຣາຊວົງທັງຫມົດຂອງພຣະອົງກໍຕາຍ
ດ້ວຍກັນ

7 ເມື່ອຄົນອິສຣາເອນຜູ້ຢູ່ໃນຮ່ອມພູເຫັນວ່າກອງທັບຫນີໄປ ແລະຊາອູນກັບບຸດຊາຍຂອງພຣະອົງກໍສິ້ນພຣະຊົນ
ແລ້ວ ເຂົາກໍຖິ້ມບ້ານເມືອງຂອງເຂົາແລະຫລົບຫນີໄປ ຄົນຟີລິສຕິນກໍເຂົ້າມາອາສັຍຢູ່ໃນນັ້ນ

8 ຢູ່ມາວັນຮຸ່ງຂຶ້ນ ເມື່ອຄົນຟີລິສຕິນມາປົດເສື້ອຜ້າຈາກຄົນທີ່ຖືກຂ້າ ເຂົາພົບພຣະສົບຊາອູນ ແລະບຸດຊາຍທັງ
ສາມຢູ່ເທິງພູເຂົາກິນໂບອາ

9 ເຂົາກໍຖອດເຄື່ອງຊົງຂອງພຣະອົງເອົາພຣະສຽນແລະອາວຸດຂອງພຣະອົງໄປ ແລະສົ່ງຜູ້ສົ່ງຂ່າວໄປທົ່ວດິນແດນ
ຟີລິສຕິນໃຫ້ນໍາຂ່າວດີໄປຍັງຮູບໂຄຣົບແລະປະຊາຊົນຂອງເຂົາ

10 ເຂົາເອົາເຄື່ອງອາວຸດຂອງພຣະອົງໄປໄວ້ໃນວິຫານພຣະຂອງເຂົາ ແລະເອົາພຣະສຽນຂອງພຣະອົງມັດໄວ້ໃນວິ
ຫານຂອງ ພຣະດາໂກນ

11 ແຕ່ເມື່ອຊາວຢາເບສກີເລອາດທັງສິ້ນໄດ້ຍິນເຣື່ອງທັງຫມົດທີ່ຄົນຟີລິສຕິນໄດ້ກະທໍາແກ່ຊາອູນ

12 ທະຫານເກັ່ງກ້າທັງສິ້ນກໍລຸກຂຶ້ນໄປເຊີນພຣະສົບຂອງຊາອູນແລະສົບບຸດຊາຍຂອງພຣະອົງ ນໍາມາທີ່ຢາເບສ
ແລະໄດ້ອົດອາຫານເຈັດວັນ

13 ຊາອູນໄດ້ສິ້ນພຣະຊົນດ້ວຍຄວາມບໍ່ຊື່ສັດຂອງພຣະອົງ ພຣະອົງບໍ່ໄດ້ຊື່ສັດຕໍ່ພຣະເຈົ້າໃນເຣື່ອງທີ່ພຣະອົງບໍ່ໄດ້
ຮັກສາພຣະບັນຊາຂອງພຣະເຈົ້າ ແລະໄດ້ຊົງສແວງການນໍາໂດຍຊົງປຶກສານໍາວິນຍານຂອງຄົນຕາຍ

14 ແລະບໍ່ໄດ້ຊົງສແວງການນໍາຈາກພຣະເຈົ້າ ພຣະເຈົ້າຈຶ່ງຊົງສັງຫານພຣະອົງເສັຽ ແລະຊົງຍົກຣາຊອານາຈັກໃຫ້
ແກ່ດາວິດບຸດເຈສຊີ

## 11 ຕັ້ງດາວິດເປັນກະສັດເຫນືອອິສຣາເອນ

David Anointed King of All Israel

(2 ຊມອ 5:1-3)

1 ແລ້ວຄົນອິສຣາເອນທັງຫມົດກໍຊຸມນຸມຢູ່ດ້ວຍກັນເຝົ້າດາວິດທີ່ເມືອງເຮໂບຣນທູນວ່າ, “ເບິ່ງແມ, ຂ້າພຣະອົງ
ທັງຫລາຍເປັນກະດູກ ແລະເນື້ອຂອງພຣະອົງ

2 ໃນການກ່ອນເຖິງເມື່ອຊາອູນຊົງເປັນກະສັດ ຂ້າພຣະອົງກໍຊົງນໍາອິສຣາເອນອອກໄປແລະເຂົ້າມາ ແລະພຣະຜູ້
ເປັນເຈົ້າ ພຣະເຈົ້າຂອງຂ້າພຣະອົງວ່າ ເຈົ້າຈະເປັນຜູ້ປົກຄອງອິສຣາເອນປະຊາກອນຂອງເຮົາຢ່າງຜູ້ລ້ຽງ
ແກະ ແລະເຈົ້າຈະເປັນເຈົ້າເຫນືອອິສຣາເອນປະຊາກອນເຮົາ”

3 ດັ່ງນັ້ນພວກຜູ້ໃຫຍ່ຂອງຄົນອິສຣາເອນກໍມາເຝົ້າກະສັດທີ່ເມືອງເຮໂບຣນ ແລະດາວິດຊົງກະທຳພັນທະສັນຍາ
ກັບເຂົາທັງຫລາຍທີ່ເມືອງເຮໂບຣນຕໍ່ພຣະພັກພຣະເຈົ້າ ແລະເຂົາທັງຫລາຍກໍຫົດສົງຕັ້ງດາວິດໃຫ້ເປັນພຣະຣາ
ຊາເຫນືອອິສຣາເອນ ຕາມພຣະຄຳຂອງພຣະເຈົ້າໂດຍຊາມູເອນ

**ດາວິດຍຶດເມືອງຊີໂອນ**

Jerusalem Captured

(2 ຊມອ 5:6-10)

4 ດາວິດ ແລະຄົນອິສຣາເອນທັງສິ້ນໄປຍັງເຢຣູຊາເລັມ ຄືເຢບຸສ ທີ່ນັ້ນຄົນເຢບຸສອາສັຍຢູ່ ຊຶ່ງເປັນຊາວແຜ່ນດິນ
ນັ້ນ

5 ຊາວເມືອງເຢບຸສທູນດາວິດວ່າ, “ພຣະອົງຈະສະເດັດເຂົ້າມາທີ່ນີ້ບໍ່ໄດ້” ຢ່າງໃດກໍດີ ດາວິດຊົງຍຶດທີ່ກຳບັງເຂັ້ມ
ແຂງ ຄືຊີໂອນໄວ້ຄືນະຄອນຂອງດາວິດ

6 ດາວິດຮັບສັ່ງວ່າ, “ຜູ້ທີ່ໂຈມຕີຄົນເຢບຸສໄດ້ກ່ອນຈະໄດ້ເປັນຫົວຫນ້າ ແລະຜູ້ບັງຄັບບັນຊາ” ແລະໂຢອາບ
ບຸດຂອງເຊຣູຢາໄດ້ຍົກຂຶ້ນໄປກ່ອນທ່ານຈຶ່ງໄດ້ເປັນຫົວຫນ້າ

7 ແລະດາວິດຊົງປະທັບຢູ່ໃນທີ່ກຳບັງເຂັ້ມແຂງ ເພາະສະນັ້ນເຂົາຈຶ່ງເອີ້ນວ່າ ນະຄອນຂອງດາວິດ

8 ແລະພຣະອົງຊົງສ້າງເມືອງອ້ອມຮອບຕັ້ງແຕ່ມິນໂລໂດຍຮອບ ແລະໂຢອາບກໍສ້ອມແປງສ່ວນທີ່ເຫລືອຂອງ
ເມືອງນັ້ນ

9 ດາວິດຊົງຈະເຣີນຍິ່ງໆຂຶ້ນ ເພາະວ່າພຣະຜູ້ເປັນເຈົ້າຈອມໂຍທາຊົງສະຖິດກັບພຣະອົງ

**ບັນດາທະຫານທີ່ມີຊື່ສຽງຂອງດາວິດ**

David’s Mighty Men and Their Exploits

(2 ຊມອ 23:8-39)

10 ຕໍ່ໄປນີ້ເປັນຄົນທີ່ເດັ່ນໃນພວກວິຣະບຸຣຸດຂອງດາວິດ ຜູ້ສນັບສນຸນພຣະອົງຢ່າງເຂັ້ມແຂງໃນຣາຊອານາຈັກ
ຂອງພຣະອົງ ດ້ວຍກັນກັບອິສຣາເອນທັງຫມົດ ເຊີນພຣະອົງໃຫ້ເປັນກະສັດຕາມພຣະຄຳຂອງພຣະເຈົ້າກ່ຽວ
ດ້ວຍເຣື່ອງອິສຣາເອນ

11 ຕໍ່ໄປນີ້ເປັນຈຳນວນວິຣະບຸຣຸດຂອງດາວິດ ຄື ຢາໂຊເບອາມບຸດຮັກໂມນີ ເປັນຫົວຫນ້າຂອງຄົນທັງສາມ ເຂົາ
ຍົກຫອກຂອງເຂົາສູ້ຄົນສາມຮ້ອຍ ແລະຂ້າເສັຽໃນຄາວດຽວກັນ

12 ແລະໃນຄົນທັງສາມ ຄົນທີ່ຕໍ່ເຂົາໄປຄື ເອເລອາຊາ ບຸດໂດໂດຕະກູນອາໂຮອາ

13 ເຂົາຢູ່ກັບດາວິດທີ່ປັສດາມມິມ ເມື່ອຄົນຟີລິສຕິນຊຸມນຸມກັນທຳສົງຄາມ ບ່ອນນັ້ນມີດິນຕອນນຶ່ງມີເຂົ້າບເລ
ເຕັມໄປຫມົດ ແລະຄົນທັງຫລາຍກໍຫນີຈາກຄົນຟີລິສຕິນ

14 ແຕ່ເຂົາຢືນຕໍ່ສູ້ຖ້າມກາງທີ່ດິນຕອນນັ້ນ ແລະປ້ອງກັນມັນໄວ້ ໄດ້ຂ້າຄົນຟີລິສຕິນເສັຽ ແລະພຣະຜູ້ເປັນເຈົ້າຊົງ
ຊ່ອຍເຂົາທັງຫລາຍໃຫ້ພົ້ນດ້ວຍໄຊຊະນະອັນຍິ່ງໃຫຍ່

15 ສາມຄົນໃນພວກທະຫານເອກທັງສາມສິບຄົນນັ້ນໄດ້ລົງໄປເຖິງສີລາຫາດາວິດທີ່ຖ້ຳອາດຸນລາມ ເມື່ອກອງທັບ
ຂອງຄົນຟີລິສຕິນຕັ້ງຄ້າຍຢູ່ທີ່ຮ່ອມພູເຣຟາອີມ

16 ໃນເວລານັ້ນ ດາວິດຢູ່ໃນທີ່ກຳບັງທີ່ເຂັ້ມແຂງ ແລະທະຫານປະຈຳປ້ອມຂອງຄົນຟີລິສຕິນຢູ່ທີ່ເບັດເລເຮັມ

17 ດາວິດສັ່ງດ້ວຍຄວາມອາລັຍວ່າ, “ໃຜຫນໍຈະສົ່ງນ້ຳຈາກບໍ່ທີ່ເບັດເລເຮັມທີ່ຢູ່ຂ້າງປະຕູເມືອງມາໃຫ້ເຮົາດື່ມໄດ້”

18 ແລ້ວຄົນທັງສາມໄດ້ຕີຝ່າຄ້າຍຂອງຄົນຟີລິສຕິນເຂົ້າໄປ ແລະຕັກນ້ຳມາຈາກນ້ຳສ້າງເບັດເລເຮັມທີ່ຂ້າງປະຕູ
ເມືອງ ນຳເອົາມາຖວາຍດາວິດ ແຕ່ດາວິດບໍ່ໄດ້ຊົງດື່ມນ້ຳນັ້ນ ພຣະອົງຊົງເທອອກຖວາຍແດ່ພຣະຜູ້ເປັນເຈົ້າ

19 ກ່າວວ່າ, “ຂໍພຣະຜູ້ເປັນເຈົ້າຂອງຂ້າຊົງຫ້າມເຂົາ ບໍ່ໃຫ້ກະທຳຢ່າງນີ້ ຄວນຫລືທີ່ຂ້າຈະດື່ມໂລຫິດຂອງຄົນ
ເຫລົ່ານີ້ ຜູ້ທີ່ສ່ຽງຊີວິດຂອງເຂົາເອົານ້ຳນີ້ມາ” ເພາະສະນັ້ນ ພຣະອົງຈຶ່ງບໍ່ຊົງດື່ມ ອັນນີ້ແມ່ນວິຣະກັມຂອງຈອມ
ສາມທະຫານເອກ
20 ຝ່າຍອາບີຊັຍນ້ອງຊາຍຂອງໂຢອາບ ເປັນຫົວຫນ້າຂອງທັງສາມສິບຄົນນັ້ນ ທ່ານໄດ້ຍົກຫອກຂອງທ່ານສູ້ຄົນ
ສາມຮ້ອຍ ແລະຂ້າເສັຽ ແລະໄດ້ຮັບຊື່ສຽງດັ່ງວິຣະບຸຣຸດສາມຄົນນັ້ນ
21 ໃນສາມສິບຄົນນັ້ນທ່ານມີຊື່ສຽງທີ່ສຸດ ແລະໄດ້ເປັນຜູ້ບັງຄັບບັນຊາຂອງເຂົາ ແຕ່ທ່ານບໍ່ມີຍົດເທົ່າກັບສາມຄົນ
ນັ້ນ
22 ແລະເບນັຍຢາບຸດເຢຮົວອາດາເປັນຄົນເກັ່ງກ້າແຫ່ງເມືອງກັບເຊເອນເປັນທະຫານທີ່ມີຊື່ສຽງຜູ້ນຶ່ງ ເຂົາໄດ້
ສ້າງວິຣະກັມໄວ້ຫລາຍຢ່າງຮວມທັງໄດ້ຂ້າບຸດອາຣີເອນແຫ່ງໂມອາບເສັຽສອງຄົນ ເຂົາລົງໄປຂ້າສິງທີ່ໃນ
ນ້ຳສ້າງໃນວັນທີ່ຫິມະຕົກ
23 ເຂົາໄດ້ຂ້າຄົນເອຢິບຄົນນຶ່ງ ຮູບຮ່າງໃຫຍ່ໂຕ ສູງຫ້າສອກ ຄົນເອຢິບນັ້ນຖືຫອກເຫມືອນໄມ້ກະພັ່ນ ແຕ່ເບນັຍ
ຢາຖືໄມ້ເທົ້າລົງໄປຫາເຂົາ ແລະຍາດເອົາຫອກມາຈາກມືຂອງຄົນເອຢິບ ແລະຂ້າເຂົາເສັຽດ້ວຍຫອກຂອງເຂົາ
ເອງ
24 ສິ່ງເຫລົ່ານີ້ເບນັຍຢາບຸດຊາຍເຢຮົວອາດາໄດ້ກະທຳ ແລະໄດ້ຊື່ສຽງໃນຫມູ່ພວກທະຫານເອກສາມຄົນນັ້ນ
25 ເບິ່ງແມ, ເຂົາເປັນຄົນມີຊື່ສຽງຫລາຍກວ່າສາມສິບຄົນນັ້ນ ແຕ່ເຂົາໄດ້ບໍ່ເທົ່າກັບສາມຄົນນັ້ນ ແລະດາວິດບໍ່ໄດ້
ຊົງຕັ້ງເຂົາໃຫ້ຢູ່ເຫນືອອົງຄາຣັກຂອງພຣະອົງ
26 ນອກນັ້ນມີພວກທະຫານເອກທະຫານຂອງກອງທັບຄືອາຊາເຮນນ້ອງຊາຍຂອງໂຢອາບ ເອນຮານັນບຸດ ໂດໂດ
ຊາວເບັດເລເຮັມ
27 ຊັມໂມທ ຊາວຮາໂຣດ ເຮເລສ ຊາວເປໂລນ
28 ອີຣາບຸດອິກເກສ ຊາວເຕໂກອາ ອາບີເອເຊີ ຊາວອານາໂທດ
29 ຊິບເບກັຍ ຊາວຮູຊາ ອີລັຍ ຊາວອາໂຮ
30 ມາຮາຣັຍ ຊາວເນໂຣຟາ ເຮເລດບຸດບາອານາ ຊາວເນໂຕຟາ
31 ອີທັຍ ບຸດຣິບັຍ ແຫ່ງເມືອງກິເບອາຂອງຄົນເບັນຢາມິນ ເບນັຍຢາຊາວປີຣາໂທນ
32 ຮູຣັຍ ຊາວຫ້ວຍນຳກາອັສ ອາບີເອນຕະກູນອາຣ໌ບາ
33 ຊາວອັສມາເວທ ຕະກູນບາຮາຣັມ ເອລີຢາບາ ຊາວຊາອານໂບນ
34 ບຸດຫລານຮາເຊມ ຕະກູນກີໂຊນ ໂຢນາທານບຸດ ຊາເກ ຊາວຮາຣາ
35 ອາຣີອາມ ບຸດຊາຄາ ຊາວຮາຣາ ເອລີຟານບຸດອູຣ໌
36 ເຮເຟີ ຊາວເມເຄຣາ ອາຮີຢາ ຊາວເປໂລນ
37 ເຮັສໂຣ ຊາວກາຣ໌ເມນ ນາອາຣັຍບຸດເອັສບັຍ
38 ໂຢເອນນ້ອງຊາຍຂອງນາທານ ມິບຮາບຸດຮັກຣີ
39 ເຊເລກ ຊາວອັມໂມນ ນາຮາຣັຍ ຊາວເບເອໂຣທຜູ້ຖືອາວຸດຂອງໂຢອາບ ບຸດນາງເຊຣູຢາ
40 ອີຣາ ຕະກູນອິທ ກາເຣບ ຕະກູນອິທ
41 ອູຣີຢາ ຄົນຮິດຕີ ຊາບາດ ບຸດອາລັຍ
42 ອາດີນາ ບຸດຊີຊາ ຄົນຣູເບນ ຫົວຫນ້າຄົນນຶ່ງຂອງຄົນຣູເບນ ແລະສາມສິບຄົນດ້ວຍກັນກັບເຂົາ
43 ຮານານ ບຸດມາອາກາ ແລະໂຢຊາຟັດ ຊາວມິທນິດ
44 ອຸສຊີອາ ຊາວອັສເຕຣາ ເຊມາ ແລະເຢອີເອນບຸດໂຮທາມ ຊາວອາໂຣເອີ
45 ເຢດີອາເອນ ບຸດຊິມຣີ ແລະໂຢຮານ້ອງຊາຍຂອງເຂົາ ຊາວຕີສ

46 ເອລີເອນ ຊາວມາຮາວ ແລະເຢຣີບັຍ ແລະໂຢຊາວີຢາ ບຸດເອນນາອາມ ແລະອິທມາ ຊາວໂມອາບ

47 ເອລີເອນ ແລະໂອເບດ ແລະຢາອາຊີເອນ ຕະກູນເມໂຊບາ

## 12 ຜູ້ຊ່ວຍຂອງດາວິດທີ່ຊີກລາກ

David's Followers in the Wilderness

(1 ຊມອ 22:1-2)

1 ຕໍ່ໄປນີ້ເປັນຄົນທີ່ມາຫາດາວິດທີ່ຊີກລາກ ຂນະເມື່ອທ່ານໄປໃສມາໃສບໍ່ສະດວກ ເພາະເຫດຊາອູນ ບຸດຄີສ
ເຂົາທັງຫລາຍເປັນຄົນໃນພວກທະຫານທີ່ມີຊື່ສຽງ ຜູ້ຊ່ວຍທ່ານໃນການຮົບ

2 ເຂົາເປັນນັກທະນູ ເຂົາແກວ່ງກ້ອນຫີນດ້ວຍກະຖຸນ ແລະຍິງທະນູໄດ້ດ້ວຍມືຂວາ ຫລືມືຊ້າຍ ເຂົາເປັນຄົນເບັນ
ຢາມິນຍາດຂອງຊາອູນ

3 ອາຮີເອເຊີເປັນຫົວໜ້າ ຖັດໄປຄືໂຢອັສ ບຸດເຊມາອາ ຊາວເມືອງກິເບອາ ແລະເຢຊີເອນ ແລະເປເຣທ ບຸດອັສ
ມາເວທ ເບຣາກາ ເຢຮູຊາວອານາໂທດ

4 ອິສມັຍຢາແຫ່ງກິເບໂອນ ທະຫານເອກທະຫານໃນພວກສາມສິບຄົນນັ້ນ ແລະເປັນຫົວໜ້າເໜືອສາມສິບຄົນ
ນັ້ນ ເຢເຣມີຢາ ຢາຮາຊີເອນ ໂຢຮານານ ໂຢຊາບາດຊາວເມືອງເກເດຣາ

5 ເອລູຊັຍ ເຢຣີໂມທ ເບອາລີຢາ ເຊມາຣີຢາ ເຊຟາຕີຢາ ຕະກູນຮາຣູຟ

6 ເອນການາ ອິສຊີຢາ ອຊາເຣນ ໂຢເອເຊີ ແລະຢາໂຊເບອາມ ຄົນຕະກູນໂກຣາ

7 ແລະໂຢເອລາ ແລະເຊບາດີຢາ ບຸດຂອງເຢໂຣຮາມ ຊາວເກໂດຣ໌

8 ມີທະຫານເອກທະຫານແລະຜູ້ຊໍານານເສິກຈາກຄົນກາດໜີເຂົ້າໄປຫາດາວິດໃນທີ່ກໍາບັງເຂັ້ມແຂງໃນຖິ່ນກັນ
ດານ ເຂົາຊໍານານໂລ່ແລະຫອກ ຜູ້ຊຶ່ງໜ້າຂອງເຂົາເໝືອນໜ້າສິງ ແລະຜູ້ຊຶ່ງໄວເໝືອນມັ່ງເທິງພູເຂົາ

9 ເອເຊີເປັນຫົວໜ້າ ໂອບາດີຢາທີສອງ ເອລີອາບທີສາມ

10 ມິສມານນາທີສີ່ ເຢເຣມີຢາທີຫ້າ

11 ອັທຕັຍທີຫົກ ເອລີເອນທີເຈັດ

12 ໂຢຮານານທີແປດ ເອນຊາບາດທີເກົ້າ

13 ເຢເຣມີຢາທີສິບ ມັກບານນັຍທີສິບເອັດ

14 ຄົນກາດເຫລົ່ານີ້ເປັນນາຍທະຫານໃນກອງທັບ ຜູ້ນ້ອຍກໍເປັນນາຍຮ້ອຍ ຜູ້ໃຫຍ່ກໍເປັນນາຍພັນ

15 ເຫລົ່ານີ້ເປັນຄົນທີ່ຂ້າມແມ່ນໍ້າຈໍແດນໃນເດືອນແຮກ ເມື່ອນໍ້າຖ້ວມຝັ່ງທັງສິ້ນ ແລະໃຫ້ຄົນທີ່ຢູ່ໃນລຸ່ມແມ່ນໍ້າ
ແຕກໜີໄປທາງທິດຕາເວັນອອກແລະທິດຕາເວັນຕົກ

16 ມີຄົນໃນເຜົ່າເບັນຢາມິນ ແລະຢູດາມາເຝົ້າດາວິດໃນທີ່ກໍາບັງເຂັ້ມແຂງ

17 ດາວິດຊິ່ງອອກໄປຕ້ອນຮັບເຂົາ ແລະກ່າວກັບເຂົາວ່າ, "ຖ້າທ່ານທັງຫລາຍມາເໝືອນມິດເພື່ອຊ່ວຍຂ້າພະ
ເຈົ້າໃຫ້ແກ່ສັດຕຣູຂອງຂ້າພະເຈົ້າ ເຖິງແມ່ນວ່າໃນມືຂອງຂ້າພະເຈົ້າບໍ່ມີຄວາມຜິດໃດໆກໍຂໍໃຫ້ພຣະຜູ້ເປັນເຈົ້າ
ແຫ່ງບັນພະບຸຣຸດຂອງເຮົາທັງຫລາຍທອດພຣະເນດ ແລະຊົງກ່າວໂທດທ່ານທັງຫລາຍເຖີດ"

18 ແລ້ວພຣະວິນຍານໄດ້ມາເໜືອ ອາມາຊັຍຫົວໜ້າຂອງຄົນສາມສິບນັ້ນ ແລະເຂົາທູນວ່າ, "ຂ້າແດ່ດາວິດ ຂ້າ
ພຣະອົງທັງຫລາຍເປັນຂອງພຣະອົງ ແລະຢູ່ກັບພຣະອົງ ຂ້າແດ່ບຸດເຈສຊີ ສັນຕິສຸກ ສັນຕິສຸກຈົ່ງມີແກ່ພຣະອົງ
ແລະສັນຕິສຸກຈົ່ງມີແກ່ຜູ້ຊ່ວຍຂອງພຣະອົງ ເພາະວ່າພຣະເຈົ້າຊົງອຸປຖັມພຣະອົງ" ແລ້ວດາວິດຊົງຮັບເຂົາທັງ
ຫລາຍໄວ້ ແລະຊົງຕັ້ງໃຫ້ເປັນນາຍທະຫານໃນກອງທັບຂອງພຣະອົງ

19 ຄົນເຜົ່າມານັສເຊເໝືອນກັນໄດ້ຫລົບໜີໄປເຂົ້າຝ່າຍດາວິດ ເມື່ອພຣະອົງຍົກມາກັບຄົນຟີລິສຕິນ ເພື່ອທໍາສົງ
ຄາມກັບຊາອູນ (ແຕ່ພວກຝ່າຍດາວິດບໍ່ໄດ້ຊ່ວຍຄົນຟີລິສຕິນ ເພາະຜູ້ຄອບຄອງຂອງຄົນຟີລິສຕິນໄດ້ຫາລືກັນ

ແລະສົ່ງພຣະອົງກັບໄປເສັຽ ບອກວ່າ "ເຂົາຈະຫລົບຫນີໄປຄືນດີກັບຊາອູນນາຍຂອງເຂົາໂດຍເອົາຫົວຂອງ
ເຮົາໄປດ້ວຍ")
20 ຂນະເມື່ອພຣະອົງໄປຍັງຊີກລາກ ຄົນມານັສເຊເຫລົ່ານີ້ຫລົບຫນີໄປສົມທົບພຣະອົງ ຄືອັດນາ ໂຢຊາບັດ ເຢດີອາເອນ ມີ
ຄາເອນ ໂຢຊາບັດ ເຢດີອາເອນ ມີຄາເອນ ໂຢຊາບັດ ເອລີຮູ ແລະຊິນເລທັຍຫົວຫນ້າບັນດາກອງພັນໃນເຜົ່າ
ມານັສເຊ
21 ເຂົາທັງຫລາຍຊ່ອຍເຫລືອດາວິດຕໍ່ສູ້ພວກປຸ້ນ ເພາະເຂົາທັງຫລາຍເປັນທະຫານເອກທະຫານທັງສິ້ນ ແລະເປັນ
ຜູ້ບັງຄັບບັນຊາໃນກອງທັບ
22 ທຸກໆວັນມີຄົນມາເຂົ້າຝ່າຍດາວິດ ເພື່ອຈະຊ່ອຍເຫລືອພຣະອົງ ຈົນເປັນກອງທັບໃຫຍ່ຢ່າງກອງທັບຂອງພຣະ
ເຈົ້າ

**ກອງທັບຂອງດາວິດທີ່ເຮໂບຣນ**

David’s Army at Hebron

23 ຕໍ່ໄປນີ້ເປັນຈຳນວນທະຫານຕິດອາວຸດ ຜູ້ມາຫາດາວິດໃນເມືອງເຮໂບຣນ ເພື່ອຈະມອບຣາຊອານາຈັກຂອງ
ຊາອູນໃຫ້ກັບ ພຣະອົງ ຕາມພຣະຄຳຂອງພຣະຜູ້ເປັນເຈົ້າ
24 ຄົນຢູດາທີ່ຖືໂລ່ແລະຫອກມີຫົກພັນແປດຮ້ອຍຄົນ ເປັນທະຫານຕິດອາວຸດ
25 ຈາກຄົນຊີເມໂອນ ມີທະຫານເອກທະຫານຊຳນານເສິກເຈັດພັນນຶ່ງຮ້ອຍຄົນ
26 ຈາກຄົນເລວີສີ່ພັນຫົກຮ້ອຍຄົນ
27 ເຢຮົວອາດາເປັນຫົວຫນ້າເຊື້ອສາຍຂອງອາໂຣນ ມີຄົນມາກັບທ່ານສາມພັນເຈັດຮ້ອຍຄົນ
28 ຊາໂດກທະຫານເອກທະຫານຫນຸ່ມ ແລະຄົນຈາກຕະກູນຂອງເຂົາເອງເປັນຜູ້ບັງຄັບບັນຊາຊາວສອງຄົນ
29 ຈາກຄົນເບັນຢາມິນຍາດພີ່ນ້ອງຂອງຊາອູນສາມພັນຄົນ ຊຶ່ງແຕ່ກ່ອນນີ້ຈຳນວນຫລາຍ ຈົ່ງຮັກພັກດີຕໍ່ຣາຊວົງ
ຊາອູນ
30 ຈາກຄົນເອຟຣາອິມ ທະຫານເອກທະຫານກ້າສອງຫມື່ນແປດຮ້ອຍຄົນ ເປັນຄົນມີຊື່ສຽງໃນຕະກູນຂອງເຂົາ
31 ຈາກຄົນມານັສເຊເຄິ່ງເຜົ່າ ນຶ່ງຫມື່ນແປດພັນຄົນ ຜູ້ຊຶ່ງເຂົາບົ່ງຊື່ໄວ້ໃຫ້ມາເຊີນດາວິດໄປເປັນກະສັດ
32 ຈາກເຜົ່າອິສຊາຄາ ມີຜູ້ຮູ້ກາລະ ຊາບວ່າອິສຣາເອນຄວນທຳປະການໃດ ມີຫົວຫນ້າສອງຮ້ອຍຄົນ ແລະຍາດ
ຂອງທັງສິ້ນຢູ່ໃຕ້ບັງຄັບບັນຊາຂອງເຂົາ
33 ຈາກຄົນເຊບູລູນ ມີຫ້າຫມື່ນຄົນທີ່ຝຶກແລ້ວຕຽມພ້ອມເຂົ້າສູ້ຮົບ ພ້ອມດ້ວຍອາວຸດທຸກຢ່າງເພື່ອທຳສົງຄາມເພື່ອ
ຊ່ອຍເຫລືອ ບໍ່ແມ່ນດ້ວຍສອງຈິດສອງໃຈ
34 ຈາກຄົນເຜົ່າເນັຟທາລີ ຜູ້ບັງຄັບບັນຊານຶ່ງພັນ ຊຶ່ງມີຄົນຕິດໂລ່ ແລະຫອກມາດ້ວຍສາມຫມື່ນເຈັດພັນຄົນ
35 ຈາກຄົນເຜົ່າດານ ມີຄົນຕຽມພ້ອມທຳສົງຄາມສອງຫມື່ນແປດພັນຫົກຮ້ອຍຄົນ
36 ຈາກຄົນເຜົ່າອາເຊີ ສີ່ຫມື່ນຄົນຝຶກພ້ອມທີ່ຈະທຳສົງຄາມ
37 ແລະຈາກຟາກຕາເວັນອອກຂອງແມ່ນ້ຳຈໍແດນ ຈາກຄົນເຜົ່າຣູເບນ ແລະຄົນກາດ ແລະຄົນມານັສເຊເຄິ່ງເຜົ່າ
ມີນຶ່ງແສນສອງຫມື່ນຄົນ ຕິດອາວຸດທຸກຢ່າງເພື່ອທຳສົງຄາມ
38 ທະຫານທັງສິ້ນເຫລົ່ານີ້ ພ້ອມທີ່ຈະທຳເສິກ ໄດ້ມາຍັງເຮໂບຣນ ດ້ວຍເຈຕນາເຕັມປ່ຽມທີ່ຈະເຊີນດາວິດເປັນ
ກະສັດເຫນືອອິສຣາເອນທີ່ເຫລືອຢູ່ ກໍເປັນໃຈດຽວກັນທີ່ຈະເຊີນດາວິດເປັນກະສັດ
39 ເຂົາທັງຫລາຍຢູ່ທີ່ນັ້ນກັບດາວິດສາມວັນກິນແລະດື່ມ ເພາະວ່າພີ່ນ້ອງຂອງເຂົາໄດ້ຕຽມໄວ້ໃຫ້ເຂົາ
40 ແລະຜູ້ທີ່ຢູ່ໃກ້ເຂົາທັງຫລາຍດ້ວຍຄືໄກອອກໄປເຖິງອິສຊາຄາ ແລະເຊບູລູນ ແລະເນັຟທາລີໄດ້ຈັດອາຫານບັນ
ທຸກລໍ ອູດ ລາ ແລະງົວກັບສະບຽງອາຫານຫລວງຫລາຍເປັນແປ້ງ ເຂົ້າຈີ່ ຫມາກເດື່ອ ພວງອະງຸ່ນແຫ້ງ ເຫລົ້າ
ອະງຸ່ນ ນ້ຳມັນ ງົວ ແລະແກະ ເພາະວ່າມີຄວາມຊື່ນບານໃນອິສຣາເອນ

## 13 ດາວິດຊົງປະສົງທີ່ຈະນຳຫີບພັນທະສັນຍາມາສູ່ກຸງເຢຣູຊາເລັມ

The Ark Brought from Kiriath-jearim

(2 ຊມອ 6:1-11)

1 ດາວິດໄດ້ຊົງຫາລືກັບນາຍພັນແລະນາຍຮ້ອຍ ກັບຫົວໜ້າທຸກໆຄົນ

2 ແລະດາວິດກ່າວກັບຊຸມນຸມຊົນອິສຣາເອນທັງປວງວ່າ, "ຖ້າທ່ານທັງຫລາຍເຫັນດ້ວຍ ແລະຖ້າເປັນນ້ຳພຣະ
ທັຍຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ ກໍໃຫ້ເຮົາທັງຫລາຍສົ່ງຄົນໄປຫາພີ່ນ້ອງຂອງເຮົາ ຜູ້ທີ່ເຫລືອຢູ່ໃນ
ແຜ່ນດິນອິສຣາເອນທັງສິ້ນ ໃຫ້ໄປຍັງປະໂຣຫິດແລະຄົນເລວີດ້ວຍ ຜູ້ຊຶ່ງຢູ່ໃນຫົວເມືອງຂອງເຂົາທີ່ມີທົ່ງຫຍ້າ
ເພື່ອໃຫ້ເຂົາທັງຫລາຍມາຫາເຮົາພ້ອມກັນ

3 ແລະໃຫ້ເຮົາທັງຫລາຍນຳຫີບແຫ່ງພຣະເຈົ້າຂອງເຮົາມາຍັງເຮົາອີກ ເພາະເຮົາທັງຫລາຍບໍ່ໄດ້ໄຕ່ຖາມເຖິງໃນ
ສມັຍຂອງຊາອູນ"

4 ຊຸມນຸມຊົນທັງໝົດນັ້ນກໍຕົກລົງທີ່ຈະກະທຳຕາມ ເພາະສິ່ງນັ້ນເປັນສິ່ງທີ່ຊອບໃນສາຍຕາຂອງປະຊາຊົນ

**ດາວິດສະເດັດໄປຮັບຫີບພຣະສັນຍາ**

5 ເພາະສະນັ້ນດາວິດຈຶ່ງປະຊຸມອິສຣາເອນທັງໝົດຕັ້ງແຕ່ຊີໂຮຣ໌ຫ້ວຍນ້ຳແຫ່ງເອຢິບເຖິງທາງເຂົ້າເມືອງເລໂບ
ຮາມາດ ເພື່ອຈະເຊີນຫີບແຫ່ງພຣະເຈົ້າມາຈາກກີຣິອາດເຢອາຣິມ

6 ດາວິດກັບອິສຣາເອນທັງປວງຂຶ້ນໄປຍັງບາອາລາ ຄືກີຣິອາດເຢອາຣິມຊຶ່ງເປັນຂອງຢູດາ ເພື່ອຈາກທີ່ນັ້ນຈະໄດ້
ເຊີນຫີບຂອງພຣະເຈົ້າ ຄືພຣະຜູ້ເປັນເຈົ້າຜູ້ປະທັບເໜືອເຊຣູບິມອັນເປັນຫີບທີ່ເອີ້ນກັນຕາມພຣະນາມ

7 ແລະເຂົາທັງຫລາຍກໍບັນທຸກຫີບຂອງພຣະເຈົ້າໄປໃນກວຽນຄັນໃໝ່ ຈາກເຮືອນຂອງອາບີນາດາບ ແລະອູສ
ຊາກັບອາຣີໂອເປັນຄົນຂັບກວຽນ

8 ແລະດາວິດກັບອິສຣາເອນທັງປວງກໍເບີກບານໃຈຢູ່ຕໍ່ພຣະພັກພຣະເຈົ້າດ້ວຍເຕັມກຳລັງຂອງເຂົາທັງຫລາຍ
ດ້ວຍເພງ ພິນເຂົາຄູ່ ພິນໃຫຍ່ ຣຳມະນາ ແສ່ງ ແລະແກ

9 ແລະເມື່ອເຂົາທັງຫລາຍມາເຖິງລານຟາດເຂົ້າຂອງຄີໂດນ ອູສຊາກໍຢຽດມືອອກກຸມຫີບໄວ້ເພາະງົວສະດຸດ

10 ແລະພຣະພິໂຣດຂອງພຣະເຈົ້າໄດ້ພຸ່ງຂຶ້ນຕໍ່ອູສຊາ ແລະພຣະອົງຊົງປະຫານເຂົາ ເພາະເຂົາຢຽດມືອອກໄປຍັງ
ຫີບນັ້ນ ແລະເຂົາກໍສິ້ນຊີວິດຕໍ່ພຣະພັກພຣະຜູ້ເປັນເຈົ້າ

11 ແລະດາວິດບໍ່ພໍພຣະທັຍເພາະພຣະຜູ້ເປັນເຈົ້າຊົງປະຫັດປະຫານອູສຊາ ເຂົາຈຶ່ງເອີ້ນທີ່ນັ້ນວ່າ ເປເຣສອູສຊາ
ຈົນເຖິງທຸກວັນນີ້

12 ແລະດາວິດຊົງຢ້ານກົວພຣະເຈົ້າໃນວັນນັ້ນ ແລະພຣະອົງກ່າວວ່າ, "ເຮົາຈະນຳຫີບຂອງພຣະເຈົ້າໄປບ້ານໄປ
ເມືອງຢ່າງໃດໄດ້"

13 ດາວິດຈຶ່ງບໍ່ໄດ້ຊົງຍ້າຍຫີບໄປໄວ້ໃນນະຄອນຂອງດາວິດ ແຕ່ຊົງນຳຫີບແວະໄປໄວ້ທີ່ບ້ານໂອເບດເອໂດມ ຄົນ
ກິດຕີ

14 ແລະຫີບຂອງພຣະເຈົ້າໄດ້ຄ້າງຢູ່ກັບຄົວຂອງໂອເບດເອໂດມທີ່ເຮືອນຂອງເຂົາສາມເດືອນ ແລະພຣະຜູ້ເປັນ
ເຈົ້າຊົງອວຍ ພຣະພອນແກ່ຄົວເຮືອນຂອງໂອເບດເອໂດມ ກັບທັງສິ້ນຊຶ່ງເຂົາມີຢູ່

## 14 ຮີຣາມຮັບຮອງຖານະຂອງດາວິດ

David established at Jerusalem

(2 ຊມອ 5:11-16)

1 ຮີຣາມກະສັດເມືອງຕີເຣໄດ້ຊົງສົ່ງຜູ້ສົ່ງຂ່າວມາເຝົ້າດາວິດ ແລະຊົງສົ່ງໄມ້ສົນສີດາ ທັງຊ່າງກໍ່ແລະຊ່າງໄມ້ເພື່ອ
ຈະສ້າງວັງຖວາຍພຣະອົງ
2 ແລະດາວິດຊົງຊາບວ່າພຣະເຈົ້າຊົງສະຖາປະນາພຣະອົງເປັນກະສັດເຫນືອອິສຣາເອນ ເພາະພຣະຣາຊອານາ
ຈັກຂອງພຣະອົງກໍເປັນທີ່ຍົກຍ້ອງຢ່າງຍິ່ງ ເພື່ອເຫັນແກ່ອິສຣາເອນປະຊາກອນຂອງພຣະອົງ

**ຣາຊບຸດຂອງດາວິດ ຊຶ່ງເກີດທີ່ກຸງເຢຣູຊາເລັມ**

3 ແລະດາວິດຊົງຮັບມະເຫສີເພີ່ມຂຶ້ນໃນກຸງເຢຣູຊາເລັມ ແລະດາວິດຊົງມີໂອຣົດແລະທິດາອີກ
4 ຕໍ່ໄປນີ້ເປັນຊື່ຣາຊບຸດຊຶ່ງພຣະອົງຊົງມີໃນເຢຣູຊາເລັມ ຄືຊາມມູອາ ໂຊບັບ ແລະນາທານ ໂຊໂລໂມນ
5 ອິບຮາກ ເອລີຊູອາ ແລະ ເອນເປເລທ
6 ໂນກາ ເນເຟກ ແລະຢາຟີອາ
7 ເອລີຊາມາ ເບເອລີອາດາ ແລະເອລີເຟເລທ

**ດາວິດຮົບຊະນະຄົນຟີລິສຕິນ**

Defeat of the Philistines

(2 ຊມອ 5:17-25)

8 ເມື່ອຄົນຟີລິສຕິນໄດ້ຍິນວ່າດາວິດຊົງຮັບການຫົດສົງເປັນກະສັດເຫນືອອິສຣາເອນທັງປວງແລ້ວ ຄົນຟີລິສຕິນ
ທັງປວງກໍຂຶ້ນໄປສແວງຫາດາວິດ ດາວິດຊົງຊາບກໍສະເດັດອອກໄປສູ້ຮົບກັບເຂົາທັງຫລາຍ
9 ຝ່າຍຄົນຟີລິສຕິນໄດ້ມາປຸ້ນໃນຮ່ອມພູເຣຟາອີມ
10 ແລະດາວິດໄດ້ຊົງທູນຖາມພຣະເຈົ້າວ່າ, “ຄວນທີ່ຂ້າພຣະອົງຈະຂຶ້ນໄປຕໍ່ສູ້ຟີລິສຕິນຫລື ພຣະອົງຈະຊົງມອບ
ເຂົາໄວ້ໃນມືຂອງຂ້າພຣະອົງຫລື” ແລະພຣະເຈົ້າຊົງຕອບພຣະອົງວ່າ, “ຂຶ້ນໄປເຖີດ ແລະເຮົາຈະມອບເຂົາໄວ້
ໃນມືເຈົ້າ”
11 ແລະພຣະອົງສະເດັດໄປຍັງບາອານເປຣາຊິມ ແລະດາວິດຊົງຊະນະເຂົາທັງຫລາຍທີ່ນັ້ນ ແລະດາວິດສັ່ງວ່າ,
“ພຣະເຈົ້າຊົງຕີກອງທັບສັດຕຣູຂອງຂ້າພະເຈົ້າໃຫ້ທະລຸດັ່ງກະແສນ້ຳທີ່ພຸ່ງໃສ່” ດັ່ງນັ້ນເຂົາຈຶ່ງເອີ້ນທີ່ນັ້ນວ່າ
ບາອານເປຣາຊິມ
12 ເຂົາທັງຫລາຍກໍຖິ້ມຮູບໂຄຣົບຂອງເຂົາເສັຽທີ່ນັ້ນ ແລະດາວິດກໍຊົງມີຄຳສັ່ງ ແລະຮູບໂຄຣົບເຫລົ່ານັ້ນກໍຖືກ
ເຜົາເສັຽຫມົດ
13 ແລະຄົນຟີລິສຕິນຍັງມາປຸ້ນໃນຮ່ອມພູນັ້ນອີກ
14 ແລະເມື່ອດາວິດທູນຖາມພຣະເຈົ້າອີກຄັ້ງນຶ່ງ ພຣະເຈົ້າຊົງກ່າວຕອບພຣະອົງວ່າ, “ເຈົ້າຢ່າຂຶ້ນໄປຕາມເຂົາ ຈົ່ງ
ອ້ອມໄປແລະໂຈມຕີເຂົາດ້ານອື່ນຢູ່ໃກ້ກັບປ່າຕົ້ນໂພ
15 ແລະເມື່ອເຈົ້າໄດ້ຍິນສຽງຂະບວນທັບຢູ່ທີ່ຍອດຫມູ່ຕົ້ນໂພແລ້ວ ຈົ່ງອອກໄປທຳເສິກ ເພາະວ່າພຣະເຈົ້າໄດ້ສະ
ເດັດອອກໄປຂ້າງຫນ້າເພື່ອໂຈມຕີກອງທັບຂອງຄົນຟີລິສຕິນ”
16 ແລະດາວິດຊົງກະທຳຕາມທີ່ພຣະເຈົ້າບັນຊາແກ່ພຣະອົງ ແລະເຂົາທັງຫລາຍໂຈມຕີກອງທັບຄົນຟີລິສຕິນຕັ້ງ
ແຕ່ເມືອງກິເບໂອນຈົນເຖິງເມືອງເກເຊີ
17 ກິດຕິສັບຂອງດາວິດກໍຊ່າລືໄປສູ່ບັນດາປະເທດທັງຫລາຍ ແລະພຣະເຈົ້າຊົງໃຫ້ປະຊາຊາດທັງປວງຢ້ານກົວດາ
ວິດ

## 15 ຊົງນຳຫີບຄຳສັນຍາມາກຸງເຢຣູຊາເລັມ

The Ark Brought to Jerusalem

(2 ຊມອ 6:12-16)

1 ດາວິດຊົງສ້າງພຣະຣາຊວັງຂອງພຣະອົງໃນນະຄອນດາວິດ ແລະພຣະອົງຊົງຕຽມທີ່ໄວ້ສຳລັບຫີບຂອງພຣະເຈົ້າ ແລະຊົງຕັ້ງເຕັນໄວ້ໃຫ້

2 ແລ້ວດາວິດຊົງສັ່ງວ່າ, "ນອກຈາກຄົນເລວີແລ້ວບໍ່ຄວນທີ່ຄົນອື່ນຈະຫາມຫີບຂອງພຣະເຈົ້າ ເພາະວ່າພຣະເຈົ້າຊົງເລືອກເຂົາໃຫ້ຫາມຫີບຂອງພຣະເຈົ້າ ແລະປົວລະບັດພຣະອົງເປັນນິດ"

3 ແລະດາວິດຊົງປະຊຸມອິສຣາເອນທັງຫມົດທີ່ເຢຣູຊາເລັມ ເພື່ອຈະນຳຫີບຂອງພຣະຜູ້ເປັນເຈົ້າມາສູ່ທີ່ຂອງຫີບນັ້ນຊຶ່ງພຣະອົງໄດ້ຊົງຕຽມໄວ້ໃຫ້

4 ແລະດາວິດໄດ້ຊົງຮວບຮວມເຊື້ອສາຍຂອງອາໂຣນແລະຄົນເລວີ

5 ຄືຈາກເຊື້ອສາຍຂອງໂກຮາດ ໄດ້ອູຣິເອນເປັນຫົວຫນ້າພ້ອມກັບພີ່ນ້ອງຂອງເຂົາ ນຶ່ງຮ້ອຍຊາວຄົນ

6 ຈາກເຊື້ອສາຍຂອງເມຣາຣີໄດ້ອາຊັຍຢາເປັນຫົວຫນ້າ ພ້ອມກັບພີ່ນ້ອງຂອງເຂົາສອງຮ້ອຍຊາວຄົນ

7 ຈາກເຊື້ອສາຍຂອງເກີໂຊນໄດ້ ໂຢເອນເປັນຫົວຫນ້າ ກັບພີ່ນ້ອງຂອງເຂົາ ນຶ່ງຮ້ອຍສາມສິບຄົນ

8 ຈາກເຊື້ອສາຍຂອງເອລີຊາຟານໄດ້ ເຊມັຍຢາເປັນຫົວຫນ້າ ກັບພີ່ນ້ອງຂອງເຂົາ ສອງຮ້ອຍຄົນ

9 ຈາກເຊື້ອສາຍຂອງເຮໂບຣນໄດ້ ເອລີເອນເປັນຫົວຫນ້າ ກັບພີ່ນ້ອງຂອງເຂົາ ແປດສິບຄົນ

10 ຈາກເຊື້ອສາຍຂອງອຸສຊີເອນໄດ້ ອັມມີນາດາບເປັນຫົວຫນ້າ ກັບພີ່ນ້ອງຂອງເຂົາ ນຶ່ງຮ້ອຍສິບສອງຄົນ

11 ແລ້ວດາວິດຊົງເອີ້ນຊາໂດກ ແລະປະໂຣຫິດອາບີອາທາ ແລະຄົນເລວີ ຄື ອູຣິເອນ ອາຊັຍຢາ ໂຢເອນ ເຊມັຍຢາ ເອລີເອນ ແລະອັມມີນາດາບ

12 ແລະສັ່ງກັບເຂົາທັງຫລາຍວ່າ ເຈົ້າທັງຫລາຍເປັນຫົວຫນ້າຕະກູນຂອງຄົນເລວີ ຈົ່ງຊຳຣະຕົວຂອງເຈົ້າເສັຽ ທັງເຈົ້າແລະພີ່ນ້ອງຂອງເຈົ້າ ເພື່ອເຈົ້າຈະນຳຫີບຂອງພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນຂຶ້ນມາຍັງສະຖານທີ່ຊຶ່ງເຮົາໄດ້ຈັດຕຽມໄວ້ໃຫ້

13 ເພາະເຈົ້າບໍ່ໄດ້ໄປຫາມເສັຽແຕ່ຄັ້ງແຣກ ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາຈຶ່ງຊົງພຣະພິໂຣດຕໍ່ເຮົາ ເພາະເຮົາບໍ່ໄດ້ສແວງຫາຕາມກົດຫມາຍ

14 ແລ້ວປະໂຣຫິດແລະຄົນເລວີຈຶ່ງໄດ້ຊຳຣະຕົວຂອງເຂົາເພື່ອຈະເຊີນຫີບຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນຂຶ້ນມາ

15 ແລະຄົນເລວີໄດ້ຫາມຫີບຂອງພຣະເຈົ້າດ້ວຍຄານຫາມ ດັ່ງທີ່ໂມເຊໄດ້ສັ່ງເຂົາໄວ້ຕາມພຣະຄຳຂອງພຣະຜູ້ເປັນເຈົ້າ

16 ດາວິດໄດ້ຊົງສັ່ງແກ່ບັນດາຫົວຫນ້າຂອງຄົນເລວີໃຫ້ແຕ່ງຕັ້ງພີ່ນ້ອງຂອງເຂົາ ໃຫ້ເປັນນັກຮ້ອງ ຫລິ້ນເຄື່ອງດົນຕຣີ ມີພິນໃຫຍ່ ພິນເຂົາຄູ່ ແລະແສ່ງ ເພື່ອທຳສຽງດັງດ້ວຍຄວາມຊື່ນບານ

17 ຄົນເລວີຈຶ່ງແຕ່ງຕັ້ງ ເຮມານບຸດໂຢເອນ ແລະພີ່ນ້ອງຂອງເຂົາ ຄືອາສາຟບຸດເບເຣຄີຢາ ແລະຈາກເຊື້ອສາຍຂອງເມຣາຣີພີ່ນ້ອງຂອງເຂົາ ຄືເອທານບຸດກູຊັຍຢາ

18 ແລະພ້ອມກັບເຂົາໄດ້ແຕ່ງຕັ້ງພີ່ນ້ອງຂອງເຂົາໃນອັນດັບສອງຄື ເຊຄາຣີຢາ ຢາອາຊີເອນ ເຊມີຣາໂມດ ເຢຮີເອນ ອູນນີ ເອລີອາບ ເບນັຍຢາ ມາອາເຊຢາ ມັດຕີທີຢາ ເອລີເຟເລຮູ ມິກເນຢາ ແລະໂອເບເອໂດມ ແລະເຢອີເອນເປັນຄົນເຝົ້າປະຕູ

19 ນັກຮ້ອງຄື ເຮມານ ອາສາບ ເອທານເປັນຄົນຕີແສ່ງທອງສຳຣິດ

20 ເຊຄາຣີຢາ ອາຊີເອນ ເຊມີຣາໂມດ ເຢຮີເອນ ອູນນີ ເອລີອາບ ມາອາຊັນຢາ ແລະເບນັຍຢາ ຫລິ້ນພິນໃຫຍ່ຕາມສຳນຽງອາລາໂມທ

21 ແຕ່ມັດຕີທີຢາ ເອລີເຟເລຮູ ມິກເນຢາ ໂອເບດເອໂດມ ເຢອີເອນ ແລະອາຊາຊີຢາເປັນຜູ້ນຳດ້ວຍພິນເຂົາຄູ່ຕາມສຳນຽງເຊມີນິທ

22 ເຄນານີຢາຫົວຫນ້າຂອງຄົນເລວີໃນເຣື່ອງເພງເປັນຜູ້ອຳນວຍການເພງ ເພາະເຂົາເຂົ້າໃຈດີ

23 ເບເຣຄີຢາ ແລະເອນການາເປັນນາຍປະຕູເຝົ້າຫີບ
24 ເຊບານີຢາ ເຢຊາຟັດ ເນທານເອນ ອາມາຊັຍ ເຊຄາຣີຢາ ເບນັຍຢາ ແລະເອລີເອເຊີປະໂຣຫິດໄດ້ເປົ່າແກຫນ້າ
ຫີບຂອງພຣະເຈົ້າ ໂອເບດເອໂດມ ແລະເຢຮີຢາເປັນນາຍປະຕູເຝົ້າຫີບນຳ
25 ດາວິດແລະບັນດາຜູ້ໃຫຍ່ຂອງອິສຣາເອນ ແລະຜູ້ບັນຊາກອງພັນຈຶ່ງໄດ້ໄປນຳຫີບຄຳສັນຍາຂອງພຣະຜູ້
ເປັນເຈົ້າຂຶ້ນຈາກເຮືອນຂອງໂອເບດເອໂດມດ້ວຍຄວາມຍິນດີ
26 ແລະເພາະພຣະເຈົ້າຊົງຊ່ອຍຄົນເລວີຜູ້ຫາມຫີບຄຳສັນຍາຂອງພຣະເຈົ້າ ເຂົາທັງຫລາຍກໍໄດ້ຖວາຍເຄື່ອງບູຊາ
ເປັນງົວເຖິກເຈັດໂຕ ແລະແກະເຖິກເຈັດໂຕ
27 ດາວິດຊົງສລອງພຣະອົງຜ້າປ່ານເນື້ອລະອຽດ ທັງຄົນເລວີທັງປວງຜູ້ຫາມຫີບ ແລະນັກຮ້ອງ ແລະເຄນານີຢາຜູ້
ອຳນວຍການເພງຂອງນັກຮ້ອງ ແລະດາວິດຊົງເອໂຟດຜ້າປ່ານ
28 ດັ່ງນີ້ແຫລະຄົນອິສຣາເອນທັງປວງໄດ້ນຳຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າຂຶ້ນມາດ້ວຍສຽງໂຮ່ຮ້ອງ ສຽງເປົ່
າເຂົາ ສຽງແກ ແລະແສ່ງ ແລະທຳເພງສຽງດັງດ້ວຍພິນໃຫຍ່ແລະພິນເຂົາຄູ່
29 ແລະເມື່ອຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າມາເຖິງນະຄອນດາວິດແລ້ວ ມີການຣາຊທິດາຂອງຊາອູນໄດ້ຊ່ອງ
ແນມເບິ່ງໄປທາງປ່ອງຢ້ຽມ ເຫັນກະສັດດາວິດຊົງເຕັ້ນຣຳ ແລະຊົງລ້າເລີງຢູ່ ພຣະນາງກໍມີດູຫມິ່ນພຣະອົງ

## 16

Chapter 16

1 ແລະເຂົາທັງຫລາຍໄດ້ນຳຫີບຂອງພຣະເຈົ້າເຂົ້າມາ ວາງໄວ້ພາຍໃນເຕັນຊຶ່ງດາວິດໄດ້ຊົງຕັ້ງໄວ້ໃຫ້ ແລະເຂົາ
ທັງຫລາຍໄດ້ຖວາຍເຄື່ອງເຜົາບູຊາແລະເຄື່ອງສານຕິບູຊາຕໍ່ພຣະເຈົ້າ
2 ແລະເມື່ອດາວິດຊົງຖວາຍເຄື່ອງເຜົາບູຊາແລະເຄື່ອງສານຕິບູຊາແລ້ວ ພຣະອົງຊົງອວຍພຣະພອນແກ່ປະຊາ
ຊົນໃນພຣະນາມພຣະຜູ້ເປັນເຈົ້າ
3 ແລະຊົງຢາຍເຂົ້າຈີ່ຄົນລະກ້ອນ ຊີ້ນຄົນລະສ່ວນ ແລະເຂົ້າຈີ່ອະງຸ່ນແຫ້ງຄົນລະອັນ ແກ່ບັນດາປະຊາຊົນອິສຣາ
ເອນທັງຊາຍແລະຍິງ
4 ແລະພຣະອົງຊົງຕັ້ງຄົນເລວີບາງຄົນໃຫ້ເປັນຜູ້ບົວລະບັດຫນ້າຫີບຂອງພຣະຜູ້ເປັນເຈົ້າ ໃຫ້ທູນຍ້ອງຍໍພຣະກຽດ
ແລະສັຣເສີນພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນ
5 ອາສາບເປັນຫົວຫນ້າ ແລະຮອງທ່ານຄື ເຊຄາຣີຢາ ເຢອີເອນ ເຊມີຣາໂມດ ເຢຮີເອນ ມັດຕີທີຢາ ເອລີອາບ ເບ
ນັຍຢາ ໂອເບດເອໂດມ ແລະເຢອີເອນ ຜູ້ຊຶ່ງຈະຫລິ້ນພິນໃຫຍ່ແລະພິນເຂົາຄູ່ ອາສາບເປັນຄົນຕີແສ່ງ
6 ແລະເບນັຍຢາກັບຢາຮາຊີເອນປະໂຣຫິດຈະເປົ່າແກເລື້ອຍໄປຫນ້າຫີບຄຳສັນຍາຂອງພຣະເຈົ້າ

### ເພງສັຣເສີນໂມທະນາຂອງດາວິດ

David’s Psalm of thanksgiving

**(ພສສ 96:1-13; 105:1-15; 106:1, 47-48)**

7 ແລ້ວໃນວັນນັ້ນດາວິດຊົງກຳຫນົດເປັນຄັ້ງແຣກໃຫ້ມີການຮ້ອງເພງໂມທະນາຖວາຍແດ່ພຣະຜູ້ເປັນເຈົ້າ ໂດຍ
ອາສາບແລະພີ່ນ້ອງຂອງເຂົາ
8 ຈົ່ງໂມທະນາພຣະຄຸນພຣະຜູ້ເປັນເຈົ້າ ແລະຮ້ອງທູນອອກພຣະນາມພຣະອົງ ຈົ່ງໃຫ້ບັນດາພຣະຣາຊກິດຂອງ
ພຣະອົງແຈ້ງແກ່ຊົນຊາດທັງຫລາຍ
9 ຈົ່ງຮ້ອງເພງຖວາຍພຣະອົງ ຮ້ອງເພງສະດຸດີຖວາຍພຣະອົງ ຈົ່ງເລົ່າເຖິງການອັສຈັນທັງສິ້ນຂອງພຣະອົງ
10 ຈົ່ງອວດພຣະນາມບໍຣິສຸດຂອງພຣະອົງ ໃຫ້ຈິດໃຈຂອງບັນດາຜູ້ສແວງຫາພຣະຜູ້ເປັນເຈົ້າ ຊົມຊື່ນ
11 ຈົ່ງສແວງຫາພຣະຜູ້ເປັນເຈົ້າ ແລະພຣະກຳລັງຂອງພຣະອົງ ສແວງຫາພຣະພັກຂອງພຣະອົງເລື້ອຍໄປ

12 ຈົ່ງລະນຶກເຖິງການອັສຈັນຊຶ່ງພຣະອົງຊົງກະທຳການອັສຈັນ ແລະຄຳພິພາກສາແຫ່ງພຣະໂອດຂອງພຣະອົງ
13 ໂອ ເຊື້ອສາຍຂອງອິສຣາເອນ ຜູ້ຮັບໃຊ້ຂອງພຣະອົງ ເຊື້ອສາຍຂອງຢາໂຄບ ຜູ້ເລືອກໄວ້ຂອງພຣະອົງ
14 ພຣະອົງຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ ຄຳພິພາກສາຂອງພຣະອົງຢູ່ທົ່ວໄປໃນແຜ່ນດິນໂລກ
15 ຈົ່ງຈົດຈຳພັນທະສັນຍາຂອງພຣະອົງຢູ່ເປັນນິດ ຄືພຣະຄຳທີ່ພຣະອົງຊົງສັ່ງໄວ້ຕລອດທົ່ວພັນຊາດເຊື້ອສາຍ
16 ຄືຄຳຫມັ້ນສັນຍາຊຶ່ງພຣະອົງຊົງກະທຳໄວ້ກັບອັບຣາຮາມ  ພຣະສັນຍາຊຶ່ງຊົງປະຕິຍານໄວ້ກັບອີຊາກ
17 ຊຶ່ງພຣະອົງຊົງຢືນຢັນອີກກັບຢາໂຄບໃຫ້ເປັນກົດເກນແກ່ອິສຣາເອນ ໃຫ້ເປັນຄຳຫມັ້ນສັນຍານິຣັນ
18 ວ່າ, “ເຮົາຈະໃຫ້ແຜ່ນດິນການາອານແກ່ເຈົ້າ ເປັນສ່ວນມໍຣະດົກຂອງເຈົ້າທັງຫລາຍ”
19 ເມື່ອເຈົ້າທັງຫລາຍຍັງມີຄົນຈຳນວນນ້ອຍ ຈຳນວນນ້ອຍຈິງ ຍັງເປັນແຕ່ຄົນອາສັຍຢູ່ໃນນັ້ນ
20 ພະເນຈອນໄປຈາກປະຊາຊາດນີ້ເຖິງປະຊາຊາດນັ້ນ ຈາກຣາຊອານາຈັກນີ້ເຖິງອີກຊົນຊາກນຶ່ງ
21 ພຣະອົງບໍ່ໄດ້ຊົງຍອມໃຫ້ຜູ້ໃດບີບບັງຄັບເຂົາ ພຣະອົງຊົງຂນາບກະສັດຫລາຍອົງດ້ວຍເຫັນແກ່ເຂົາ
22 ວ່າ, “ຢ່າແຕະຕ້ອງບັນດາຜູ້ທີ່ເຮົາເຈີມໄວ້ ຢ່າທຳອັນຕະລາຍແກ່ຜູ້ປະກາດພຣະທັມຂອງເຮົາ”
23 ແຜ່ນດິນໂລກທັງສິ້ນ ຈົ່ງຮ້ອງເພງຖວາຍພຣະຜູ້ເປັນເຈົ້າ ຈົ່ງປະກາດຄວາມລອດພົ້ນຂອງພຣະອົງທຸກໆວັນ
24 ຈົ່ງເລົ່າເຖິງພຣະສະງ່າຣາສີຂອງພຣະອົງ ຖ້າມກາງຊົນຊາດທັງຫລາຍ
25 ເພາະພຣະຜູ້ເປັນເຈົ້ານັ້ນຍິ່ງໃຫຍ່ ແລະສົມຄວນຈະສັຣເສີນຢ່າງຍິ່ງ ພຣະອົງຊົງເປັນທີ່ເກງກົວເຫນືອພຣະທັງ
ປວງ
26 ເພາະພຣະທັງປວງຂອງຊົນຊາດທັງຫລາຍເປັນຮູບໂຄຣົບ ແຕ່ພຣະຜູ້ເປັນເຈົ້າຊົງສ້າງຟ້າສວັນ
27 ກຽດແລະສະງ່າຣາສີມີຢູ່ຕໍ່ພຣະພັກພຣະອົງ ກຳລັງແລະຄວາມຊື່ນບານຢູ່ໃນສະຖານທີ່ປະທັບຂອງພຣະອົງ
28 ໂອ ຕະກູນຂອງຊົນຊາດທັງຫລາຍເອີຍ ຈົ່ງຖວາຍແດ່ພຣະຜູ້ເປັນເຈົ້າ ຈົ່ງຖວາຍພຣະສະງ່າຣາສີ ແລະກຳລັງ
ແດ່ພຣະຜູ້ເປັນເຈົ້າ
29 ຈົ່ງມອບພຣະສງ່າຣາສີຊຶ່ງຄວນແກ່ພຣະນາມຂອງພຣະອົງແດ່ພຣະຜູ້ເປັນເຈົ້າ ຈົ່ງນຳເຄື່ອງຖວາຍບູຊາມາເຂົ້າ
ເຝົ້າພຣະອົງ ຈົ່ງປະດັບກາຍດ້ວຍເຄື່ອງບໍຣິສຸດນະມັສການພຣະຜູ້ເປັນເຈົ້າ
30 ຊາວໂລກທັງຫລາຍເອີຍ ຈົ່ງຕົວສັ່ນຕໍ່ພຣະພັກພຣະອົງ ພິພົບຖືກສະຖາປະນາແລ້ວຈະບໍ່ຫວັ່ນໄຫວເລີຍ
31 ຈົ່ງໃຫ້ຟ້າສວັນຍິນດີ ແລະແຜ່ນດິນໂລກຊົມຊື່ນ ໃຫ້ເຂົາເວົ້າໃນຫມູ່ບັນດາປະຊາຊາດວ່າ, “ພຣະຜູ້ເປັນເຈົ້າຊົງ
ຄອບຄອງ”
32 ໃຫ້ທະເລສນັ່ນຫວັ່ນໄຫວກັບສິ່ງທັງປວງທີ່ຢູ່ໃນນັ້ນ ໃຫ້ທົ່ງນາພາກັນຊົມຊື່ນຍິນດີກັບທຸກສິ່ງທຸກຢ່າງທີ່ຢູ່ໃນນັ້ນ
33 ແລ້ວຕົ້ນໄມ້ທັງສິ້ນຂອງປ່າໄມ້ ຈະຮ້ອງເພງດ້ວຍຄວາມຊື່ນບານ ຕໍ່ພຣະພັກພຣະຜູ້ເປັນເຈົ້າ ດ້ວຍພຣະອົງສະ
ເດັດມາພິພາກສາໂລກ
34 ຈົ່ງໂມທະນາຂອບພຣະຄຸນພຣະຜູ້ເປັນເຈົ້າ ເພາະພຣະອົງປະເສີດ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳ
ຣົງຢູ່ເປັນນິດ
35 ທ່ານຈົ່ງກ່າວວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າແຫ່ງຄວາມລອດພົ້ນຂອງຂ້າພຣະອົງທັງຫລາຍ ຂໍຈົ່ງຊ່ອຍຂ້າພຣະ
ອົງທັງຫລາຍໃຫ້ລອດ ແລະ ຂໍຊົງຮວບຮວມຂ້າພຣະອົງທັງປວງຈາກປະຊາຊາດທັງຫລາຍ ເພື່ອຂ້າພຣະອົງທັງ
ຫລາຍຈະໂມທະນາຂອບພຣະຄຸນພຣະນາມບໍຣິສຸດຂອງພຣະອົງແລະສະງ່າຣາສີໃນການສັຣເສີນພຣະອົງ
36 ຈົ່ງຖວາຍສາທຸການແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນ ແຕ່ນິຣັນການຈົນເຖິງນິຣັນການ ແລ້ວປະຊາ
ຊົນທັງປວງໄດ້ກ່າວວ່າ, “ອາແມນ” ແລະໄດ້ພ້ອມພາກັນສັຣເສີນພຣະຜູ້ເປັນເຈົ້າ

**ຊົງແຕ່ງຕັ້ງຄົນເລວີປະຈຳຫີບຄຳສັນຍາ**

Regular Worship Maintained

37 ດາວິດຈຶ່ງຊົງໃຫ້ອາສາບ ແລະພີ່ນ້ອງຂອງທ່ານຢູ່ທີ່ນັ້ນຕໍ່ຫນ້າຫີບຄໍາສັນຍາຂອງພຣະຜູ້ເປັນເຈົ້າ ໃຫ້ປົວລະບັດ
ຢູ່ຫນ້າຫີບນັ້ນເລື້ອຍໄປຕາມງານປະຈໍາວັນທີ່ຕ້ອງທໍາ
38 ທັງໂອເບດເອໂດມ ແລະພີ່ນ້ອງຫົກສິບແປດຄົນຂອງທ່ານດ້ວຍ ຝ່າຍໂອເບດເອໂດມບຸດເຢດູທູນກັບໂຮຊາໃຫ້
ເປັນຄົນເຝົ້າປະຕູ
39 ແລະພຣະອົງຊົງໃຫ້ປະໂຣຫິດຊາໂດກ ກັບພີ່ນ້ອງຂອງທ່ານຜູ້ເປັນປະໂຣຫິດຢູ່ຫນ້າທໍາເຕັນແຫ່ງພຣະຜູ້ເປັນເຈົ້າ
ຊຶ່ງຢູ່ໃນສະຖານນະມັສການທີ່ສູງເມືອງກີເບໂອນ
40 ເພື່ອຖວາຍເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າ ເທິງແທ່ນເຄື່ອງເຜົາບູຊາໃນຕອນເຊົ້າຕອນແລງສເມີ ຕາມຊຶ່ງ
ໄດ້ບັນທຶກໄວ້ທັງສິ້ນໃນທັມບັນຍັດຂອງພຣະຜູ້ເປັນເຈົ້າຊຶ່ງພຣະອົງຊົງສັ່ງອິສຣາເອນ
41 ເຮມານ ແລະເຢດູທູນຢູ່ກັບເຂົາທັງຫລາຍ ແລະບັນດາຄົນອື່ນທີ່ຖືກເລືອກ ແລະບົ່ງຊື່ໄວ້ໃຫ້ຖວາຍໂມທະນາ
ແດ່ພຣະຜູ້ເປັນເຈົ້າ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດໍາຣົງຢູ່ເປັນນິດ
42 ແລະພ້ອມກັບເຂົາ ເຮມານແລະເຢດູທູນ ມີແກແລະແສ່ງເພື່ອບັນເລງ ແລະເຄື່ອງດົນຕຣີປະກອບເພງຖວາຍ
ແດ່ພຣະຜູ້ເປັນເຈົ້າ ລູກຫລານຂອງເຢດູທູນໄດ້ຮັບແຕ່ງຕັ້ງໃຫ້ປະຈໍາປະຕູ
43 ແລະປະຊາຊົນທັງປວງຕ່າງກໍຈາກໄປຍັງບ້ານຂອງຕົນ ແລະດາວິດສະເດັດກັບເພື່ອອວຍພອນແກ່ເຊື້ອພຣະວົງ
ຂອງພຣະອົງ

## 17 ຄໍາຫມັ້ນສັນຍາຂອງພຣະເຈົ້າກັບດາວິດ

God's Covenant with David

(2 ຊມອ 7:1-17)

1 ຢູ່ມາເມື່ອດາວິດປະທັບໃນພຣະຣາຊວັງຂອງພຣະອົງ ດາວິດກ່າວກັບນາທານຜູ້ປະກາດພຣະທັມວ່າ, “ເບິ່ງ
ແມ, ເຮົາຢູ່ໃນບ້ານທີ່ທໍາດ້ວຍໄມ້ສົນ ແຕ່ຫີບຄໍາສັນຍາແຫ່ງພຣະເຈົ້າຢູ່ພາຍໃຕ້ຜ້າກັ້ງເຕັນ”
2 ແລະນາທານທູນດາວິດວ່າ, “ຂໍພຣະອົງຊົງກະທໍາທັງສິ້ນຕາມພຣະປະສົງຂອງພຣະອົງ ເພາະພຣະເຈົ້າຊົງສະ
ຖິດກັບພຣະອົງ”
3 ແຕ່ຢູ່ມາໃນຄືນວັນນັ້ນເອງ ພຣະຄໍາຂອງພຣະເຈົ້າມາເຖິງນາທານວ່າ,
4 “ຈົ່ງໄປບອກດາວິດຜູ້ຮັບໃຊ້ຂອງເຮົາວ່າ ພຣະເຈົ້າຊົງກ່າວໄວ້ດັ່ງນີ້ວ່າ ເຈົ້າຢ່າສ້າງວິຫານໃຫ້ເຮົາຢູ່ເພາະເຮົາບໍ່
ເຄີຍຢູ່ໃນວິຫານນັບແຕ່ວັນທີ່ເຮົາພາອິສຣາເອນຂຶ້ນມາຈົນເຖິງທຸກວັນນີ້ ແຕ່ເຮົາໄດ້ໄປຈາກເຕັນນີ້ເຖິງເຕັນນັ້ນ
ແລະຈາກເຕັນສັກສິດແຫ່ງນີ້ເຖິງແຫ່ງນັ້ນ
5 ໃນທີ່ຕ່າງໆທີ່ເຮົາເຄື່ອນໄປມາກັບອິສຣາເອນທັງຫມົດ ເຮົາໄດ້ເຄີຍເວົ້າຈັກຄໍາກັບຜູ້ປົກຄອງຂອງອິສຣາ
ເອນຄົນໃດ ຜູ້ທີ່ເຮົາໄດ້ບັນຊາໃຫ້ເຂົາລ້ຽງດູໄພ່ພົນຂອງເຮົາຫລືວ່າ ເປັນຫຍັງເຈົ້າບໍ່ໄດ້ສ້າງວິຫານດ້ວຍໄມ້ສົນ
ໃຫ້ແກ່ເຮົາ”
6 ເຫດສະນັ້ນ ບັດນີ້ຈົ່ງກ່າວແກ່ດາວິດຜູ້ຮັບໃຊ້ຂອງເຮົາວ່າ, “ພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າ “ເຮົາໄດ້ເອົາ
ເຈົ້າມາຈາກທົ່ງຫຍ້າຈາກການຕາມຝູງແບ້ ແກະ ເພື່ອໃຫ້ເຈົ້າເປັນເຈົ້າເຫນືອອິສຣາເອນປະຊາກອນຂອງເຮົາ
7 ແລະເຮົາໄດ້ຢູ່ກັບເຈົ້າບໍ່ວ່າເຈົ້າຈະໄປທີ່ໃດ ແລະໄດ້ກໍາຈັດສັດຕຣູຂອງເຈົ້າໃຫ້ພົ້ນຫນ້າເຈົ້າ ແລະເຮົາຈະກະ
ທໍາໃຫ້ເຈົ້າມີຊື່ສຽງຍິ່ງໃຫຍ່ ຢ່າງກັບຊື່ສຽງຂອງຜູ້ຍິ່ງໃຫຍ່ໃນໂລກ
8 ແລະເຮົາຈະກໍານົດທີ່ນຶ່ງໃຫ້ອິສຣາເອນໄພ່ພົນຂອງເຮົາ ແລະເຮົາຈະປູກຝັງເຂົາໄວ້ ເພື່ອເຂົາທັງຫລາຍຈະໄດ້
ຢູ່ໃນທີ່ຂອງເຂົາເອງ ແລະບໍ່ຕ້ອງຖືກກວນໃຈອີກ ແລະຄົນຊົ່ວຈະບໍ່ມາຕີປຸ້ນເຂົາດັ່ງແຕ່ກ່ອນມາ

9 ຕັ້ງແຕ່ສມັຍ ເມື່ອເຮົາຕັ້ງຜູ້ປົກຄອງເຫນືອອິສຣາເອນປະຊາກອນຂອງເຮົາ ແລະເຮົາຈະປາບປາມສັດຕຣູທັງ
ສິ້ນຂອງເຈົ້າ ນອກຈາກນີ້ເຮົາກ່າວແກ່ເຈົ້າວ່າ ພຣະຜູ້ເປັນເຈົ້າຈະຊົງໃຫ້ເຈົ້າມີຣາຊວົງ
10 ຢູ່ມາເມື່ອວັນຂອງເຈົ້າຄົບແລ້ວ ເຈົ້າຈະໄປຢູ່ກັບບັນພະບຸຣຸດຂອງເຈົ້າ ເຮົາຈະໃຫ້ບຸດຊາຍຄົນນຶ່ງຂອງເຈົ້າເກີດ
ຂຶ້ນສືບຕໍ່ຈາກເຈົ້າ ຜູ້ຊຶ່ງເກີດມາຈາກຕົວເຈົ້າເອງ
11 ເຂົາຈະເປັນຜູ້ສ້າງວິຫານໃຫ້ເຮົາ ແລະເຮົາຈະສະຖາປະນາບັນລັງຂອງເຂົາໄວ້ເປັນນິດ
12 ເຮົາຈະເປັນບິດາຂອງເຂົາ ແລະເຂົາຈະເປັນບຸດຂອງເຮົາ ເຮົາຈະບໍ່ນຳຄວາມຮັກຫມັ້ນຄົງຂອງເຮົາໄປຈາກເຂົາ
ເສັຽ ຢ່າງທີ່ເຮົາເອົາໄປຈາກຄົນທີ່ຢູ່ກ່ອນຫນ້າເຈົ້ານັ້ນ
13 ແຕ່ເຮົາຈະໃຫ້ເຂົາດຳຣົງຢູ່ໃນວິຫານຂອງເຮົາ ແລະໃນອານາຈັກຂອງເຮົາເປັນນິດ ເຮົາຈະສະຖາປະນາບັນລັງ
ຂອງເຂົາໄວ້ເປັນນິດ"
14 ນາທານກໍກາບທູນດາວິດຕາມຖ້ອຍຄຳເຫລົ່ານີ້ທັງສິ້ນແລະຕາມນິມິດທັງຫມົດ

David's Prayer

(2 ຊມອ 7:18-29)

15 ແລ້ວກະສັດດາວິດກໍສະເດັດເຂົ້າໄປເຝົ້າພຣະຜູ້ເປັນເຈົ້າ ແລະກາບທູນວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະ
ອົງເປັນຜູ້ໃດ ແລະເຊື້ອສາຍຂອງຂ້າພຣະອົງເປັນອັນໃດທີ່ພຣະອົງຊົງນຳຂ້າພຣະອົງມາໄກຈົນເຖິງນີ້
16 ຂ້າແດ່ພຣະຜູ້ເປັນເຈົ້າ ສິ່ງນີ້ເປັນຂອງເລັກນ້ອຍໃນສາຍພຣະເນດຂອງພຣະອົງ ແລະພຣະອົງຍັງຊົງກ່າວເຖິງ
ຣາຊວົງຂອງຂ້າພຣະອົງໃນອານາຄົດອັນໄກນັ້ນ ແລະຊົງມອງເບິ່ງຂ້າພຣະອົງວ່າຂ້າພຣະອົງມີຖານະສູງ ໂອ
ຂ້າແດ່ພຣະເຈົ້າ
17 ແລະດາວິດຈະກ່າວທູນສິ່ງໃດແກ່ພຣະອົງໄດ້ອີກໃນເຣື່ອງກຽດອັນຊົງປະທານແກ່ຜູ້ຮັບໃຊ້ຂອງພຣະອົງ ເພາະ
ພຣະອົງຊົງຮູ້ຈັກຜູ້ຮັບໃຊ້ຂອງພຣະອົງ
18 ຂ້າແດ່ພຣະຜູ້ເປັນເຈົ້າ ເພື່ອຊົງເຫັນແກ່ຜູ້ຮັບໃຊ້ຂອງພຣະອົງ ແລະຕາມນ້ຳພຣະທັຍຂອງພຣະອົງເອງ ພຣະອົງ
ຊົງກະທຳການຍິ່ງໃຫຍ່ນີ້ທັງສິ້ນ ເພື່ອຈະກະທຳໃຫ້ສິ່ງໃຫຍ່ນີ້ເປັນທີ່ຮູ້ກັນທົ່ວໄປ
19 ຂ້າແດ່ພຣະຜູ້ເປັນເຈົ້າ ບໍ່ມີຜູ້ໃດເຫມືອນພຣະອົງ ບໍ່ມີພຣະເຈົ້າອື່ນໃດນອກເຫນືອພຣະອົງ ຕາມທີ່ຂ້າພຣະອົງ
ທັງຫລາຍໄດ້ຍິນກັບຫູຂອງຂ້າພຣະອົງ
20 ປະຊາຊາດອື່ນໃດເທິງແຜ່ນດິນໂລກເຫມືອນອິສຣາເອນປະຊາຊົນຂອງພຣະອົງ ຜູ້ຊຶ່ງພຣະເຈົ້າສະເດັດໄປໄຖ່
ໃຫ້ເປັນປະຊາຊົນຂອງພຣະອົງ ເພື່ອຊົງກະທຳໃຫ້ພຣະອົງມີພຣະນາມຍິ່ງໃຫຍ່ໂດຍສິ່ງທີ່ໃຫຍ່ໂຕຫນ້າສະພຶງ
ກົວໃນການທີ່ຊົງຂັບໄລ່ປະຊາຊາດທັງຫລາຍໃຫ້ພົ້ນຫນ້າປະຊາຊົນຂອງພຣະອົງ ຜູ້ຊຶ່ງພຣະອົງຊົງໄຖ່ມາຈາກ
ເອຢິບ
21 ແລະພຣະອົງຊົງກະທຳໃຫ້ອິສຣາເອນປະຊາຊົນຂອງພຣະອົງເປັນປະຊາຊົນຂອງພຣະອົງເປັນນິດ ແລະຂ້າແດ່
ພຣະຜູ້ເປັນເຈົ້າພຣະອົງຊົງເປັນພຣະເຈົ້າຂອງເຂົາທັງຫລາຍ
22 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍໃຫ້ພຣະຄຳຊຶ່ງພຣະອົງກ່າວກ່ຽວກັບຜູ້ຮັບໃຊ້ຂອງພຣະອົງ ແລະກ່ຽວກັບເຊື້ອພຣະວົງ
ຈົ່ງດຳຣົງຢູ່ເປັນນິດ ແລະຂໍພຣະອົງຊົງກະທຳຕາມທີ່ພຣະອົງສັ່ງແລ້ວນັ້ນເຖີດ
23 ແລະຂໍພຣະນາມຂອງພຣະອົງສະຖາປະນາໄວ້ແລະຍິ່ງໃຫຍ່ຢູ່ເປັນນິດວ່າ, "ພຣະຜູ້ເປັນເຈົ້າຈອມໂຍທາຊົງເປັນ
ພຣະເຈົ້າແຫ່ງອິສຣາເອນ ຄືພຣະເຈົ້າແຫ່ງອິສຣາເອນ ແລະວົງຂອງດາວິດຜູ້ຮັບໃຊ້ຂອງພຣະອົງຈະຖືກສະຖາ
ປະນາໄວ້ຕໍ່ພຣະພັກຂອງພຣະອົງ
24 ເພາະຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ພຣະອົງໄດ້ຊົງສຳແດງແດ່ຜູ້ຮັບໃຊ້ຂອງພຣະອົງວ່າ ພຣະອົງຈະ
ຊົງສ້າງວົງໃຫ້ ເພາະສະນັ້ນຜູ້ຮັບໃຊ້ຂອງພຣະອົງໄດ້ປະສົບຄວາມກ້າຫານທີ່ຈະອ້ອນວອນຕໍ່ພຣະພັກພຣະອົງ

25 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເປັນພຣະເຈົ້າ ແລະພຣະອົງໄດ້ຊົງສັນຍາສິ່ງທີ່ດີນີ້ໃຫ້ແກ່ຜູ້ຮັບໃຊ້ຂອງພຣະອົງ

26 ເພາະສະນັ້ນຂໍໃຫ້ເປັນທີ່ພໍພຣະທັຍພຣະອົງທີ່ຈະຊົງອວຍພຣະພອນແດ່ວົງຂອງຜູ້ຮັບໃຊ້ຂອງພຣະອົງເພື່ອວົງນັ້ນຈະດຳຣົງຢູ່ຕໍ່ພຣະພັກພຣະອົງເປັນນິດ ເພາະວ່າ ຂ້າແດ່ພຣະຜູ້ເປັນເຈົ້າ ສິ່ງໃດທີ່ພຣະອົງຊົງອວຍພຣະພອນສິ່ງນັ້ນກໍໄດ້ຮັບພຣະພອນເປັນນິດ"

## 18 ດາວິດຊົງຂຍາຍຣາຊອານາຈັກຂອງພຣະອົງ

David's Kingdom established and Extended

(2 ຊມອ 8:1-14)

1 ຢູ່ຕໍ່ມາດາວິດຊົງໂຈມຕີຄົນຟີລິສຕິນແລະຊົງປາບປາມເຂົາເສັຽ ຊົງຍຶດເມືອງກາດ ແລະຊົນນະບົດຂອງເມືອງນັ້ນຈາກມືຄົນຟີລິສຕິນ

2 ແລະພຣະອົງຊົງໂຈມຕີໂມອາບ ແລະຄົນໂມອາບກໍເປັນຜູ້ຮັບໃຊ້ຂອງດາວິດແລະນຳບັນນາການມາຖວາຍ

3 ດາວິດຊົງໂຈມຕີຮາດາເອເຊີ ກະສັດຂອງເມືອງໂຊບາ ຕົງໄປເຖິງເມືອງຮາມັທ ຂນະເມື່ອພຣະອົງຊົງສະເດັດໄປຕັ້ງກຳລັງຂອງພຣະອົງທີ່ແມ່ນ້ຳເອີຟຣາດ

4 ແລະດາວິດຊົງຍຶດຣົດຮົບຈາກທ່ານມານຶ່ງພັນຄັນ ພົນມ້າເຈັດພັນ ແລະທະຫານຮາບສອງຫມື່ນ ແລະດາວິດຊົງຕັດເອັນຄະນ່ອງຂາມ້າຣົດຮົບເສັຽສິ້ນ ແຕ່ຊົງເຫລືອໄວ້ໃຫ້ພໍແກ່ຣົດຮົບນຶ່ງຮ້ອຍຄັນ

5 ແລະເມື່ອຄົນຊີເຣັຽ (ອາຣາມ) ແຫ່ງເມືອງດາມັສກັສມາຊ່ອຍຮາດາເດເຊີກະສັດແຫ່ງເມືອງໂຊບາ ດາວິດຊົງປະຫານຄົນຊີເຣັຽເສັຽສອງຫມື່ນສອງພັນຄົນ

6 ແລ້ວດາວິດຊົງຕັ້ງທະຫານປະຈຳປ້ອມໃນຊີເຣັຽແຫ່ງເມືອງດາມັສກັສ ແລະຄົນຊີເຣັຽເປັນຜູ້ຮັບໃຊ້ດາວິດ ແລະນຳບັນນາ ການມາຖວາຍ ດາວິດສະເດັດໄປໃນທີ່ໃດພຣະຜູ້ເປັນເຈົ້າຊົງປະທານໄຊຊະນະແກ່ພຣະອົງທີ່ນັ້ນ

7 ດາວິດຊົງຍຶດໂລ່ທອງຄຳທີ່ຜູ້ຮັບໃຊ້ຂອງຮາດາເດເຊີຖື ແລະຊົງນຳມາທີ່ເຢຣູຊາເລັມ

8 ດາວິດຊົງຍຶດທອງສຳຣິດເປັນອັນມາກຈາກທິບຮາດ ແລະຈາກເມືອງຄູນ ຫົວເມືອງຂອງຮາດາເດເຊີ ຊຶ່ງໂຊໂລໂມນຊົງໃຊ້ສ້າງຖັງນ້ຳທອງສຳຣິດ ແລະເສົາຫານ ແລະເຄື່ອງໃຊ້ທອງສຳຣິດ

9 ເມື່ອໂຕອູກະສັດເມືອງຮາມັທໄດ້ຍິນວ່າດາວິດຊົງໂຈມຕີກອງທັບທັງສິ້ນຂອງຮາດາເດເຊີ ກະສັດແຫ່ງເມືອງໂຊບາແລ້ວ

10 ພຣະອົງຊົງໃຊ້ຮາໂດຣາມບຸດຊາຍຂອງພຣະອົງໄປເຝົ້າດາວິດເພື່ອຮັບສະເດັດ ແລະຖວາຍພຣະພອນທີ່ພຣະອົງຊົງຮົບກັບຮາດາເດເຊີ ແລະຊົງຊະນະ ເພາະວ່າຮາດາເດເຊີໄດ້ສູ້ຮົບກັບ ໂຕອູເລື້ອຍໆ ແລະພຣະອົງໄດ້ສິ່ງຂອງທຸກຢ່າງທີ່ທຳດ້ວຍທອງຄຳ ດ້ວຍເງິນ ແລະດ້ວຍທອງສຳຣິດມາຖວາຍ

11 ແລະກະສັດດາວິດທູນຖວາຍສິ່ງເຫລົ່ານີ້ແກ່ພຣະຜູ້ເປັນເຈົ້າ ພ້ອມກັບເງິນແລະທອງຄຳຊຶ່ງພຣະອົງຊົງນຳມາຈາກປະຊາຊາດທັງປວງ ຈາກເອໂດມ ໂມອາບ ຄົນອັມໂມນ ຄົນຟີລິສຕິນ ແລະອາມາເລກ

12 ແລະອາບີຊັຍບຸດນາງເຊຣູຢາໄດ້ປະຫານຄົນເອໂດມນຶ່ງຫມື່ນແປດພັນຄົນເສັຽໃນຮ່ອມພູເກືອ

13 ແລະທ່ານຕັ້ງທະຫານປະຈຳປ້ອມໃນເອໂດມ ແລະຄົນເອໂດມທັງສິ້ນໄດ້ເປັນຄົນຮັບໃຊ້ຂອງດາວິດ ແລະພຣະຜູ້ເປັນເຈົ້າຊົງປະທານໄຊຊະນະແກ່ດາວິດບໍ່ວ່າພຣະອົງສະເດັດໄປໃນທີ່ໃດ

**ຂ້າຣາຊການຂອງດາວິດ**

14 ດາວິດຈຶ່ງຊົງຄອບຄອງເຫນືອອິສຣາເອນທັງສິ້ນແລະພຣະອົງຊົງໃຫ້ຄວາມຍຸດຕິທັມແລະຄວາມທ່ຽງທັມແກ່ປະຊາຊົນຂອງພຣະອົງທັງສິ້ນ

15 ແລະໂຢອາບບຸດນາງເຊຣູຢາເປັນຜູ້ບັນຊາການກອງທັບ ແລະເຢໂຮຊາຟັດບຸດຂອງອາຮີລູດເປັນເຈົ້າກົມສາ
ຣະບັນ
16 ແລະຊາໂດກບຸດອາຮີຕູບແລະອາຮີເມເລກບຸດອາບີອາທາເປັນປະໂຣຫິດ ແລະຊາວ໌ຊາເປັນຣາຊເລຂາ
17 ແລະເບນັຍຢາບຸດເຢຮົວອາດາຢູ່ເໜືອຄົນເຄເຣ ແລະຄົນເປເຣດ ແລະບັນດາບຸດຊາຍຂອງດາວິດກໍເປັນເຈົ້າ
ໜ້າທີ່ຊັ້ນຫົວໜ້າໃນຣາຊການຂອງກະສັດ

## 19 ຊົງຮົບຊນະຄົນອັມໂມນແລະຄົນຊີເຣັຽ

Defeat of the Ammonites and Arameans

(2 ຊມອ 10:1-19)

1 ແລະຢູ່ຕໍ່ມາພາຍຫລັງນີ້ນາຮັສກະສັດຂອງຄົນອັມໂມນສິ້ນພຣະຊົນ ແລະບຸດຊາຍຂອງພຣະອົງໄດ້ຂຶ້ນປົກຄອງ
ແທນ
2 ແລະດາວິດກ່າວວ່າ, “ເຮົາຈະສັດຊື່ຕໍ່ຮານູນບຸດຊາຍຂອງນາຮັສ ເພາະວ່າບິດາຂອງທ່ານໄດ້ສັດຊື່ຕໍ່ເຮົາ” ດາ
ວິດຈຶ່ງຊົງສົ່ງຜູ້ສື່ຂ່າວໄປເລົ້າໂລມທ່ານກ່ຽວກັບບິດາຂອງທ່ານ ແລະຂ້າຣາຊການຂອງດາວິດກໍມາຍັງຮານູນ
ໃນແຜ່ນດິນຂອງຄົນອັມໂມນ ເພື່ອຈະເລົ້າໂລມທ່ານ
3 ແຕ່ບັນດາເຈົ້ານາຍຂອງຄົນອັມໂມນທູນຮານູນວ່າ, “ພຣະອົງກ່າວວ່າດາວິດສົ່ງຜູ້ເລົ້າໂລມມາຫາພຣະອົງ
ເພາະນັບຖືພຣະຣາຊບິດາຂອງພຣະອົງເຊັ່ນນັ້ນຫລື ຂ້າຣາຊການຂອງທ່ານມາຫາພຣະອົງເພື່ອຄົ້ນຫາແລະ
ຂວ້ຳ ແລະສອດແນມແຜ່ນດິນບໍ່ແມ່ນຫລື”
4 ຮານູນຈຶ່ງຈັບຂ້າຣາຊການຂອງດາວິດ ແລະໂກນໜວດຂ້າງນຶ່ງ ແລະຕັດຂາສົ້ງຈົນຈຳກະໂພກ ແລະປ່ອຍເຂົາ
ກັບໄປ
5 ເມື່ອມີບາງຄົນໄປທູນດາວິດເຖິງເຣື່ອງຄົນເຫລົ່ານັ້ນ ພຣະອົງກໍຊົງໃຊ້ໃຫ້ໄປຮັບເຂົາ ເພາະຄົນເຫລົ່ານັ້ນອາຍ
ຫລາຍ ແລະກະສັດສັ່ງວ່າ, “ຈົ່ງພັກຢູ່ທີ່ເມືອງເຢຣິໂກຈົນກວ່າໜວດຂອງທ່ານທັງຫລາຍຈະຂຶ້ນໄປ ແລ້ວຈຶ່ງ
ຄ່ອຍກັບມາ”
6 ເມື່ອຄົນອັມໂມນເຫັນວ່າເຂົາທັງຫລາຍເປັນທີ່ກຽດຊັງແກ່ດາວິດ ຮານູນ ແລະຄົນອັມໂມນຈຶ່ງສົ່ງເງິນນຶ່ງພັນຕະ
ລັນໄປ ຈ້າງຣົດຮົບ ແລະພົນມ້າຈາກເມໂຊໂປຕາເມັຽຈາກອາຣາມມາອາກາ ແລະຈາກໂຊບາ
7 ເຂົາໄດ້ຈ້າງຣົດຮົບສອງໝື່ນສາມພັນຄັນ ແລະກະສັດແຫ່ງເມືອງມາອາກາ ກັບກອງທັບຂອງທ່ານ ຜູ້ຊຶ່ງມາຕັ້ງ
ຄ້າຍຢູ່ໜ້າເມືອງເມເດບາ ແລະຄົນອັມໂມນກໍຮວບຮວມກັນມາຈາກຫົວເມືອງຂອງເຂົາທັງຫລາຍ ແລະມາ
ທຳສົງຄາມ
8 ເມື່ອດາວິດຊົງຊາບຈຶ່ງໃຊ້ໂຢອາບ ແລະກອງທັບທະຫານເອກທະຫານທັງສິ້ນໄປ
9 ຄົນອັມໂມນອອກມາຈັດທັບທີ່ທາງເຂົ້າປະຕູເມືອງ ແລະບັນດາກະສັດທີ່ຍົກມາຢູ່ທີ່ຊົນນະບົດກາງແຈ້ງຕ່າງ
ຫາກ
10 ເມື່ອໂຢອາບເຫັນວ່າການເສິກນັ້ນຂນາບຢູ່ຂ້າງໜ້າແລະຂ້າງຫລັງ ທ່ານຈຶ່ງຄັດເອົາຄົນອິສຣາເອນທີ່ເລືອກໄວ້
ແລ້ວແລະຈັດທັບເຂົ້າໄປຕໍ່ສູ້ຄົນຊີເຣັຽ (ອາຣາມ)
11 ສ່ວນຄົນຂອງທ່ານທີ່ເຫລືອຢູ່ ທ່ານກໍມອບໄວ້ໃນການລັງຄັບບັນຊາຂອງອາບີຊັຍນ້ອງຊາຍຂອງທ່ານ ຄົນ
ເຫລົ່ານັ້ນກໍຈັດເຂົ້າສູ້ກັບຄົນອັມໂມນ
12 ແລະທ່ານເວົ້າວ່າ, “ຖ້າກຳລັງຄົນຊີເຣັຽແຂງເຫລືອກຳລັງຂອງເຮົາແລ້ວ ເຈົ້າຈົ່ງຊ່ອຍເຮົາ ແຕ່ຖ້າກຳລັງຄົນອັມ
ໂມນແຂງເກີນກຳລັງຂອງເຈົ້າ ເຮົາຈະຊ່ອຍເຈົ້າ

13 ຈົ່ງມີຄວາມກ້າຫານເຖີດ ແລະໃຫ້ເຮົາເປັນລູກຜູ້ຊາຍເພື່ອຊົນຊາດຂອງເຮົາ ແລະເພື່ອຫົວເມືອງຂອງພຣະເຈົ້າ
ຂອງເຮົາ ແລະຂໍພຣະເຈົ້າຊົງກະທຳສິ່ງທີ່ພຣະອົງຊົງເຫັນຊອບເຖີດ”
14 ດັ່ງນັ້ນ ໂຢອາບແລະປະຊາຊົນຜູ້ຢູ່ກັບທ່ານໄດ້ເຂົ້າມາໃກ້ຂ້າງໜ້າຄົນຊີເຣັຽເພື່ອສູ້ຮົບກັນ ແລະເຂົາທັງຫລາຍ
ກໍແຕກໜີໄປຕໍ່ໜ້າທ່ານ
15 ແລະເມື່ອຄົນອັມໂມນເຫັນວ່າຄົນຊີເຣັຽໜີໄປແລ້ວ ເຂົາກໍໜີໄປໃຫ້ພົ້ນໜ້າອາບີຊັຍນ້ອງຊາຍຂອງໂຢອາບ
ດ້ວຍ ແລະເຂົ້າໄປໃນເມືອງ ແລ້ວໂຢອາບກໍກັບມາຍັງເຢຣູຊາເລັມ
16 ແຕ່ເມື່ອຄົນຊີເຣັຽເຫັນວ່າເຂົາຜ່າຍແພ້ແກ່ອິສຣາເອນ ເຂົາຈຶ່ງສົ່ງຜູ້ສົ່ງຂ່າວໄປນຳຄົນຊີເຣັຽ ຊຶ່ງຢູ່ຟາກຕາເວັນ
ອອກຂອງແມ່ນ້ຳເອີຟຣາດມາ ມີໂຊຟາກຜູ້ບັງຄັບບັນຊາການກອງທັບຂອງຮາດາເດເຊີ ເປັນຫົວໜ້າຂອງເຂົາ
ທັງຫລາຍ
17 ແລະເມື່ອມີຄົນກາບທູນດາວິດພຣະອົງກໍຊົງຮວມອິສຣາເອນທັງສິ້ນເຂົ້າດ້ວຍກັນ ແລະຂ້າມແມ່ນ້ຳຈໍແດນມາ
ຫາເຂົາ ແລະຈັດທັບຕໍ່ສູ້ກັບເຂົາ ແລະເມື່ອດາວິດຊົງຈັດທັບເຂົ້າຕໍ່ສູ້ກັບຄົນຊີເຣັຽ ເຂົາທັງຫລາຍຕໍ່ສູ້ກັບພຣະ
ອົງ
18 ແລະຄົນຊີເຣັຽກໍໜີໄປຕໍ່ໜ້າອິສຣາເອນ ແລະດາວິດຊົງປະຫານຄົນຊີເຣັຽຄືຄົນຂອງຣົດຮົບເຈັດພັນຄົນ ແລະ
ທະຫານຮາບສີ່ໝື່ນຄົນ ແລະຂ້າໂຊຟາກຜູ້ບັນຊາການກອງທັບຂອງເຂົາທັງຫລາຍດ້ວຍ
19 ແລະເມື່ອຜູ້ຮັບໃຊ້ຂອງຮາດາເດເຊີເຫັນວ່າເຂົາຜ່າຍແພ້ຕໍ່ອິສຣາເອນ ເຂົາກໍຍອມສງົບສຸກກັບດາວິດ ແລະ
ເປັນເມືອງຂຶ້ນຂອງພຣະອົງ ຄົນຊີເຣັຽຈຶ່ງບໍ່ຊ່ອຍຄົນອັມໂມນອີກຕໍ່ໄປ

## 20 ດາວິດຊົງຍຶດເມືອງຣັບບາ

Siege and Capture of Rabbah

(2 ຊມອ 11:1; 12:26-31)

1 ຄັນເຖິງຣະດູແລ້ງ ເມື່ອບັນດາກະສັດຍົກກອງທັບອອກໄປຮົບ ໂຢອາບກໍນຳກອງທັບໄປກວາດລ້າງແຜ່ນດິນ
ຂອງຄົນອັມໂມນແລະມາລ້ອມເມືອງຣັບບາໄວ້ແຕ່ດາວິດປະທັບຢູ່ທີ່ເຢຣູຊາເລັມ ແລະໂຢອາບກໍໂຈມຕີເມືອງ
ຣັບບາ ແລະທຳລາຍເມືອງນັ້ນເສັຽ
2 ແລະດາວິດຊົງຖອດມົງກຸດຈາກພຣະສຽນຂອງກະສັດຂອງເຂົາທັງຫລາຍ ພຣະອົງຊົງຊາບວ່າມົງກຸດນັ້ນມີທອງ
ຄຳໜັກນຶ່ງຕະລັນ ແລະມີເພັດພອຍຊຶ່ງຕໍ່ມາຢູ່ເທິງພຣະສຽນຂອງດາວິດ ແລະພຣະອົງຊົງຍຶດເອົາສິ່ງຂອງຈາກ
ເມືອງນັ້ນ ໄດ້ເຂົ້າຂອງເປັນຈຳນວນຫລວງຫລາຍ
3 ພຣະອົງຊົງນຳປະຊາຊົນທີ່ຢູ່ໃນເມືອງນັ້ນອອກມາ ຕັ້ງເຂົາໃຫ້ທຳງານໜັກຢູ່ກັບເລື່ອຍ ແລະເຫລັກຂຸດແລະ
ຂວານ ແລະດາວິດຊົງກະທຳເຊັ່ນນັ້ນແກ່ຫົວເມືອງທັງສິ້ນຂອງຄົນອັມໂມນ ແລ້ວດາວິດກັບປະຊາຊົນທັງ
ປວງກໍກັບສູ່ເຢຣູຊາເລັມ

### ຄົນຂອງດາວິດຂ້າພວກມະນຸດຮ່າງໃຫຍ່

Exploits against the Philistines

(2 ຊມອ 21:15-22)

4 ແລະຢູ່ມາພາຍຫລັງເກີດສົງຄາມຂຶ້ນກັບຄົນຟີລິສຕິນທີ່ເມືອງເກເຊີ ແລ້ວຊິບເບກັຍຕະກູນຮູຊາໄດ້ສັງຫານຊິບ
ປັຍ ຜູ້ເປັນເຊື້ອສາຍຂອງຄົນຮ່າງໃຫຍ່ເສັຽ ແລະຄົນຟີລິສຕິນກໍຖືກຜ່າຍແພ້
5 ແລະມີສົງຄາມກັບຄົນຟີລິສຕິນອີກ ແລະເອນຮານານບຸດຢາອີຣ໌ໄດ້ຂ້າລາມີນ້ອງຊາຍຂອງໂກລີອາດເສັຽ ຜູ້ມີ
ຫອກທີ່ມີດ້າມໃຫຍ່ເທົ່າກັບໄມ້ກະພັນຫູກ

6 ແລະມີສົງຄາມທີ່ເມືອງກາດອີກ ມີຊາຍຄົນນຶ່ງຮູບຮ່າງໃຫຍ່ໂຕ ຜູ້ທີ່ມີຂ້າງນຶ່ງມີນິ້ວຫົກນິ້ວ ແລະນິ້ວຕີນຂ້າງລະ
ຫົກນິ້ວ ຈໍານວນຊາວສີ່ນິ້ວ ແລະເຂົາມີເຊື້ອສາຍມາຈາກມະນຸດຮ່າງໃຫຍ່ດ້ວຍ
7 ແລະເມື່ອເຂົາທ້າທາຍອິສຣາເອນ ໂຢນາທານບຸດຊີເມອີ ອ້າຍຂອງກະສັດດາວິດກໍປະຫານຊີວິດເສັຽ
8 ຄົນເຫລົ່ານີ້ສືບເນື່ອງມາຈາກມະນຸດຮ່າງໃຫຍ່ໃນເມືອງກາດ ແລະເຂົາລົ້ມຕາຍດ້ວຍພຣະຫັດຂອງດາວິດ
ແລະດ້ວຍມືຜູ້ຮັບໃຊ້ຂອງພຣະອົງ

## 21 ດາວິດຊົງນັບອິສຣາເອນແລະຢູດາ

The Census and Plague

(2 ຊມອ 24:1-17)

1 ຊາຕານໄດ້ຢືນຂຶ້ນຕໍ່ສູ້ອິສຣາເອນ ແລະດົນພຣະທັຍໃຫ້ດາວິດນັບຈໍານວນອິສຣາເອນ
2 ດາວິດຈຶ່ງສັ່ງກັບໂຢອາບ ແລະຜູ້ບັງຄັບບັນຊາກອງທັບວ່າ, “ຈົ່ງໄປນັບອິສຣາເອນຕັ້ງແຕ່ເມືອງເບເອີ ເຊບາຈົນ
ເຖິງເມືອງດານ ແລະນໍາຣາຍງານມາໃຫ້ເຮົາ ເພື່ອຈະໄດ້ຊາບຈໍານວນຣວມຂອງເຂົາທັງຫລາຍ”
3 ແຕ່ໂຢອາບທູນຕອບວ່າ, “ຂໍພຣະຜູ້ເປັນເຈົ້າຊົງເພີ້ມປະຊາກອນຂອງພຣະອົງອີກຮ້ອຍເທົ່າຂອງທີ່ມີຢູ່ແລ້ວ ຂ້າ
ແດ່ພຣະຣາຊາເຈົ້ານາຍຂອງຂ້ານ້ອຍ ແຕ່ປະຊາຊົນນີ້ທັງສິ້ນເປັນຜູ້ຮັບໃຊ້ຂອງເຈົ້ານາຍຂອງຂ້ານ້ອຍບໍ່ແມ່ນ
ຫລື ເປັນຫຍັງເຈົ້ານາຍຂອງຂ້ານ້ອຍຈຶ່ງຮັບສັ່ງເຊັ່ນນີ້ ເປັນຫຍັງພຣະອົງຈຶ່ງຊົງນໍາກັມຊົ່ວມາສູ່ອິສຣາເອນ”
4 ແຕ່ໂຢອາບຂັດຮັບສັ່ງບໍ່ໄດ້ຈຶ່ງຈາກໄປ ແລະໄປຕລອດຄົນອິສຣາເອນທັງສິ້ນ ແລະກັບມາຍັງເຢຣູຊາເລັມ
5 ແລະໂຢອາບຖວາຍຈໍານວນປະຊາຊົນທີ່ນັບໄດ້ແກ່ດາວິດ ໃນອິສຣາເອນທັງສິ້ນມີນຶ່ງລ້ານນຶ່ງແສນຄົນທີ່ຊັກ
ດາບ ແລະໃນຢູດາມີສີ່ແສນເຈັດຫມື່ນຄົນທີ່ຊັກດາບ
6 ແຕ່ໃນການນັບນັ້ນທ່ານບໍ່ໄດ້ຮວມເລວີແລະເບັນຢາມິນ ເພາະວ່າພຣະບັນຊາຂອງພຣະຣາຊາເປັນທີ່ຫນ້າກຽດ
ແກ່ໂຢອາບ
7 ແຕ່ພຣະເຈົ້າບໍ່ຊົງພໍພຣະທັຍໃນເຣື່ອງນີ້ ແລະພຣະອົງຊົງລົງໂທດອິສຣາເອນ
8 ແລະດາວິດທູນພຣະເຈົ້າວ່າ, “ຂ້າພຣະອົງໄດ້ທໍາບາບໃຫຍ່ຍິ່ງໃນການທີ່ຂ້າພຣະອົງໄດ້ກະທໍາສິ່ງນີ້ ຂ້າແດ່ພ
ຣະອົງ ຂໍຊົງໃຫ້ອະພັຍຄວາມບາບຊົ່ວຂອງຜູ້ຮັບໃຊ້ຂອງພຣະອົງ ເພາະຂ້າພຣະອົງໄດ້ກະທໍາການຢ່າງໂງ່ຈ້າ
ຫລາຍ”
9 ແລະພຣະເຈົ້າຊົງກ່າວກັບກາດຜູ້ທໍານວາຍຂອງດາວິດວ່າ,
10 “ຈົ່ງໄປບອກດາວິດວ່າ “ພຣະເຈົ້າກ່າວດັ່ງນີ້ວ່າ ເຮົາສເນີເຈົ້າສາມປະການ ຈົ່ງເລືອກເອົາປະການນຶ່ງ ເພື່ອເຮົາ
ຈະໄດ້ກະທໍາໃຫ້ແກ່ເຈົ້າ”
11 ກາດຈຶ່ງເຂົ້າເຝົ້າດາວິດ ແລະກາບທູນພຣະອົງວ່າ “ພຣະເຈົ້າກ່າວດັ່ງນີ້ວ່າ ຈົ່ງເລືອກເອົາຕາມທີ່ເຈົ້າພໍໃຈ
12 ຄື ກັນດານອາຫານສາມປີ ຫລືການລ້າງຜານໂດຍສັດຕຣູຈະຂັບເຈົ້າທັນ ຫລືດາບຂອງພຣະເຈົ້າສາມວັນຄື
ໂຣກຣະບາດເທິງແຜ່ນດິນ ແລະທູດຂອງພຣະເຈົ້າທໍາລາຍທົ່ວໄປໃນດິນແດນທັງສິ້ນຂອງອິສຣາເອນ ບັດນີ້ຂໍ
ຊົງພິຈາຣະນາດູວ່າຈະໃຫ້ຂ້າພຣະອົງກາບທູນພຣະອົງຜູ້ຊົງໃຊ້ຂ້າພຣະອົງມາວ່າປະການໃດ”
13 ແລ້ວດາວິດກ່າວກັບກາດວ່າ “ເຮົາມີຄວາມກະວົນກະວາຍຫລາຍ ຂໍໃຫ້ເຮົາຕົກເຂົ້າໄປຢູ່ໃນພຣະຫັດຂອງພຣະ
ເຈົ້າ ເພາະ  ພຣະກະຣຸນາຄຸນຂອງພຣະອົງຍິ່ງໃຫຍ່ນັກ ແຕ່ຂໍຢ່າໃຫ້ເຮົາຕົກເຂົ້າໄປໃນມືຂອງມະນຸດເລີຍ”
14 ດັ່ງນັ້ນ ພຣະເຈົ້າຊົງໃຫ້ໂຣກຣະບາດເກີດຂຶ້ນໃນອິສຣາເອນ ແລະຄົນອິສຣາເອນໄດ້ລົ້ມຕາຍເຈັດຫມື່ນຄົນ
15 ແລະພຣະເຈົ້າຊົງໃຊ້ທູດສວັນໄປຍັງເຢຣູຊາເລັມເພື່ອຈະທໍາລາຍເສັຽ ແຕ່ເມື່ອທ່ານຈະລົງມືທໍາລາຍ ພຣະເຈົ້າ
ຊົງເຫັນແລະພຣະອົງຊົງປ່ຽນພຣະທັຍໃນເຫດຮ້າຍນັ້ນ ແລະພຣະອົງກ່າວກັບທູດຜູ້ທໍາລາຍນັ້ນວ່າ, “ພໍແລ້ວ
ຢັບຢັ້ງມືຂອງເຈົ້າໄດ້” ສ່ວນທູດຂອງພຣະເຈົ້າກໍກໍາລັງຢືນຢູ່ທີ່ລານນວດເຂົ້າຂອງໂອຣນານຄົນເຢບຸສ

16 ດາວິດແຫງນພຣະພັກຊົງເຫັນທູດຂອງພຣະຜູ້ເປັນເຈົ້າຢືນລະຫວ່າງແຜ່ນດິນໂລກແລະຟ້າສວັນ ແລະໃນມືຖື
ດາບທີ່ຊັກອອກເຫນືອເຢຣູຊາເລັມແລ້ວດາວິດແລະພວກຜູ້ໃຫຍ່ ສວມຜ້າກະສອບຫມູບຫນ້າລົງ
17 ແລະດາວິດທູນພຣະເຈົ້າວ່າ, "ຂ້າພຣະອົງບໍ່ແມ່ນຫລືທີ່ສັ່ງໃຫ້ນັບປະຊາຊົນ ຂ້າພຣະອົງເປັນຜູ້ໄດ້ກະທຳບາບ
ແລະໄດ້ກະທຳຄວາມຊົ່ວຮ້າຍຍິ່ງນັກ ແຕ່ບັນດາແກະເຫລົ່ານີ້ເຂົາໄດ້ກະທຳສິ່ງໃດ ຂ້າແດ່ພຣະຜູ້ເປັນເຈົ້າພຣະ
ເຈົ້າຂອງຂ້າພຣະອົງ ຂໍ
ພຣະຫັດຂອງພຣະອົງຢູ່ເຫນືອຂ້າພຣະອົງແລະເຊື້ອສາຍຂອງຂ້າພຣະອົງ ແຕ່ຂໍຢ່າໃຫ້ໂຣກຮ້າຍນັ້ນຢູ່ເຫນືອ
ປະຊາຊົນຂອງພຣະອົງ"
18 ແລ້ວທູດຂອງພຣະຜູ້ເປັນເຈົ້າໄດ້ສັ່ງໃຫ້ກາດທູນດາວິດວ່າ ໃຫ້ດາວິດຂຶ້ນໄປສ້າງແທ່ນບູຊາຖວາຍແດ່ພຣະຜູ້
ເປັນເຈົ້າທີ່ລານຟາດເຂົ້າຂອງໂອຣນານ ຄົນເຢບຸສ
19 ດາວິດຈຶ່ງສະເດັດຂຶ້ນໄປຕາມຄຳຂອງກາດ ຊຶ່ງທ່ານໄດ້ກາບທູນໃນພຣະນາມຂອງພຣະຜູ້ເປັນເຈົ້າ
20 ຝ່າຍໂອຣນານກຳລັງຟາດເຂົ້າສາລີຢູ່ ທ່ານຫັນມາເຫັນທູດສວັນ ບຸດຊາຍສີ່ຄົນຂອງທ່ານທີ່ຢູ່ກັບທ່ານກໍລີ້ຊ່ອນ
ຕົວເສັຽ
21 ເມື່ອດາວິດສະເດັດມາຍັງໂອຣນານ ໂອຣນານຫລຽວເຫັນດາວິດ ແລະອອກໄປຈາກລານຟາດເຂົ້າ ຖວາຍບັງ
ຄົມດາວິດ ດ້ວຍຫມູບຫນ້າລົງເຖິງດິນ
22 ແລະດາວິດກ່າວກັບໂອຣນານວ່າ, "ຈົ່ງໃຫ້ລານຟາດເຂົ້າແກ່ເຮົາເຖີດ ເພື່ອເຮົາຈະສ້າງແທ່ນບູຊາຖວາຍແດ່ພ
ຣະຜູ້ເປັນເຈົ້າເທິງນັ້ນ ຈົ່ງໃຫ້ແດ່ເຮົາຕາມຣາຄາເຕັມ ເພື່ອວ່າພັຍວິບັດນັ້ນຈະໄດ້ຣະງັບເສັຽຈາກປະຊາຊົນ"
23 ແລ້ວໂອຣນານກາບທູນດາວິດວ່າ, "ຂໍຊົງຮັບໄປເຖີດ ແລະຂໍພຣະຣາຊາເຈົ້ານາຍຂອງຂ້າພຣະອົງກະທຳສິ່ງທີ່
ພຣະອົງຊົງເຫັນຊອບເຖີດ ຂ້າພຣະອົງຂໍຖວາຍງົວສຳລັບເຄື່ອງເຜົາບູຊາ ແລະຖວາຍໄມ້ພື້ນທີ່ລານໃຫ້ເປັນຟືນ
ແລ້ວເຂົ້າສາລີເປັນທັນຍາບູຊາ ຂ້າພຣະອົງຂໍຖວາຍຫມົດ"
24 ແຕ່ກະສັດດາວິດກ່າວກັບໂອຣນານວ່າ, "ບໍ່ ແຕ່ເຮົາຈະຊື້ເອົາຕາມຣາຄາເຕັມ ເຮົາຈະບໍ່ເອົາຂອງຂອງເຈົ້າ
ຖວາຍແດ່ພຣະຜູ້ເປັນເຈົ້າ ຫລືຖວາຍສິ່ງທີ່ເຮົາບໍ່ໄດ້ເສັຽຄ່າເປັນເຄື່ອງເຜົາບູຊາ
25 ດາວິດຈຶ່ງຊົງຈ່າຍໃຫ້ໂອຣນານນັ້ນເປັນທອງຄຳນ້ຳຫນັກຫົກຮ້ອຍເຊເກລ
26 ດາວິດກໍຊົງສ້າງແທ່ນບູຊາຖວາຍແດ່ພຣະຜູ້ເປັນເຈົ້າທີ່ນັ້ນ ແລະຊົງຖວາຍເຄື່ອງເຜົາບູຊາແລະເຄື່ອງສານຕິບູ
ຊາ ແລະກາບທູນອອກພຣະນາມພຣະຜູ້ເປັນເຈົ້າ ແລະພຣະຜູ້ເປັນເຈົ້າຊົງຕອບພຣະອົງດ້ວຍໄຟຈາກສວັນ
ເທິງແທ່ນເຄື່ອງເຜົາບູຊາ
27 ແລ້ວພຣະຜູ້ເປັນເຈົ້າກໍຊົງບັນຊາທູດສວັນ ແລະທ່ານກໍເອົາດາບໃສ່ຝັກເສັຽ

**ສະຖານທີ່ຕັ້ງພຣະວິຫານ**

The Place Chosen for the Temple

28 ຄັ້ງນັ້ນ ເມື່ອດາວິດຊົງເຫັນວ່າ ພຣະຜູ້ເປັນເຈົ້າຊົງຕອບພຣະອົງທີ່ລານຟາດເຂົ້າຂອງໂອຣນານຄົນເຢບຸສ ພຣະ
ອົງຊົງຖວາຍສັຕບູຊາທີ່ນັ້ນ
29 ເພາະທໍເຕັນຂອງພຣະຜູ້ເປັນເຈົ້າຊຶ່ງໂມເຊໄດ້ສ້າງຂຶ້ນໃນຖິ່ນກັນດານ ແລະແທ່ນເຄື່ອງເຜົາບູຊາ ໃນເວລານັ້ນ
ຢູ່ໃນສະຖານນະມັສການທີ່ສູງທີ່ກິເບໂອນ
30 ແຕ່ດາວິດຈະໄປທູນຖາມພຣະເຈົ້າທີ່ນັ້ນບໍ່ໄດ້ ເພາະພຣະອົງຊົງຢ້ານດາບຂອງເທວະທູດຂອງພຣະຜູ້ເປັນເຈົ້າ

Chapter 22

1 ແລ້ວດາວິດກ່າວວ່າ, "ນີ້ແຫລະ ພຣະວິຫານຂອງພຣະຜູ້ເປັນເຈົ້າ ນີ້ແຫລະ ແທ່ນເຄື່ອງເຜົາບູຊາສຳລັບອິສຣາ
ເອນ"

**ດາວິດຊົງກະຕຽມເພື່ອຈະສ້າງພຣະວິຫານ**

David Prepares to Build the Temple

2 ດາວິດຊົງບັນຊາໃຫ້ຮວບຮວມຄົນຕ່າງດ້າວທີ່ຢູ່ໃນແຜ່ນດິນອິສຣາເອນ ແລະພຣະອົງຊົງຈັດຄົນສະກັດຫີນໃຫ້
ຕຽມຫີນສະກັດເພື່ອສ້າງພຣະວິຫານຂອງພຣະເຈົ້າ

3 ດາວິດຍັງຊົງຈັດສະສົມເຫລັກເປັນຈຳນວນຫລວງຫລາຍ ເພື່ອເປັນຕາປູຂອງບານປະຕູຮົ້ວ ແລະເປັນເຫລັກ
ຫນີບ ທັງທອງສຳຣິດເປັນຈຳນວນຫລວງຫລາຍເຫລືອທີ່ຈະຊັ່ງໄດ້

4 ແລະໄມ້ສົນນັບບໍ່ຖ້ວນ ເພາະວ່າຊາວຊີໂດນ ແລະຊາວຕີຣ໌ ໄດ້ນຳໄມ້ສົນຈຳນວນຫລວງຫລາຍມາຖວາຍດາ
ວິດ

5 ເພາະດາວິດກ່າວວ່າ, "ໂຊໂລໂມນບຸດຂອງເຮົາຍັງນ້ອຍຢູ່ ແລະບໍ່ເຄີຍງານ ແລະພຣະວິຫານຊຶ່ງຈະສ້າງຖວາຍ
ພຣະຜູ້ເປັນເຈົ້ານັ້ນ ຕ້ອງງາມຢ່າງຍິ່ງ ມີຊື່ສຽງແລະສັກສີໃນບັນດາປະເທດທັງຫລາຍ ເພາະສະນັ້ນເຮົາຈຶ່ງຈະ
ຈັດຕຽມໄວ້" ດາວິດຈຶ່ງຊົງຈັດວັດຖຸເປັນຈຳນວນຫລວງຫລາຍກ່ອນພຣະອົງສິ້ນພຣະຊົນ

6 ແລ້ວພຣະອົງຊົງເອີ້ນໂຊໂລໂມນບຸດຊາຍຂອງພຣະອົງ ແລະກຳຊັບທ່ານໃຫ້ສ້າງພຣະວິຫານຖວາຍແດ່ພຣະຜູ້
ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ

7 ດາວິດຮັບສັ່ງໂຊໂລໂມນບຸດຊາຍຂອງພຣະອົງວ່າ, "ລູກເອີຍ ເຮົາມີໃຈປະສົງທີ່ຈະສ້າງພຣະວິຫານຖວາຍພ
ຣະນາມແຫ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ

8 ແຕ່ພຣະຄຳຂອງພຣະຜູ້ເປັນເຈົ້າມາຍັງເຮົາວ່າ "ເຈົ້າໄດ້ທຳໃຫ້ໂລເລືອດຫລັ່ງໄຫລຫລາຍ ແລະໄດ້ທຳສົງຄາມ
ໃຫຍ່ຫລວງ ເຈົ້າຢ່າສ້າງພຣະວິຫານເພື່ອນາມຂອງເຮົາເລີຍ ເພາະເຈົ້າໄດ້ທຳໃຫ້ເລືອດອອກເປັນຈຳນວນ
ຫລາຍຕໍ່ຫນ້າເຮົາເທິງແຜ່ນດິນໂລກ

9 ເບິ່ງແມ, ບຸດຊາຍຄົນນຶ່ງຈະບັງເກີດມາແກ່ເຈົ້າ ເຂົາຈະເປັນຄົນແຫ່ງຄວາມສງົບ ເຮົາຈະໃຫ້ຄວາມສງົບແກ່
ເຂົາໃຫ້ພົ້ນຈາກສັດຕຣູທັງສິ້ນຮອບຂ້າງຂອງເຂົາ ເພາະເຂົາຈະມີຊື່ວ່າ ໂຊໂລໂມນ ແລະເຮົາຈະໃຫ້ສັນຕິພາບ
ແລະຄວາມສງົບແກ່ ອິສຣາເອນໃນສມັຍຂອງເຂົາ

10 ເຂົາຈະສ້າງພຣະວິຫານເພື່ອນາມຂອງເຮົາ ເຂົາຈະເປັນບຸດຊາຍຂອງເຮົາ ແລະເຮົາຈະເປັນບິດາຂອງເຂົາ
ແລະເຮົາຈະສະຖາປະນາຣາຊບັນລັງຂອງເຂົາເຫນືອອິສຣາເອນເປັນນິດ"

11 ນີ້ແຫລະ ລູກຂອງຂ້າເອີຍ ຂໍພຣະຜູ້ເປັນເຈົ້າຊົງສະຖິດຢູ່ກັບເຈົ້າ ແລະຂໍໃຫ້ເຈົ້າມີຄວາມສຳເຣັດ ແລະສ້າງພ
ຣະວິຫານຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າສຳເຣັດດັ່ງທີ່ພຣະອົງສັ່ງເຖິງເຣື່ອງເຈົ້າ

12 ຂໍພຽງພຣະຜູ້ເປັນເຈົ້າໂຜດໃຫ້ເຈົ້າມີຄວາມສລຽວສລາດແລະຄວາມເຂົ້າໃຈ ແລະຊົງຕັ້ງເຈົ້າໃຫ້ປົກຄອງອິສຣາ
ເອນ ແລະຊົງໂຜດໃຫ້ເຈົ້າຮັກສາທັມບັນຍັດຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ

13 ແລ້ວເຈົ້າຈະສຳເຣັດ ຖ້າເຈົ້າລະມັດລະວັງທີ່ຈະປະຕິບັດຕາມກົດເກນແລະກົດຫມາຍຊຶ່ງພຣະພຣະຜູ້ເປັນເຈົ້າ
ຊົງສັ່ງກັບໂມເຊກ່ຽວກັບອິສຣາເອນ ຈົ່ງເຂັ້ມແຂງແລະກ້າຫານເຖີດ

14 ແລະເບິ່ງແມ, ເຮົາໄດ້ຈັດຕຽມໄວ້ເພື່ອພຣະວິຫານຂອງພຣະຜູ້ເປັນເຈົ້າດ້ວຍຄວາມເມື່ອຍຍາກຢ່າງຍິ່ງ ເປັນ
ທອງຄຳຫນັກນຶ່ງແສນຕະລັນ ທອງສຳຣິດ ແລະເຫລັກເຫລືອທີ່ຈະຊັ່ງ ເພາະມີມາກມາຍເຫລືອເກີນ ເຮົາໄດ້ຈັດ
ຕຽມຕົວໄມ້ແລະຫີນດ້ວຍ ເຈົ້າຈະເພີ່ມເຕີມເຂົ້າອີກກໍໄດ້

15 ນອກຈາກນີ້ ເຈົ້າມີຄົນທຳງານຫລວງຫລາຍ ຄືຊ່າງສະກັດຫີນ ຊ່າງກໍ່ ຊ່າງໄມ້ ແລະຊ່າງສີມືທຸກຊະນິດ

16 ທຳເຄື່ອງທອງຄຳ ເງິນ ທອງສຳຣິດ ແລະເຫລັກ ລຸກຂຶ້ນທຳໄປເຖີດ ຂໍພຣະເຈົ້າຊົງສະຖິດຢູ່ກັບເຈົ້າ"

17 ດາວິດຊົງສັ່ງຫົວຫນ້າທັງປວງຂອງອິສຣາເອນໃຫ້ຊ່ອຍໂຊໂລໂມນບຸດຊາຍຂອງພຣະອົງດ້ວຍວ່າ
18 "ພຣະຜູ້ເປັນເຈົ້າຂອງເຈົ້າຊົງສະຖິດຢູ່ກັບເຈົ້າບໍ່ແມ່ນຫລື ແລະພຣະອົງບໍ່ໄດ້ປະທານການຢຸດພັກສງົບແກ່ເຈົ້າ
ທຸກດ້ານຫລື ເພາະພຣະອົງຊົງມອບຊາວແຜ່ນດິນນັ້ນກໍຣາບຄາບຕໍ່ພຣະພັກພຣະຜູ້ເປັນເຈົ້າແລະຕໍ່ຫນ້າປະຊາ
ຊົນຂອງພຣະອົ
19 ບັດນີ້ຈົ່ງຕັ້ງຈິດຕັ້ງໃຈຂອງເຈົ້າທີ່ຈະສແວງຫາພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ຈົ່ງລຸກຂຶ້ນສ້າງສະຖານນະມັສ
ການຂອງພຣະຜູ້ເປັນເຈົ້າ ເພື່ອວ່າຫີບຄໍາສັນຍາຂອງພຣະເຈົ້າກໍດີ ຈະໄດ້ນໍາເອົາມາໄວ້ໃນພຣະວິຫານທີ່ສ້າງ
ຂຶ້ນເພື່ອພຣະນາມຂອງ
ພຣະຜູ້ເປັນເຈົ້າ"

## 23 ການແບ່ງຄົນເລວີແລະປະໂຣຫິດກັບຫນ້າທີ່ຂອງເຂົາ

Families of the Levites and their Functions

1 ເມື່ອດາວິດຊົງແກ່ຊະຣາຫລາຍແລ້ວ ພຣະອົງຊົງຕັ້ງໂຊໂລໂມນບຸດຊາຍຂອງພຣະອົງໃຫ້ເປັນກະສັດເຫນືອອິສ
ຣາເອນ
2 ດາວິດຊົງໃຫ້ປະຊຸມເຈົ້ານາຍທັງສິ້ນຂອງອິສຣາເອນ ແລະບັນດາປະໂຣຫິດ ແລະຄົນເລວີ
3 ຄົນເລວີນັ້ນອາຍຸຕັ້ງແຕ່ສາມສິບປີຂຶ້ນໄປກໍໃຫ້ນັບໄວ້ ແລະຮວມໄດ້ສາມຫມື່ນແປດພັນຄົນ
4 ດາວິດສັ່ງວ່າ, "ຈາກພວກນີ້ສອງຫມື່ນສີ່ພັນຄົນຈະຕ້ອງດູແລການງານໃນພຣະວິຫານຂອງພຣະເຈົ້າ ແລະຫົກ
ພັນຄົນເປັນເຈົ້າຫນ້າທີ່ ແລະຜູ້ປົກຄອງ
5 ສີ່ພັນຄົນເປັນນາຍປະຕູ ແລະອີກສີ່ພັນຄົນຈະຖວາຍສັຣເສີນແກ່ພຣະຜູ້ເປັນເຈົ້າດ້ວຍເຄື່ອງດົນຕຣີຊຶ່ງເຮົາໄດ້
ສ້າງໄວ້ໃຫ້ໃຊ້ສັຣເສີນ"
6 ແລະດາວິດຊົງຈັດແບ່ງເປັນກອງໆຕາມບຸດເລວີ ຄືເກີໂຊນ ໂກຣາດ ແລະເມຣາຣີ
7 ຈາກຄົນເກີໂຊນ ຄືລາດານ ແລະຊີເມອີ
8 ບຸດລາດານ ຄືເຢຮີເອນເປັນຫົວຫນ້າ ແລະເຊທາມ ແລະໂຢເອນ ສາມຄົນ
9 ບຸດເຊເມອີ ຄືເຊໂລໂມທ ຮາຊີເອນ ແລະຮາຣານ ສາມຄົນ ຄົນເຫລົ່ານີ້ເປັນຫົວຫນ້າຕະກູນລາດານ
10 ແລະບຸດຊີເມອີ ຄືຢາຮາດ ຊີນາ ເຢອູສ ແລະເບຣີຢາ ທັງສີ່ຄົນນີ້ເປັນບຸດຊີເມອີ
11 ແລະຢາຮາດເປັນຫົວຫນ້າ ແລະຊີຊາເປັນທີສອງ ແຕ່ເຢອູສ ແລະເບຣີຢາ ບໍ່ມີລູກຫລາຍ ເພາະສະນັ້ນໃນການ
ນັບຈຶ່ງຮວມເຂົ້າເປັນຕະກູນດຽວກັນ
12 ບຸດໂກຣາດ ຄືອັມຣາມ ອິສຮາ ເຮໂບຣນ ແລະອູສຊີເອນ ສີ່ຄົນ
13 ບຸດອັມຣາມ ຄືອາໂຣນ ແລະໂມເຊ ເຂົາຕັ້ງອາໂຣນໄວ້ຕ່າງຫາກໃຫ້ເປັນຜູ້ທໍາພິທີຊໍາຣະຂອງທີ່ບໍຣິສຸດທີ່ສຸດ
ທັງເຂົາແລະບຸດຂອງເຂົາສືບໄປເປັນນິດ ເພື່ອເຜົາເຄື່ອງຫອມຖວາຍພຣະຜູ້ເປັນເຈົ້າ ແລະປົວລະບັດພຣະອົງ
ແລະອວຍພຣະພອນໃນ
ພຣະນາມຂອງພຣະອົງເປັນນິດ
14 ຝ່າຍໂມເຊຄົນຂອງພຣະຜູ້ເປັນເຈົ້ານັ້ນ ບຸດຂອງທ່ານມີຊື່ສຽງຖ້ານກາງຄົນເຜົ່າເລວີ
15 ບຸດຂອງໂມເຊ ຄືເກີໂຊມ ກັບເອລີເອເຊີ
16 ບຸດຂອງເກີໂຊມ ຄືເຊບູເອນ ຜູ້ເປັນຫົວຫນ້າ
17 ບຸດຂອງເອລີເອເຊີ ຄືເຣຮັບຢາຜູ້ເປັນຫົວຫນ້າ ເອລີອາເຊີບໍ່ມີບຸດຊາຍອີກ ແຕ່ບຸດຂອງເຣຮັບຢາມີຫລາຍ
18 ບຸດອິສຮາ ຄືເຊໂລມິທ ຜູ້ເປັນຫົວຫນ້າ

19 ບຸດເຮໂບຣນ ຄືເຢຣີຢາ ຜູ້ເປັນຫົວຫນ້າ ອາມາຣີຢາເປັນທີສອງ ຢາຮາຊີເອນເປັນທີສາມ ແລະເຢກາເມອາມເປັນທີສີ່
20 ບຸດອຸສຊີເອນ ຄືມີກາ ຜູ້ເປັນຫົວຫນ້າ ແລະອິສຊີຢາເປັນທີສອງ
21 ບຸດເມຣາຣີ ຄືມາລີ ແລະມູຊີ ບຸດມາລີ ຄືເອເລອາຊາ ແລະຄີສ
22 ເອເລອາຊາສິ້ນຊີວິດບໍ່ມີບຸດຊາຍ ມີແຕ່ບຸດຍິງ ບຸດຄີສຜູ້ເປັນຍາດເຂົາແຕ່ງງານກັບເຂົາ
23 ບຸດມູຊີ ຄືມາລີ ເອເດີ ແລະເຢເຣໂມທ ສາມຄົນ
24 ຄົນເຫລົ່ານີ້ເປັນຄົນເລວີຕາມຕະກູນຂອງເຂົາ ເປັນຫົວຫນ້າຂອງຕະກູນຂອງເຂົາ ຕາມທີ່ເຂົາໄດ້ຂຶ້ນທະບຽນໄວ້ຕາມຈຳນວນຣາຍຊື່ບຸກຄົນ ອາຍຸຕັ້ງແຕ່ຊາວປີຂຶ້ນໄປ ຜູ້ຊຶ່ງຈະທຳງານບົວລະບັດໃນພຣະວິຫານຂອງພຣະຜູ້ເປັນເຈົ້າ
25 ເພາະດາວິດສັ່ງວ່າ ພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນໄດ້ຊົງໂຜດການຢຸດພັກສງົບແກ່ປະຊາຊົນຂອງພຣະອົງ ແລະພຣະອົງປະທັບໃນເຢຣູຊາເລັມເປັນນິດ
26 ແລະຄົນເລວີຈຶ່ງບໍ່ຕ້ອງຫາບຫາມຫໍເຕັນສັກສິດ ຫລືເຄື່ອງໃຊ້ໃດໆເພື່ອງານບົວລະບັດອີກເລີຍ”
27 (ເພາະຕາມພຣະດຳຣັດສຸດທ້າຍຂອງດາວິດ ຄົນເລວີຕັ້ງແຕ່ອາຍຸຊາວປີຂຶ້ນໄປຖືກນັບ)
28 “ແຕ່ຫນ້າທີ່ຂອງເຂົາຈະຕ້ອງຄອຍຊ່ອຍບຸດອາໂຣນໃນງານບົວລະບັດພຣະວິຫານແຫ່ງພຣະເຈົ້າ
29 ແລະຊ່ອຍກ່ຽວກັບເຣື່ອງເຂົ້າຈີ່ຕັ້ງຖວາຍດ້ວຍ ເຣື່ອງຍອດແປ້ງສຳລັບທັນຍາບູຊາ ເຂົ້າຈີ່ທີ່ບໍ່ມີເຊື້ອແຜ່ນຂອງປີ້ງບູຊາ ຂອງບູຊາປົນໃສ່ນ້ຳມັນ ແລະເຄື່ອງຕວງ ເຄື່ອງວັດທຸກຂນາດ
30 ແລະທຸກໆເຊົ້າເຂົາຈະຕ້ອງຢືນໂມທະນາ ແລະສັຣເສີນພຣະຜູ້ເປັນເຈົ້າ ແລະເວລາແລງກໍເຊັ່ນດຽວກັນ
31 ທັງໃນເວລາເມື່ອປະຊາຊົນຖວາຍເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າໃນວັນຊະບາໂຕ ໃນວັນຂຶ້ນນຶ່ງຄ່ຳ ໃນວັນເທສການ ຕາມຈຳນວນທີ່ກຳນົດໃຫ້ຖວາຍບູຊາຕໍ່ພຣະພັກພຣະຜູ້ເປັນເຈົ້າທຸກວັນເລື້ອຍໄປ
32 ດັ່ງນີ້ແຫລະເຂົາຈະດູແລເຕັນນັດພົບ ແລະສະຖານນະມັສການ ແລະຈະຮັບໃຊ້ບຸດອາໂຣນພີ່ນ້ອງຂອງເຂົາເພື່ອງານບົວລະບັດແຫ່ງພຣະວິຫານຂອງພຣະຜູ້ເປັນເຈົ້າ”

## 24

Chapter 24

1 ກອງເວນຂອງເຊື້ອສາຍອາໂຣນມີດັ່ງນີ້ ບຸດອາໂຣນ ຄືນາດາບ ອາບີຮູ ເອເລອາຊາ ແລະອີທາມາ
2 ແຕ່ນາດາບແລະອາບີຮູສິ້ນຊີວິດກ່ອນບິດາຂອງຕົນ ແລະບໍ່ມີບຸດ ເອເລອາຊາແລະອີທາມາຈຶ່ງທຳຫນ້າທີ່ຕຳແຫນ່ງປະໂຣຫິດ
3 ດ້ວຍຄວາມຊ່ອຍເຫລືອຂອງຊາໂດກ ບຸດເອເລອາຊາແລະອາຮີເມເລກ ບຸດອີທາມາ ດາວິດໄດ້ຊົງຈັດເປັນເວນຕາມຫນ້າທີ່ໃນການບົວລະບັດຂອງເຂົາທັງຫລາຍ
4 ມີຫົວຫນ້າໃນຫມູ່ບຸດເອເລອາຊາມີສິບຫົກຄົນເປັນຫົວຫນ້າຕະກູນ ແລະພວກບຸດອີທາມາຕາມຕະກູນຂອງເຂົາມີແປດຄົນ
5 ເຂົາທັງຫລາຍຈັດແບ່ງດ້ວຍສະຫລາກເຫມືອນກັນຫມົດ ເພາະມີເຈົ້າຫນ້າທີ່ຂອງພຣະເຈົ້າເປັນບຸດເອເລອາຊາກັບບຸດອີທາມາທັງສອງຝ່າຍ
6 ແລະເຊມັຍຢາ ບຸດເນທານເອນເລຂາທິການຂອງຄົນເລວີໄດ້ບັນທຶກໄວ້ຕໍ່ພຣະພັກກະສັດ ຕໍ່ຫນ້າເຈົ້ານາຍແລະປະໂຣຫິດຊາໂດກ ແລະອາຮີເມເລກ ບຸດຂອງອາບີອາທາ ແລະຫົວຫນ້າຕະກູນຂອງປະໂຣຫິດແລະຂອງຄົນເລວີ ເຂົາຈັບສລາກຕະກູນນຶ່ງຈາກເອເລອາຊາ ແລະຈັບສລາກຕະກູນນຶ່ງຈາກອີທາມາ
7 ສລາກແຮກຕົກແກ່ ເຢໂຮຍອາຣິບ ທີສອງຕົກແກ່ ເຢດັຍຢາ

8 ທີສາມແກ່ ຮາຣິມ ທີສີ່ແກ່ ເຊໂອຣິມ
9 ທີຫ້າແກ່ ຮາມັນຄີຢາ ທີຫົກແກ່ ມີຢາມິນ
10 ທີເຈັດແກ່ ຮັກໂກສ ທີແປດແກ່ ອາບີຢາ
11 ທີເກົ້າແກ່ ເຢຊູອາ ທີສິບແກ່ ເຊການີຢາ
12 ທີສິບເອັດແກ່ ເອລີອາຊີບ ທີສິບສອງແກ່ ຢາກີມ
13 ທີສິບສາມແກ່ ຮູປປາ ທີສິບສີ່ແກ່ ເຢເຊເບອາບ
14 ທີສິບຫ້າແກ່ ບິນກາ ທີສິບຫົກແກ່ ອິມເມາ
15 ທີສິບເຈັດແກ່ ເຮຊີຣ໌ ທີສິບແປດແກ່ ຮັປປີສເສຊ
16 ທີສິບເກົ້າແກ່ ເປທາຮີຢາ ທີຊາວແກ່ ເຢເຮສເກນ
17 ທີຊາວເອັດແກ່ ຢາຄີນ ທີຊາວສອງແກ່ ກາມູນ
18 ທີຊາວສາມແກ່ ເດລັຍຢາ ທີຊາວສີ່ແກ່ມາອາຊີຢາ
19 ຄົນເຫລົ່ານີ້ມີຫນ້າທີ່ກຳຫນົດຂອງເຂົາໃນການບົວລະບັດທີ່ຈະເຂົ້າໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າ
ຕາມລະບຽບທີ່ອາໂຣນ ບິດາຂອງເຂົາໄດ້ຕັ້ງໄວ້ສຳລັບເຂົາທັງຫລາຍ ດັ່ງທີ່ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສ
ຣາເອນໄດ້ຊົງສັ່ງເຂົາໄວ້

### ຄົນເລວີທີ່ເຫລືອ

Other Levites

20 ຝ່າຍເຊື້ອສາຍຂອງເລວີທີ່ເຫລືອຢູ່ ຄືຈາກບຸດອັມຣາມ ມີຊູບາເອນ ຈາກບຸດຊູບາເອນ ມີເຢເດຢາ
21 ຝ່າຍເຢຮັບຢາ ຄືຈາກບຸດເຢຮັບຢາ ມີອິສຊີຢາຜູ້ເປັນຫົວຫນ້າ
22 ຈາກຄົນອິສຮາ ມີເຊໂລໂມທ ຈາກບຸດເຊໂລໂມທ ມີຢາຮາດ
23 ແລະບຸດເຮໂບຣນ ຄືເຢຣີຢາຜູ້ເປັນຫົວຫນ້າ ອາມາຣີຢາທີສອງ ຢາຮາຊີເອນທີສາມ ເຢກາເມອາມທີສີ່
24 ບຸດອູສຊີເອນ ຄືມີກາ ບຸດມີກາ ຄືຊາມີ
25 ນ້ອງຊາຍຂອງມີກາ ຄືອິສຊີຢາ ບຸດອິສຊີຢາ ຄືເຊຄາຣີຢາ
26 ບຸດເມຣາຣີ ຄືມາລີແລະມູຊີ ບຸດຢາອາຊີຢາ ຄືເບໂນ
27 ຝ່າຍເຊື້ອສາຍເມຣາຣີ ຄືຂອງຢາອາຊີຢາ ມີເບໂນ ໂຊຮາມ ຊັກກູຣ໌ ແລະອິບຣີ
28 ຂອງມາລີ ຄືເລເລອາຊາຜູ້ບໍ່ມີບຸດຊາຍ
29 ຂອງຄີສ ບຸດກີສ ຄືເຢຣາເມເອນ
30 ບຸດມູຊີ ຄືມາລີ ເອເດີ ແລະເຢຣີໂມທ ຄົນເຫລົ່ານີ້ເປັນເຊື້ອສາຍຂອງຄົນເລວີ ຕາມຕະກູນຂອງເຂົາທັງຫລາຍ
31 ຄົນເຫລົ່ານີ້ ຄືແຕ່ລະຫົວຫນ້າຂອງຕະກູນ ແລະນ້ອງຊາຍຂອງເຂົາກໍເຫມືອນກັນໄດ້ຈັບສລາກດ້ວຍຢ່າງດຽວ
ກັບພີ່ນ້ອງຂອງເຂົາ ຄືບຸດອາໂຣນ ຕໍ່ພຣະພັກຂອງກະສັດດາວິດ ຊາໂດກ ອາຮີເມເລກ ແລະຕໍ່ຫນ້າຫົວຫນ້າ
ຂອງຕະກູນຂອງປະໂຣຫິດ ແລະຂອງຄົນເລວີ

## 25 ການແບ່ງນັກດົນຕຣີ

The Temple Musicians

1 ດາວິດແລະບັນດາຫົວຫນ້າຂອງຜູ້ບົວລະບັດໄດ້ຈັດແຍກບາງຄົນໄວ້ຄືຈາກລູກຫລານຂອງອາສາບ ແລະຂອງ
ເຮມານ ແລະຂອງເຢດູທູນ ຜູ້ຊຶ່ງຈະປະກາດພຣະທັມດ້ວຍພິນເຂົາຄູ່ ດ້ວຍພິນໃຫຍ່ ແລະດ້ວຍແສ່ງ ຣາຍ
ຊື່ຂອງຜູ້ທຳງານຕາມຫນ້າທີ່ຂອງເຂົາຄື
2 ຈາກເຊື້ອສາຍຂອງອາສາຟບ ຄືຊັກເກີ ໂຢເຊັບ ເນທານີຢາ ແລະອາຊາເຣລາ ລູກຫລານຂອງ

ອາສາຟ ພາຍໃຕ້ການນຳພາຂອງອາສາບ ຜູ້ປະກາດພຣະທັມພາຍໃຕ້ການຊີ້ງນຳຂອງກະສັດ

3 ຈາກເຢດູທູນ ຄືເຊື້ອສາຍເຢດູທູນ ມີເກດາລີຢາ ເຊຣີ ເຢຊັຍຢາ ຊີເມອີ ຮາຊາບີຢາ ແລະມັດຕີທີຢາ ຫົກຄົນ ພາຍໃຕ້ການນຳຂອງເຢດູທູນບິດາຂອງເຂົາ ຜູ້ປະກາດພຣະທັມດ້ວຍພິນເຂົາຄູ່ໃນການໂມທະນາ ແລະ ສັຣເສີນຕໍ່ພຣະຜູ້ເປັນເຈົ້າ

4 ຈາກເຮມານ ຄືເຊື້ອສາຍເຮມານ ມີບຸກກີຢາ ມັດຕານີຢາ ອູສຊີເອນ ເຊບູເອນ ແລະເຢຣີໂມທ ຮານານີຢາ ຮານານີ ເອລີຢາທາ ກິດດັນຕີ ແລະໂຣມັມຕີເອເຊີ ໂຢສເບກາຊາ ມັນໂລທີ ໂຮທີຣ໌ ມາຮາຊີໂອທ

5 ຄົນເຫລົ່ານີ້ເປັນບຸດເຮມານຜູ້ທຳນວາຍຂອງກະສັດຕາມພຣະສັນຍາຂອງພຣະຜູ້ເປັນເຈົ້າເພື່ອຈະເປົ່າແກ ແລະພຣະຜູ້ເປັນເຈົ້າຊົງປະທານບຸດຊາຍສິບສີ່ຄົນ ແລະບຸດຍິງສາມຄົນແກ່ເຮມານ

6 ເຂົາທັງຫລາຍທຸກຄົນຢູ່ພາຍໃຕ້ການນຳຂອງບິດາຂອງເຂົາ ເພື່ອປະກອບເພງໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ດ້ວຍແສ່ງ ພິນໃຫຍ່ ແລະພິນເຂົາຄູ່ ເພື່ອການບົວລະບັດໃນພຣະວິຫານຂອງພຣະເຈົ້າ ອາສາບ ເຢດູທູນ ແລະເຮມານ ຢູ່ພາຍໃຕ້ພຣະຣາຊດຳຣັດສັ່ງຂອງກະສັດ

7 ຈຳນວນຄົນຂອງເຂົາຣວມທັງພີ່ນ້ອງຂອງເຂົາ ຜູ້ຮັບການຝຶກໃນການຮ້ອງເພງຖວາຍພຣະຜູ້ເປັນເຈົ້າ ທຸກຄົນຜູ້ມີຄວາມຊຳນານ ມີສອງຮ້ອຍແປດສິບແປດຄົນ

8 ເຂົາທັງຫລາຍຈັບສລາກຫນ້າທີ່ຂອງເຂົາ ທັງຜູ້ນ້ອຍ ຜູ້ໃຫຍ່ ຄຣູແລະສິດກໍເຫມືອນກັນ

9 ສລາກທຳອິດຕົກເປັນພວກຂອງອາສາບໄດ້ແກ່ ໂຢເຊັບ ທີສອງໄດ້ແກ່ ເກດາລີຢາ ສລາກຕົກແກ່ເຂົາ ແລະພີ່ນ້ອງ ແລະບຸດຂອງເຂົາ ສິບສອງຄົນ

10 ທີສາມຕົກແກ່ຊັກເກີ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາສິບສອງຄົນ

11 ທີສີ່ຕົກແກ່ ອີສຣີ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

12 ທີຫ້າຕົກແກ່ ເນທານີຢາ ບຸດຂອງເຂົາ ແລະພີ່ນ້ອງເຂົາ ສິບສອງຄົນ

13 ທີຫົກໄດ້ແກ່ ບຸກກີຢາ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

14 ທີເຈັດໄດ້ແກ່ ເຢຊາເຣລາ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

15 ທີແປດໄດ້ແກ່ ເຢຊັຍຢາ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

16 ທີເກົ້າໄດ້ແກ່ ມັດຕານີຢາ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

17 ທີສິບໄດ້ແກ່ ຊີເມອີ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

18 ທີສິບເອັດໄດ້ແກ່ ອາຊາເຣນ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

19 ທີສິບສອງໄດ້ແກ່ ຮາຊາບີຢາ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

20 ທີສິບສາມໄດ້ແກ່ ຊູບາເອນ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

21 ທີສິບສີ່ໄດ້ແກ່ ມັດຕີທີຢາ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

22 ທີສິບຫ້າໄດ້ແກ່ ເຢເຣໂມທ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

23 ທີສິບຫົກໄດ້ແກ່ ຮານານີຢາ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

24 ທີສິບເຈັດໄດ້ແກ່ ໂຢສເບກາຊາ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

25 ທີສິບແປດໄດ້ແກ່ຮານານີ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

26 ທີສິບເກົ້າໄດ້ແກ່ ມັລໂລທີ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

27 ທີຊາວໄດ້ແກ່ ເອລີອາທາ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

28 ທີຊາວເອັດໄດ້ແກ່ ໂຮທີຣ໌ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

29 ທີຊາວສອງໄດ້ແກ່ກິດດັນຕີ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

30 ທີຊາວສາມໄດ້ແກ່ ມາຮາຊີໂອດບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

31 ທີຊາວສີ່ໄດ້ແກ່ ໂຣມາມຕີເອເຊີ ບຸດຂອງເຂົາ ແລະພີ່ນ້ອງຂອງເຂົາ ສິບສອງຄົນ

## 26 ຜູ້ເຝົ້າປະຕູແລະຜູ້ດູແລ

The Gatekeepers

1 ຝ່າຍກອງເວນເຝົ້າປະຕູ ຈາກຄົນໂກຣາ ມີເມເຊເລມີຢາ ບຸດໂກເຣ ເປັນເຊື້ອສາຍຂອງອາສາບ

2 ແລະເມເຊເລມີຢາ ມີບຸດຄື ເຊຄາຣີຢາ ບຸດຫົວປີ ເຢດີອາເອນທີສອງ ເຊບາດີຢາທີສາມ ຢັທນີເອນທີສີ່

3 ເອລາມທີຫ້າ ເຢໂຮຮານານທີຫົກ ເອລີເອໂຮເອນັຍທີເຈັດ

4 ໂອເບດເອໂດມມີບຸດຊາຍ ຄືເຊມັຍຢາບຸດຫົວປີ ເຢໂຮຊາບາດທີສອງ ເຢອາທີສາມ ຊາຄາຣ໌ທີສີ່ ເນທານເອນທີຫ້າ

5 ອັມມີເອນທີຫົກ ອິສຊາຄາທີເຈັດ ເປອູນເລທັຍທີແປດ ເພາະວ່າພຣະເຈົ້າຊົງອຳນວຍພຣະພອນແກ່ເຂົາ

6 ແລະແກ່ເຊມັຍຢາ ບຸດຂອງເຂົາດ້ວຍ ມີບຸດຊາຍຫລາຍຄົນເກີດແກ່ເຂົາ ເປັນຜູ້ປົກຄອງໃນຄົວເຮືອນບິດາຂອງເຂົາ ເພາະເຂົາທັງຫລາຍເປັນຄົນມີຄວາມສາມາດ

7 ບຸດເຊມັຍຢາ ຄືໂອທນີ ເຣຟາເອນ ໂອເບດ ແລະເອນຊາບັດຜູ້ຊຶ່ງພີ່ນ້ອງຂອງເຂົາເປັນຄົນສາມາດ ຄືເອລີຮູ ແລະເຊມາຄີຢາ

8 ຄົນເຫລົ່ານີ້ທັງຫມົດເປັນບຸດໂອເບດເອໂດມກັບບຸດຊາຍແລະພີ່ນ້ອງຂອງເຂົາ ເປັນຄົນສາມາດມີກຳລັງເຫມາະແກ່ການບົວລະບັດເປັນຂອງໂອເບດເອໂດມຫົກສິບສອງຄົນ

9 ແລະເມເຊເລມີຢາ ມີບຸດຊາຍແລະພີ່ນ້ອງເປັນຄົນສາມາດສິບແປດຄົນ

10 ແລະໂຮຊາຜູ້ເປັນເຊື້ອສາຍຂອງເມຣາຣີມີບຸດ ຄືຊີມຣີຜູ້ເປັນຫົວຫນ້າ (ເພາະເຖິງເຂົາຈະບໍ່ມີບຸດຫົວປີ ບິດາຂອງເຂົາກໍໃຫ້ເຂົາເປັນຫົວຫນ້າ)

11 ຮີລກີຢາທີສອງ ເຕບາລີຢາທີສາມ ເຊຄາຣີຢາທີສີ່ ບຸດຊາຍແລະພີ່ນ້ອງຂອງໂຮຊາທັງສິ້ນ ມີສິບສາມຄົນ

12 ກອງເວນເຝົ້າປະຕູເຫລົ່ານີ້ຕາມຄົນຜູ້ເປັນຫົວຫນ້າຂອງເຂົາ ມີຫນ້າທີ່ເຊັ່ນດຽວກັບພີ່ນ້ອງຂອງເຂົາ ໃນການບົວລະບັດໃນພຣະວິຫານຂອງພຣະເຈົ້າ

13 ແລະເຂົາຈັບສລາກກັນຕາມຕະກູນຂອງເຂົາ ທັງຜູ້ນ້ອຍແລະຜູ້ໃຫຍ່ເຫມືອນກັນ ສຳລັບແມ່ນໃຜຢູ່ປະຕູໃດ

14 ສລາກສຳລັບດ້ານຕາເວັນອອກຕົກແກ່ ເຊເລມີຢາ ເຂົາຈັບສລາກໃຫ້ບຸດເຊຄາຣີຢາດ້ວຍ ເຂົາເປັນທີ່ປຶກສາທີ່ສລຽວສລາດ ແລະສລາກຂອງເຂົາອອກມາສຳລັບດ້ານເຫນືອ

15 ຂອງໂອເບດເອໂດມອອກມາສຳລັບດ້ານໃຕ້ ສາງເກັບເຄື່ອງນັ້ນເຂົາຈັດໃຫ້ບຸດຂອງເຂົາດູແລ

16 ສ່ວນຂອງຊູບປີມ ແລະໂຮຊາ ອອກມາສຳລັບດ້ານຕາເວັນຕົກ ທີ່ປະຕູຊັນເລເຄດ ຕາມຖນົນທີ່ຂຶ້ນໄປ ກຳຫນົດຍາມຕາມຍາມ

17 ດ້ານຕາເວັນອອກມີຄົນເລວີຫົກຄົນ ດ້ານເຫນືອມີສີ່ຄົນທຸກວັນ ດ້ານໃຕ້ວັນລະສີ່ຄົນທຸກວັນ ແລະສອງຄູ່ທີ່ສາງເກັບເຄື່ອງ

18 ສຳລັບລະບຽງທາງຕາເວັນຕົກນັ້ນ ມີສີ່ຄົນທີ່ຖນົນ ແລະສອງຄົນທີ່ລະບຽງ

19 ຄົນເຫລົ່ານີ້ເປັນເວນເຝົ້າປະຕູຈາກເຊື້ອສາຍໂກຣາ ແລະເຊື້ອສາຍເມຣາຣີ

### ຜູ້ດູແລຄັງ

The Treasurers, Officers, and Judges

20 ຈາກຄົນເລວີນັ້ນ ອາຮີຢາດູແລຄັງພຣະວິຫານຂອງພຣະເຈົ້າ ແລະຄັງສິ່ງຂອງຖວາຍ

21 ບຸດຫລານຂອງລາດານ ຄືບຸດຫລານຂອງຄົນເກໂຊນ ທີ່ເປັນບຸດຂອງລາດານ ຫົວຫນ້າຕະກູນທີ່ເປັນຂອງລາດານ ຄົນເກໂຊນ ຄືເຢຮີເອລີ

22 ບຸດເຢຮີເອລີ ຄືເຊທາມ ແລະໂຢເອນນ້ອງຊາຍຂອງເຂົາ ເປັນຜູ້ດູແລຄັງພຣະວິຫານຂອງພຣະຜູ້ເປັນເຈົ້າ
23 ຈາກຄົນອັມຣາມ ຄົນອິສຮາ ຄົນເຮໂບຣນ ແລະຄົນອູສຊີເອນ
24 ຄົນເຊບູເອນ ບຸດເກີໂຊມຜູ້ເປັນບຸດໂມເຊ ເປັນນາຍຄັງໃຫຍ່
25 ພີ່ນ້ອງຂອງເຂົາ ຄື ຈາກເອລີເອເຊີ ມີເຣຮັບຢາເປັນບຸດ ບຸດເຣຮັບຢາ ຄືເຢຊັຍຢາ ບຸດເຢຊັຍຢາ ຄືໂຢຣາມ ບຸດ
ໂຢຣາມ ຄືຊິກຣີ ບຸດຊິກຣີ ຄືເຊໂລໂມດ
26 ເຊໂລໂມດຄົນນີ້ ແລະພີ່ນ້ອງຂອງເຂົາເປັນຜູ້ດູແລຄັງຂອງຖວາຍທັງສິ້ນຊຶ່ງດາວິດກະສັດ ແລະບັນດາຫົວໜ້າ
ຕະກູນ ແລະນາຍພັນ ນາຍຮ້ອຍ ແລະຜູ້ບັນຊາການກອງທັບໄດ້ມອບຖວາຍໄວ້
27 ຈາກຂອງທີ່ຍຶດໄດ້ຊຶ່ງເຂົາໄດ້ທຳສົງຄາມ ເຂົາທັງຫລາຍມອບຖວາຍເພື່ອແກ່ການສ້ອມແຊມພຣະວິຫານຂອງ
ພຣະເຈົ້າ
28 ແລະຊຶ່ງຊາມູເອນຜູ້ທຳນວາຍ ແລະຊາອູນບຸດຄີສ ແລະອັບເນີບຸດເນີ ແລະໂຢອາບບຸດນາງເຊຣູຢາໄດ້ຖວາຍ
ໄວ້ ຂອງຖວາຍທັງສິ້ນຢູ່ໃນຄວາມດູແລຂອງເຊໂລໂມດ ແລະພີ່ນ້ອງຂອງເຂົາ
29 ຈາກຄົນອິສຮາ ເຄນານີຢາ ແລະບຸດຂອງເຂົາໄດ້ຮັບແຕ່ງຕັ້ງໃຫ້ມີໜ້າທີ່ພາຍນອກສຳລັບອິສຣາເອນ ໃຫ້ເປັນ
ເຈົ້າໜ້າທີ່ ແລະເປັນຜູ້ປົກຄອງ
30 ຈາກຄົນເຮໂບຣນ ຮາຊາບີຢາ ແລະພີ່ນ້ອງຂອງເຂົາເປັນຄົນມີຄວາມສາມາດ ນຶ່ງພັນເຈັດຮ້ອຍຄົນ ໄດ້ເປັນຜູ້ດູ
ແລອິສຣາເອນທາງຟາກຕາເວັນຕົກຂອງແມ່ນ້ຳຈໍແດນ ໃນເຣື່ອງກິຈການທັງສິ້ນຂອງພຣະຜູ້ເປັນເຈົ້າ ແລະຣາ
ຊການຂອງກະສັດ
31 ຈາກຄົນເຮໂບຣນ ມີເຢຣີຢາເປັນຫົວໜ້າຂອງຄົນເຮໂບຣນ ຕາມຊາດເຊື້ອສາຍ ຕາມຕະກູນ (ໃນປີທີສີ່ສິບ
ຂອງຣັຊການດາວິດ ເຂົາໄດ້ສຳຣວດ ແລະພົບຄົນທີ່ມີຄວາມສາມາດຢ່າງຍິ່ງທີ່ຢາເຊີໃນເມືອງກີເລອາດ)
32 ກະສັດດາວິດໄດ້ຊົງແຕ່ງຕັ້ງໃຫ້ທ່ານແລະພີ່ນ້ອງຂອງທ່ານ ຄືຄົນທີ່ມີຄວາມສາມາດສອງພັນເຈັດຮ້ອຍຄົນຜູ້
ເປັນຫົວໜ້າຕະກູນໃຫ້ເປັນຜູ້ດູແລຄົນຣູເບນ ຄົນກາດ ແລະຄົນເຜົ່າມານັສເຊເຄິ່ງນຶ່ງ ໃນກິດທຸຣະທຸກຢ່າງ
ກ່ຽວກັບພຣະເຈົ້າ ແລະກິດ
ທຸຣະກ່ຽວກັບກະສັດ

## 27 ບັນດານາຍທັບນາຍກອງຂອງຣາຊອານາຈັກ

The Military Divisions

1 ຕໍ່ໄປນີ້ເປັນຣາຍຊື່ປະຊາຊົນອິສຣາເອນຕາມຈຳນວນ ຄືບັນດາຫົວໜ້າຕະກູນ ບັນດານາຍພັນນາຍຮ້ອຍ
ແລະບັນດາເຈົ້າໜ້າທີ່ຜູ້ຮັບໃຊ້ກະສັດໃນຣາຊການທຸກຢ່າງທີ່ກ່ຽກັບກອງເວນທີ່ເຂົ້າມາແລະອອກໄປ ເດືອນ
ແລ້ວເດືອນເລົ່າຕລອດປີ ກອງເວນນຶ່ງໆມີຈຳນວນສອງໝື່ນສີ່ພັນຄົນ
2 ຄື ຢາໂຊເບອາມ ບຸດຊັບດີເອນເປັນຜູ້ດູແລກອງເວນທີນຶ່ງໃນເດືອນຕົ້ນໃນກອງເວນຂອງເຂົາມີສອງໝື່ນສີ່ພັນ
ຄົນ
3 ເຂົາເປັນເຊື້ອສາຍຂອງເປເຣສ ແລະເປັນຫົວໜ້າຜູ້ບັນຊາການກອງທັບທັງສິ້ນໃນເດືອນຕົ້ນ
4 ໂດດັຍຕະກູນອາໂຮຮິດເປັນຜູ້ດູແລກອງເວນຂອງເດືອນທີສອງ ມີກໂລດເປັນຫົວໜ້າ ໃນກອງເວນຂອງເຂົາມີ
ສອງໝື່ນສີ່ພັນຄົນ
5 ຜູ້ບັງຄັບບັນຊາການກອງທັບຄົນທີສາມສຳລັບເດືອນທີສາມ ຄືເບນັຍຢາ ບຸດເຢຮົວອາດາປະໂຣຫິດ ເປັນຫົວ
ໜ້າໃນກອງເວນຂອງເຂົາມີສອງໝື່ນສີ່ພັນຄົນ
6 ເບນັຍຢານີ້ ຄືຜູ້ທີ່ເປັນທະຫານທີ່ເກັ່ງກ້າໃນຈຳນວນສາມສິບຄົນ ແລະເປັນຜູ້ບັນຊາການຂອງສາມສິບຄົນນັ້ນ
ອັມມີຊາບັດບຸດຂອງເຂົາເປັນຜູ້ດູແລກອງເວນຂອງເຂົາ

7 ອາຊາເຮນນ້ອງຊາຍຂອງໂຢອາບເປັນເວນທີສີ່ ແລະເຊບາດີຢາບຸດຂອງເຂົາດູແລຕໍ່ຈາກເຂົາ ໃນກອງເວນຂອງເຂົາມີສອງຫມື່ນສີ່ພັນຄົນ

8 ຜູ້ບັນຊາການຄົນທີຫ້າ ສໍາລັບເດືອນທີຫ້າ ຄືຊຳຮູດຕະກູນອິສຣາເອນ ໃນກອງເວນຂອງເຂົາມີສອງຫມື່ນສີ່ພັນຄົນ

9 ຄົນທີຫົກ ສໍາລັບເດືອນທີຫົກ ຄືອີຣາບຸດອິກເຄັສ ຊາວເຕໂກ ໃນກອງເວນຂອງເຂົາມີສອງຫມື່ນສີ່ພັນຄົນ

10 ຄົນທີເຈັດ ສໍາລັບເດືອນທີເຈັດ ຄື ເຮເລກ ຄົນເປໂລນິດ ເປັນເຊື້ອສາຍຂອງເອຟຣາອິມ ໃນກອງເວນຂອງເຂົາມີສອງຫມື່ນສີ່ພັນຄົນ

11 ຄົນທີແປດ ສໍາລັບເດືອນທີແປດ ຄືຊິບເບກັຍ ຄົນຮູຊາທິດແຫ່ງຕະກູນເຊຣາ ໃນກອງເວນຂອງເຂົາມີສອງຫມື່ນສີ່ພັນຄົນ

12 ຄົນທີເກົ້າ ສໍາລັບເດືອນທີເກົ້າ ຄືອາບີເອເຊີ ຊາວອານາໂທດ ຄົນເບັນຢາມິນ ກອງເວນຂອງເຂົາມີສອງຫມື່ນສີ່ພັນຄົນ

13 ຄົນທີສິບ ສໍາລັບເດືອນທີສິບ ຄືມາຣາລັຍ ຄົນເນໂຕຟາ ຈາກຕະກູນເຊຣາ ກອງເວນຂອງເຂົາມີສອງຫມື່ນສີ່ພັນຄົນ

14 ຄົນທີສິບເອັດ ສໍາລັບເດືອນທີສິບເອັດ ຄືເບນັຍຢາ ຊາວປີຣາໂທນ ຈາກເຊື້ອສາຍເອຟຣາອິມ ໃນກອງເວນຂອງເຂົາມີສອງຫມື່ນສີ່ພັນຄົນ

15 ຄົນທີສິບສອງ ສໍາລັບເດືອນທີສິບສອງ ຄືເຮນດັຍ ຊາວເນໂຕຟາ ຈາກຕະກູນໂອດນີເອນ ໃນກອງເວນຂອງເຂົາມີສອງຫມື່ນສີ່ພັນຄົນ

Leaders of Tribes

16 ເຫນືອເຜົ່າຕ່າງໆຂອງອິສຣາເອນ ຄືສໍາລັບຄົນຣູເບນ ມີເອລີເອເຊີ ບຸດຊີກຣີເປັນຫົວຫນ້າ ສໍາລັບຄົນຊີເມໂອນ ມີເຊຟາຕີຢາ ບຸດມາອາກາ

17 ສໍາລັບຄົນເລວີ ມີຮາຊາບີຢາ ບຸດເຄມູເອນ ສໍາລັບອາໂຣນ ຊາໂດກ

18 ສໍາລັບຢູດາ ມີເອລີຮູ ອ້າຍຄົນນຶ່ງຂອງດາວິດ ສໍາລັບອິສຊາຄາ ໂອມຣີ ບຸດມີຄາເອນ

19 ສໍາລັບເຊບູລູນ ມີ ອິສມາຢາ ບຸດໂອບາດີຢາ ສໍາລັບເນັບທາລີ ມີເຢຣີໂມດ ບຸດອັສຣີເອນ

20 ສໍາລັບຄົນເອຟຣາອິມ ມີໂຮເຊອາ ບຸດອາຊາຊີຢາ ສໍາລັບມານັສເຊເຄິ່ງເຜົ່າ ມີໂຢເອນ ບຸດເປດັຍຢາ

21 ສໍາລັບມານັສເຊເຄິ່ງເຜົ່າໃນກີເລອາດ ມີອິດໂດ ບຸດເຊຄາຣີຢາ ສໍາລັບເບັນຢາມິນ ຢາອາຊີເອນ ບຸດອັບເນີ

22 ສໍາລັບດານ ອາຊາເຣນ ບຸດເຢໂຣຮາມ ຄົນເຫລົ່ານີ້ເປັນຫົວຫນ້າຂອງເຜົ່າຕ່າງໆແຫ່ງອິສຣາເອນ

23 ດາວິດບໍ່ໄດ້ຊົງນັບຈໍານວນຄົນທີ່ອາຍຸຕໍ່າກວ່າຊາວປີ ເພາະພຣະຜູ້ເປັນເຈົ້າຊົງສັນຍາວ່າຈະກະທໍາໃຫ້ອິສຣາເອນຫລາຍເຫມືອນດວງດາວແຫ່ງທ້ອງຟ້າ

24 ໂຢອັບ ບຸດເຊຣູຢາໄດ້ຕັ້ງຕົ້ນນັບ ແຕ່ບໍ່ສໍາເຣັດ ເຖິງປານນັ້ນພຣະພິໂຣດກໍມາເຫນືອອິສຣາເອນໃນເຣື່ອງນີ້ ແລະຈໍານວນນັ້ນກໍບໍ່ໄດ້ລົງໄວ້ໃນຫນັງສືພົງສາວະດານຂອງກະສັດດາວິດ

Other Civic Officials

25 ອັສມາເວດ ບຸດອາດີເອນເປັນເຈົ້າກົມພຣະຄັງນະຄອນຫລວງ ແລະໂຢນາທານ ບຸດອຸສຊີຢາ ເປັນເຈົ້າກົມຄັງນອກນະຄອນ ໃນຫົວເມືອງໃນຊົນນະບົດແລະໃນປ້ອມ

26 ເອັສຣີ ບຸດເຄລູບ ເປັນຜູ້ດູແລບັນດາຜູ້ທີ່ທໍາໄຮ່ນາຫລວງ

27 ຊີເມອີ ຊາວຣາມາດູແລສວນອະງຸ່ນ ແລະຊັບດີ ຊາວຊີບ ດູແລຜລິດຜົນຂອງສວນອະງຸ່ນສໍາລັບຫ້ອງເກັບເຫລົ້າອະງຸ່ນ

28 ບາອັນຮານານ ຊາວເກເດີເປັນຜູ້ດູແລຕົ້ນຫມາກກອກເທດ ແລະຕົ້ນຫມາກເດື່ອບ່ອນໃນຖິ່ນເນີນເຊເຟລາ ໂຢ
ອັສດູແລຄັງນ້ຳມັນ
29 ຊີດຣັຍ ຊາວຊາໂຣນດູແລຝູງງົວຊຶ່ງຫາກິນຢູ່ໃນຊາໂຣນ ຊາຟັດ ບຸດອັດລັຍດູແລຝູງງົວໃນທີ່ລຸ່ມທັງຫລາຍ
30 ແລະໂອບິນ ຊາວອິຊມາເອນດູແລອູດ ເຢເດຢາ ຊາວເມໂຣໂນດດູແລລໍ ຢາຊີສ ຊາວຮັກຣີດູແລຝູງແບ້ ແກະ
31 ເຫລົ່ານີ້ເປັນພະນັກງານດູແລຊັບສົມບັດຂອງກະສັດດາວິດ
32 ໂຢນາທານລຸງຂອງດາວິດເປັນທີ່ປຶກສາ ເປັນຄົນທີ່ມີຄວາມເຂົ້າໃຈແລະເປັນນັກຮຽນຮູ້ຜູ້ນຶ່ງ ເຢຮີເອນ ບຸດຮັກ
ໂມນີດູເປັນຜູ້ລ້ຽງດູຣາຊບຸດ
33 ອາຮີໂທເຟນເປັນທີ່ປຶກສາຂອງກະສັດ ແລະຮູຊັຍ ຕະກູນອາຣ໌ຄີເປັນພຣະສະຫາຍຂອງພຣະຣາຊາ
34 ເຢຮົວອາດາ ບຸດເບນັຍຢາ ແລະອາບີອາທາຣ໌ ເປັນຜູ້ທຳງານຕໍ່ຈາກອາຮີໂທເຟນ ໂຢອາບເປັນຜູ້ບັນຊາ
ການກອງທັບຂອງກະສັດ

## 28 ດາວິດຊົງມອບງານສ້າງພຣະວິຫານໃຫ້ໂຊໂລໂມນ

Solomon Instructed to Build the Temple

1 ໃນເຢຣູຊາເລັມ ດາວິດໄດ້ຊົງເອີ້ນປະຊຸມບັນດາເຈົ້ານາຍທັງສິ້ນຂອງອິສຣາເອນ ຄືເຈົ້ານາຍຂອງເຜົ່າແລະຜູ້
ບັນຊາການກອງທັບ ທີ່ຮັບຣາຊການ ນາຍພັນນາຍຮ້ອຍ ແລະພະນັກງານທັງສິ້ນຜູ້ດູແລຊັບສົມບັດ ແລະຝູງ
ສັດຂອງກະສັດແລະບຸດຊາຍຂອງພຣະອົງ ພ້ອມກັບພະນັກງານຣາຊສຳນັກ ທະຫານທີ່ເກັ່ງກ້າແລະວິຣະບຸຣຸດ
ທັງສິ້ນ
2 ແລ້ວກະສັດດາວິດຊົງລຸກຂຶ້ນປະທັບຢືນ ແລະກ່າວວ່າ, “ພີ່ນ້ອງຂອງຂ້າພະເຈົ້າ ແລະປະຊາຊົນຂອງຂ້າພະ
ເຈົ້າ ຂໍຈົ່ງຟັງຂ້າພະເຈົ້າ ຂ້າພະເຈົ້າມີໃຈປະສົງທີ່ຈະສ້າງພຣະວິຫານອັນເປັນທີ່ພັກຂອງຫີບຄຳສັນຍາຂອງພ
ຣະເຈົ້າ ແລະເພື່ອເປັນທີ່ຮອງພຣະບາດຂອງພຣະເຈົ້າຂອງເຮົາ ແລະຂ້າພະເຈົ້າໄດ້ຈັດຕຽມການກໍ່ສ້າງໄວ້ຮຽບ
ຮ້ອຍແລ້ວ
3 ແຕ່ພຣະເຈົ້າກ່າວກັບຂ້າພະເຈົ້າວ່າ “ເຈົ້າຢ່າສ້າງວິຫານເພື່ອນາມຂອງເຮົາເລີຍ ເພາະເຈົ້າເປັນນັກຮົບ ແລະ
ໄດ້ເຮັດໃຫ້  ເລືອດຫລັ່ງໄຫລ”
4 ເຖິງປານນັ້ນກໍດີ ພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນຊົງເອີ້ນຂ້າພະເຈົ້າຈາກຕະກູນຂອງຂ້າພະເຈົ້າໃຫ້
ເປັນກະສັດເຫນືອອິສຣາເອນເປັນນິດ ເພາະພຣະອົງຊົງເລືອກຢູດາໃຫ້ເປັນຜູ້ນຳ ແລະໃນວົງຂອງຢູດາ ຕະກູນ
ຂອງຂ້າພະເຈົ້າ ແລະໃນບັນດາບຸດຊາຍຂອງບິດາຂອງຂ້າພະເຈົ້າ ພຣະອົງຊົງພໍພຣະທັຍໃນຂ້າພະເຈົ້າ ແລະ
ຊົງໃຫ້ຂ້າພະເຈົ້າເປັນກະສັດເຫນືອອິສຣາເອນທັງປວງ
5 ແລະບຸດຊາຍທັງສິ້ນຂອງຂ້າພະເຈົ້າ (ເພາະພຣະເຈົ້າຊົງປະທານບຸດຊາຍເປັນອັນມາກແກ່ຂ້າພະເຈົ້າ) ພຣະ
ອົງຊົງເລືອກໂຊໂລໂມນບຸດຂ້າພະເຈົ້າໃຫ້ນັ່ງບັນລັງແຫ່ງຣາຊອານາຈັກຂອງຂ້າພະເຈົ້າເຫນືອອິສຣາເອນ
6 ພຣະອົງຊົງກ່າວກັບຂ້າພະເຈົ້າວ່າ “ໂຊໂລໂມນບຸດຂອງເຈົ້າຈະສ້າງວິຫານຂອງເຮົາ ແລະລານວິຫານຂອງເຮົາ
ເພາະເຮົາຈະເປັນບິດາຂອງເຂົາ
7 ເຮົາຈະສະຖາປະນາຣາຊອານາຈັກຂອງເຂົາໃຫ້ຢູ່ເປັນນິດ ຖ້າເຂົາຈະພຽນແນ່ວແນ່ຢູ່ໃນການຮັກສາປະຕິບັດ
ຕາມບັນຍັດຂອງເຮົາ ແລະກົດຫມາຍຂອງເຮົາຢ່າງທີ່ເຂົາກະທຳຢູ່ທຸກວັນນີ້”
8 ເພາະສະນັ້ນຕໍ່ຫນ້າບັນດາຄົນອິສຣາເອນທັງປວງອັນເປັນຊຸມນຸມຊົນຂອງພຣະເຈົ້າ ແລະຕໍ່ພຣະກັນຂອງພຣະ
ເຈົ້າຂອງເຮົາ ຈົ່ງປະພຶດຕາມ ແລະສແວງພຣະບັນຍັດທັງສິ້ນຂອງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າທັງຫລາຍ
ເພື່ອເຈົ້າຈະໄດ້ກຳມະສິດແຜ່ນດິນອັນດີນີ້ ແລະມອບໄວ້ໃຫ້ເປັນມໍຣະດົກຂອງລູກຫລານຜູ້ມາພາຍຫລັງເຈົ້າ
ສືບໄປເປັນນິດ

9 “ໂຊໂລໂມນບຸດຂອງເຮົາເອີຍ ເຈົ້າຈົ່ງຮູ້ຈັກພຣະເຈົ້າ ແລະຈົ່ງບົວລະບັດພຣະອົງດ້ວຍໃຈຈິງແລະດ້ວຍຄວາມ
ເຕັມໃຈຂອງເຈົ້າ ເພາະພຣະເຈົ້າຊົງພິຈາຣະນາຈິດໃຈທັງປວງ ແລະຊົງເຂົ້າໃຈໃນແຜນງານແລະຄວາມຄິດທັງ
ປວງ ຖ້າເຈົ້າສແວງຫາ
ພຣະອົງເຈົ້າຈະພົບພຣະອົງ ແຕ່ຖ້າເຈົ້າປະຖິ້ມພຣະອົງ ພຣະອົງຈະຊົງແກ່ວງເຈົ້າອອກໄປເສັຽເປັນນິດ
10 ບັດນີ້ຈົ່ງຟັງໃຫ້ດີ ເພາະວ່າພຣະເຈົ້າຊົງເລືອກເຈົ້າໃຫ້ສ້າງພຣະວິຫານເພື່ອເປັນສະຖານນະມັສການ ຈົ່ງເຂັ້ມ
ແຂງແລະທຳໃຫ້ສຳເຣັດເຖີດ”
11 ແລ້ວດາວິດຊົງມອບໃຫ້ກັບໂຊໂລໂມນ ຊຶ່ງແຜນຜັງມຸກຂອງພຣະວິຫານ ແລະແຜນຜັງເຮືອນຕ່າງໆຂອງພຣະ
ວິຫານນັ້ນ ຄັງແລະຫ້ອງຊັ້ນໃນ ແລະຫ້ອງສຳລັບພຣະທີ່ນັ່ງກະຣຸນາ
12 ແລະແຜນຜັງຊຶ່ງພຣະອົງມີຢູ່ໃນພຣະທັຍໃນເຣື່ອງລານຂອງພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະຫ້ອງລະ
ບຽງຮອບ ແລະຄັງສຳລັບພຣະວິຫານຂອງພຣະເຈົ້າ ແລະຄັງສຳລັບບັນດາຂອງຖວາຍ
13 ແລະລະບຽບສຳລັບເວນປະໂຣຫິດ ແລະເວນຄົນເລວີ ແລະງານບົວລະບັດທັງສິ້ນໃນພຣະວິຫານຂອງພຣະຜູ້
ເປັນເຈົ້າ
14 ນໍ້າໜັກທອງຄຳຂອງເຄື່ອງໃຊ້ທອງຄຳທຸກຢ່າງ ສຳລັບການບົວລະບັດແຕ່ລະຢ່າງ ນໍ້າໜັກເງິນຂອງເຄື່ອງໃຊ້
ເງິນທຸກຢ່າງສຳລັບງານບົວລະບັດແຕ່ລະຢ່າງ
15 ນໍ້າໜັກຂອງເຄື່ອງຮອງຕີນໂຄມທອງຄຳ ແລະຕະກຽງ ນໍ້າໜັກທອງຄຳຂອງເຄື່ອງຮອງຕີນໂຄມແຕ່ລະອັນ
ກັບຕະກຽງແຕ່ລະດວງ ນໍ້າໜັກເງິນຂອງເຄື່ອງຮອງຕີນໂຄມອັນນຶ່ງກັບຕະກຽງຄູ່ກັນ ຕາມທີ່ຈະໃຊ້ເຄື່ອງຮອງ
ຕີນໂຄມແຕ່ລະອັນໃນການບົວລະບັດ
16 ນໍ້າໜັກທອງຄຳສຳລັບໂຕະເຂົ້າໜົມຕັ້ງຖວາຍແຕ່ລະໂຕະ ເງິນສຳລັບໂຕະເງິນ
17 ແລະສ້ອມ ອ່າງ ກັບຖ້ວຍເປັນທອງຄຳບໍຣິສຸດ ຊາມທອງຄຳແລະນໍ້າໜັກຂອງແຕ່ລະໃບ ຊາມເງິນແລະນໍ້າ
ໜັກຂອງແຕ່ລະໃບ
18 ແທ່ນເຄື່ອງຫອມທຳດ້ວຍທອງຄຳເນື້ອລະອຽດ ແລະນໍ້າໜັກຂອງແທ່ນນັ້ນ ທັງແຜນຜັງສຳລັບຣົດຣົບທອງຄຳ
ຂອງເຊຣູບິມ ຊຶ່ງກາງປີກອອກປົກທີບຄຳສັນຍາຂອງພຣະຜູ້ເປັນເຈົ້າ
19 ສິ່ງເຫລົ່ານີ້ດາວິດຊົງກະທຳໃຫ້ກະຈ່າງໂດຍອາສັຍລາຍພຣະຫັດຂອງພຣະຜູ້ເປັນເຈົ້າກ່ຽວດ້ວຍເຣື່ອງນີ້ ຄືງານ
ທຸກຢ່າງຊຶ່ງຈະຕ້ອງກະທຳຕາມແຜນຜັງນັ້ນ
20 ແລ້ວດາວິດສັ່ງກັບໂຊໂລໂມນບຸດຊາຍຂອງພຣະອົງວ່າ, “ຈົ່ງເຂັ້ມແຂງແລະກ້າຫານ ແລະທຳໃຫ້ສຳເຣັດເຖີດ
ຢ່າຢ້ານກົວເລີຍ ຢ່າໃຫ້ມີສິ່ງໃດສິ່ງນຶ່ງຂັດຂວາງເຈົ້າເລີຍ ເພາະວ່າພຣະຜູ້ເປັນເຈົ້າ ຄືພຣະເຈົ້າຂອງຂ້າຊົງສະ
ຖິດກັບເຈົ້າ ພຣະອົງຈະບໍ່ຊົງປ່ອຍໃຫ້ເຈົ້າລົ້ມເຫລວຫລືປະຖິ້ມເຈົ້າ ຈົນກວ່າງານທັງສິ້ນສຳລັບງານບົວລະບັດ
ແຫ່ງພຣະວິຫານຂອງເຈົ້າສຳເຣັດ
21 ເບິ່ງແມ່, ມີເວນປະໂຣຫິດ ແລະເວນຄົນເລວີ ສຳລັບງານບົວລະບັດທຸກຢ່າງແຫ່ງພຣະວິຫານຂອງພຣະເຈົ້າ
ໃນການນີ້ທັງສິ້ນ ຈະມີຄົນຢູ່ກັບເຈົ້າ ຄືທຸກຄົນທີ່ເຕັມໃຈ ແລະເປັນຜູ້ມີຝີມືໃນງານບົວລະບັດທຸກຢ່າງ ທັງເຈົ້າ
ໜ້າທີ່ແລະປະຊາຊົນທັງປວງຈະຢູ່ໃນບັງຄັບບັນຊາຂອງເຈົ້າທັງສິ້ນ”

## 29

### Offerings for Building the Temple

1 ແລະກະສັດດາວິດພຣະຣາຊາສັ່ງກັບຊຸມນຸມຊົນທັງປວງວ່າ, “ໂຊໂລໂມນບຸດຂອງເຮົາຊຶ່ງເປັນຜູ້ດຽວທີ່ພຣະ
ເຈົ້າຊົງເລືອກໄວ້ນັ້ນ ຍັງເປັນຄົນໜຸ່ມແລະບໍ່ມີຄວາມຊຳນານ ການງານກໍຍິ່ງໃຫຍ່ຫລາຍ ເພາະວ່າພຣະພຣະ
ວິຫານນັ້ນບໍ່ແມ່ນສຳລັບຄົນ ແຕ່ສຳລັບພຣະເຈົ້າ

2 ເພາະສະນັ້ນເຮົາຈຶ່ງຈັດຕຽມໄວ້ສໍາລັບພຣະວິຫານຂອງພຣະເຈົ້າ ເຕັມຄວາມສາມາດຂອງເຮົາ ຄືທອງຄໍາສໍາ
ລັບສິ່ງທີ່ທໍາດ້ວຍທອງຄໍາ ແລະເງິນສໍາລັບສິ່ງທີ່ທໍາດ້ວຍເງິນ ແລະທອງສໍາຣິດ ແລະເຫລັກສໍາລັບສິ່ງທີ່ທໍາດ້ວຍ
ເຫລັກ ແລະໄມ້ສໍາລັບສິ່ງທີ່ທໍາດ້ວຍໄມ້ ນອກເຫນືອຈາກນີ້ກໍມີແກ້ວໂມເມນ ແລະແກ້ວສໍາລັບຝັງຫີນທີ່ມີຄ່າ
ຫີນລາຍ ເພັດພອຍທຸກຊນິດແລະຫີນອ່ອນ
3 ນອກຈາກສິ່ງທີ່ເຮົາຈັດຫາໄວ້ສໍາລັບພຣະວິຫານສັກສິດແລ້ວ ເຮົາຍັງມີທອງຄໍາແລະເງິນເປັນສົມບັດຂອງເຮົາ
ແລະເພາະຄວາມຮັກຂອງເຮົາທີ່ມີຕໍ່ພຣະຜາສາດຂອງພຣະເຈົ້າຂອງເຮົາ ເຮົາຂໍມອບໃຫ້ແກ່ພຣະວິຫານແຫ່ງ
ພຣະເຈົ້າຂອງເຮົາ
4 ດັ່ງນີ້ ທອງຄໍາສາມພັນຕະລັນ ເປັນທອງຄໍາເມືອງໂອຟີຣ໌ ແລະເງິນເຈັດພັນຕະລັນ ເພື່ອຈະໃຊ້ຕົກແຕ່ງຝາພຣະ
ວິຫານ
5 ທອງຄໍາສໍາລັບສິ່ງທີ່ທໍາດ້ວຍທອງຄໍາ ແລະເງິນສໍາລັບສິ່ງທີ່ທໍາດ້ວຍເງິນ ແລະເພື່ອງານທັງສິ້ນທີ່ຊ່າງຈະຕ້ອງ
ທໍາດ້ວຍມື ໃຜແດ່ເຕັມໃຈທີ່ຈະຖວາຍຂອງພ້ອມກັບຖວາຍຕົວແດ່ພຣະເຈົ້າໃນວັນນີ້”
6 ແລະຫົວຫນ້າຂອງຕະກູນ ບັນດາຫົວຫນ້າຂອງເຜົ່າ ທັງນາຍພັນນາຍຮ້ອຍແລະພະນັກງານດູແລຣາຊການກໍ
ຖວາຍດ້ວຍຄວາມເຕັມໃຈ
7 ເຂົາທັງຫລາຍຖວາຍເພື່ອງານບົວລະບັດແຫ່ງພຣະວິຫານຂອງພຣະເຈົ້າ ເປັນທອງຄໍາຫ້າພັນຕະລັນ ແລະນຶ່ງ
ຫມື່ນດາຣິກ ເງິນນຶ່ງຫມື່ນຕະລັນທອງສໍາຣິດນຶ່ງຫມື່ນແປດພັນຕະລັນ ແລະເຫລັກນຶ່ງແສນຕະລັນ
8 ຜູ້ໃດທີ່ມີເພັດພອຍກໍຖວາຍໄວ້ທີ່ຄັງພຣະວິຫານຂອງພຣະເຈົ້າ ໃນຄວາມດູແລຂອງເຢຮີເອນຕະກູນເກີໂຊນ
9 ແລ້ວປະຊາຊົນກໍຍິນດີ ເພາະເຂົາຖວາຍສິ່ງເຫລົ່ານີ້ຕາມຄວາມສມັກໃຈຂອງເຂົາ ເພາະເຂົາຖວາຍດ້ວຍ
ຄວາມຈິງໃຈແດ່  ພຣະຜູ້ເປັນເຈົ້າ ດາວິດພຣະຣາຊາກໍຊົງຍິນດີເປັນຢ່າງຍິ່ງດ້ວຍ

**ດາວິດສັຣເສີນພຣະເຈົ້າ**

David’s Praise to God

10 ເພາະສະນັ້ນ ດາວິດຈຶ່ງສັຣເສີນພຣະຜູ້ເປັນເຈົ້າຕໍ່ຫນ້າຊຸມນຸມຊົນທັງປວງ ແລະດາວິດທູນວ່າ, “ຂ້າແດ່ພຣະຜູ້
ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນບັນພະບຸຣຸດຂອງຂ້າພຣະອົງທັງຫລາຍ ສາທຸການແດ່ພຣະອົງເປັນນິດແລະ
ເປັນນິດ
11 ຂ້າແດ່ພຣະຜູ້ເປັນເຈົ້າ ຄວາມຍິ່ງໃຫຍ່ ຣິດທານຸພາບ ພຣະຣັສມີຊັຍຊະນະ ແລະເຕັມປ່ຽມດ້ວຍສະງ່າຣາສີ
ເປັນຂອງພຣະອົງ ແລະບັນດາສິ່ງທີ່ມີຢູ່ໃນຟ້າສວັນ ແລະໃນແຜ່ນດິນໂລກເປັນຂອງພຣະອົງ ຂ້າແດ່ພຣະຜູ້
ເປັນເຈົ້າ ຣາຊອານາຈັກເປັນຂອງພຣະອົງ ແລະພຣະອົງຊົງເປັນທີ່ຍົກຍ້ອງເປັນຈອມຂອງສິ່ງສາຣະພັດ
12 ທັງຄວາມຮັ່ງມີແລະກຽດມາຈາກພຣະອົງ ແລະພຣະອົງຊົງຄອບຄອງຢູ່ເຫນືອທຸກສິ່ງ ຣິດທານຸພາບແລະມະ
ຫິດທິຣິດຢູ່ໃນພຣະຫັດຂອງພຣະອົງທີ່ຈະຊົງກະທໍາໃຫ້ຍິ່ງໃຫຍ່ແລະປະທານກໍາລັງແກ່ທັງມວນ
13 ບັດນີ້ຂ້າພຣະອົງທັງຫລາຍໂມທະນາຂອບພຣະຄຸນພຣະອົງເປັນພຣະເຈົ້າຂອງຂ້າພຣະອົງ ແລະສັຣເສີນພຣະ
ນາມອັນຮຸ່ງເຮືອງຂອງພຣະອົງ
14 “ແຕ່ຂ້າພຣະອົງເປັນຜູ້ໃດ ແລະຊົນຊາດຂອງຂ້າພຣະອົງເປັນຜູ້ໃດ ທີ່ຂ້າພຣະອົງທັງຫລາຍຈະສາມາດຖວາຍ
ແດ່ພຣະອົງດ້ວຍຄວາມເຕັມໃຈເຊັ່ນນີ້ ເພາະວ່າສິ່ງຂອງທຸກຢ່າງມາຈາກພຣະອົງ ຂ້າພຣະອົງທັງຫລາຍໄດ້
ຖວາຍຂອງທີ່ເປັນຂອງພຣະອົງແດ່ພຣະອົງເທົ່ານັ້ນ
15 ເພາະວ່າຂ້າພຣະອົງທັງຫລາຍເປັນຄົນຕ່າງດ້າວຕ່າງແດນຕໍ່ພຣະພັກພຣະອົງ ແລະເປັນຄົນອາສັຍຢູ່ຊົ່ວຄາວ
ດັ່ງທີ່ບັນພະບຸຣຸດຂອງຂ້າພຣະອົງໄດ້ເປັນຢ່າງນັ້ນມາແລ້ວ ວັນປີຂອງຂ້າພຣະອົງເທິງແຜ່ນດິນໂລກເປັນ
ເຫມືອນເງົາ ແລະບໍ່ມີອັນໃດຈີຣັງ

16 ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພຣະອົງທັງຫລາຍ ຂອງມາກມາຍເຫລົ່ານີ້ທັງຫມົດຊຶ່ງຂ້າພຣະອົງຈັດ
ຫາເພື່ອສ້າງພຣະວິຫານຖວາຍແດ່ພຣະອົງ ເພື່ອພຣະນາມບໍຣິສຸດຂອງພຣະອົງມາຈາກພຣະຫັດຂອງພຣະອົງ
ແລະເປັນຂອງພຣະອົງທັງສິ້ນ
17 ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂ້າພຣະອົງຊາບແນ່ວ່າ ພຣະອົງຊົງທົດລອງຈິດໃຈ ແລະຊົງພໍພຣະທັຍໃນ
ຄວາມທ່ຽງທັມ ສ່ວນຂ້າພຣະອົງ ຂ້າພຣະອົງໄດ້ຖວາຍທຸກສິ່ງເຫລົ່ານີ້ທັງສິ້ນ ດ້ວຍຄວາມເຕັມໃຈໃນຄວາມ
ທ່ຽງທັມແຫ່ງຈິດໃຈຂອງຂ້າພຣະອົງ ແລະບັດນີ້ຂ້າພຣະອົງຊື່ນໃຈທີ່ໄດ້ເຫັນໄພ່ພົນຂອງພຣະອົງ ຜູ້ຊຶ່ງຢູ່ໃນທີ່ນີ້
ໄດ້ເຕັມໃຈຖວາຍດ້ວຍຄວາມຊື່ນບານຕໍ່ພຣະອົງ
18 ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງອັບຣາຮາມ ອີຊາກ ແລະອິສຣາເອນບັນພະບຸຣຸດຂອງຂ້າພຣະອົງທັງ
ຫລາຍ ຂໍພຣະອົງຊົງຮັກສາຄວາມປະສົງແລະຄວາມຄິດໃນໃຈຂອງປະຊາກອນຂອງພຣະອົງໃຫ້ເປັນເຊັ່ນນີ້ສ
ເມີໄປ ແລະຂໍຊົງຕັ້ງຈິດໃຈຂອງເຂົາທັງຫລາຍໃຫ້ຫມັ້ນໃນພຣະອົງ
19 ຂໍພຣະອົງຊົງໂຜດໂຊໂລໂມນບຸດຂອງຂ້າພຣະອົງໃຫ້ມີຈິດໃຈຈິງທີ່ຈະຮັກສາບັນດາພຣະບັນຍັດຂອງພຣະອົງ
ພຣະໂອວາດຂອງພຣະອົງ ແລະກົດເກນຂອງພຣະອົງ ແລະໃຫ້ກະທຳທຸກຢ່າງເຫລົ່ານີ້ ແລະສ້າງພຣະວິຫານ
ຕາມຊຶ່ງຂ້າພຣະອົງໄດ້ກະຕຽມໄວ້ແລ້ວນັ້ນ”
20 ແລ້ວດາວິດສັ່ງກັບຊຸມນຸມຊົນທັງປວງວ່າ, “ຈົ່ງຖວາຍສາທຸການແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານທັງ
ຫລາຍ” ແລະຊຸມນຸມຊົນທັງປວງກໍສັຣເສີນພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງເຂົາທັງຫລາຍ ແລະ
ກົ້ມຫົວຂອງເຂົາທັງຫລາຍລົງແລະນະມັສການພຣະຜູ້ເປັນເຈົ້າ ແລະຖວາຍບັງຄົມແດ່ພຣະຣາຊາ
21 ແລະເຂົາທັງຫລາຍໄດ້ຖວາຍສັຕບູຊາແດ່ພຣະຜູ້ເປັນເຈົ້າ ແລະຖວາຍເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າໃນ
ວັນຮຸ່ງຂຶ້ນຕໍ່ຈາກວັນນັ້ນ ເປັນງົວເຖິກນຶ່ງພັນໂຕພ້ອມກັບເຄື່ອງດື່ມບູຊາທີ່ຄູ່ກັນ ແລະຖວາຍສັຕບູຊາຢ່າງຫລວງ
ຫລາຍເພື່ອອິສຣາເອນທັງປວງ
22 ແລະເຂົາທັງຫລາຍໄດ້ກິນໄດ້ດື່ມຕໍ່ພຣະພັກພຣະຜູ້ເປັນເຈົ້າໃນວັນນັ້ນດ້ວຍຄວາມຍິນດີຍິ່ງ

Solomon Anointed King

(1 ກສດ 1:38-40; 2:12)

ແລະເຂົາທັງຫລາຍໄດ້ຕັ້ງໂຊໂລໂມນໂອຣົດຂອງດາວິດເປັນພຣະຣາຊາເປັນເທື່ອທີສອງ ແລະເຂົາທັງຫລາຍ
ໄດ້ທົດສົງທ່ານໄວ້ໃຫ້ເປັນເຈົ້ານາຍເພື່ອພຣະຜູ້ເປັນເຈົ້າ ແລະຊາໂດກໃຫ້ເປັນປະໂຣຫິດ
23 ແລ້ວໂຊໂລໂມນຊົງປະທັບເທິງພຣະທີ່ນັ່ງຂອງພຣະຜູ້ເປັນເຈົ້າເປັນພຣະຣາຊາແທນດາວິດຣາຊບິດາຂອງພ
ຣະອົງ ແລະ ພຣະອົງຊົງຈະເຣີນຂຶ້ນ ແລະອິສຣາເອນທັງປວງກໍເຊື່ອຟັງພຣະອົງ
24 ບັນດາຜູ້ນຳທັງຫລາຍ ແລະພົນທະຫານທັງຫລາຍ ທັງບັນດາໂອຣົດຂອງກະສັດດາວິດໄດ້ສາບານຕົວຕໍ່ກະສັດ
ໂຊໂລໂມນ
25 ແລະພຣະຜູ້ເປັນເຈົ້າຊົງປະທານຊື່ສຽງທີ່ຍິ່ງໃຫຍ່ແກ່ໂຊໂລໂມນ ຕໍ່ຫນ້າຕໍ່ຕາຂອງອິສຣາເອນທັງປວງ ແລະຊົງ
ປະທານກຽດທີ່ຍິ່ງໃຫຍ່ຂອງພຣະຣາຊາແກ່ພຣະອົງ ຢ່າງທີ່ບໍ່ມີພຣະຣາຊາອົງໃດໃນອິສຣາເອນກ່ອນພຣະອົງ
ໄດ້ຮັບ

**ມໍຣະນະກັມຂອງດາວິດ**

Summary of David’s Reign

26 ຝ່າຍດາວິດບຸດເຈສຊີໄດ້ປົກຄອງເຫນືອອິສຣາເອນທັງປວງ
27 ເວລາທີ່ພຣະອົງຊົງປົກຄອງເຫນືອອິສຣາເອນນັ້ນເປັນສີ່ສິບປີ ພຣະອົງຊົງປົກຄອງໃນເຮໂບຣນເຈັດປີ ແລະໃນ
ເຢຣູຊາເລັມສາມສິບປີ

28 ແລ້ວພຣະອົງສິ້ນພຣະຊົນເມື່ອເຖົ້າຊະຣາຫລາຍແລ້ວ ທັງຊົງຮັ່ງມີແລະມີພຣະກຽດ ແລະໂຊໂລໂມນໂອຣົດ
ຂອງພຣະອົງປົກຄອງແທນພຣະອົງ

29 ສ່ວນພຣະຣາຊກິດຂອງກະສັດດາວິດ ຕັ້ງແຕ່ຕົ້ນຈົນທີ່ສຸດ ເບິ່ງແມ, ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານ
ຂອງຊາມູເອນຜູ້ທຳນວາຍ ແລະໃນຫນັງສືພົງສາວະດານຂອງນາທານຜູ້ປະກາດພຣະທັມ ແລະໃນຫນັງສືພົງ
ສາວະດານຂອງກາດຜູ້ທຳນວາຍ

30 ມີເຣື່ອງຣາວການປົກຄອງຂອງພຣະອົງທັງສິ້ນ ແລະຍຸດພະລັງຂອງພຣະອົງ ແລະເຣື່ອງລາວທີ່ບັງເກີດກັບພຣະ
ອົງ ແລະກັບອິສຣາເອນ ແລະບັນດາຣາຊອານາຈັກທັງສິ້ນຂອງປະເທດຕ່າງໆ